ຊຽງໝ້ຽງ

ເຫຼັ້ມ 2

ນິທານ ຄຳກອນ

ຊຽງໝ້ຽງ

ຣິບໂຣມ ຣຽບຣຽງໂດຍ: ພ. ພວງສະບາ

ພິມເທື່ອທີ່ໜຶ່ງ

ສຳນັກພິມ ແລະຈຳໜ່າຍປຶ້ມ ສ.ປ.ປ.ລ

ວຽງຈັນ 1989

ຜູ້ອະນຸມັດພິມ: ສີທາ ເພັງແພງເມືອງ

ຄະນະບັນນາທິການ: ສີວຽງແຂກ ກອນນີວົງ

ຄຳພໍ່ ພວງສະບາ

ອຸທິນ ບຸນຍາວົງ

ລທ: 033 /ກພຈ 9.5.1989

ລອພ: 043 /ກພຈ 11.5.1989

ພິມທີ່ໂຮງພິມແຫ່ງລັດ ຈຳນວນພິມ 10.000 ຫົວ

ພິມແລ້ວວັນທີ 30.5.1989

ສະຫງວນລິຂະສິດ

ຄຳນຳ

ສຳນັກພິມ ແລະ ຈຳຫນ່າຍປຶ້ມ ສ.ປ.ປ.ລາວ ຈັດພິມ ນິທານຊຽງຫມ້ຽງນີ້ ອອກເຜີຍແຜ່ເປັນຄັ້ງທຳອິດ ໂດຍມີຈຸດປະສົງຢາກປົກປັກຮັກສາ ວັນນະຄະດີພື້ນເມືອງ ອັນລ້ຳຄ່ານີ້ໄວ້ ແລະເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການ ຂອງທ່ານຜູ້ອ່ານທັງຫລາຍ ທີ່ຢາກອ່ານ ຢາກສຶກສາຄົ້ນຄວ້າວັນນະຄະດີເກົ່າແກ່ ອັນເປັນມູນມໍ ລະດົກຂອງບັນພະບຸລຸດ ທີ່ໄດ້ສ້າງສັນໄວ້ແຕ່ບູຮານນະການ.

ນິທານຊຽງຫມ້ຽງ ເປັນເລື່ອງຕະຫລົກສຽດສີ, ມີລັກສະນະ ຕໍ່ສູ້ຊົນຊັ້ນ ເຊິ່ງປະຊາຊົນລາວເລົ່າສືບຕໍ່ກັນມາແຕ່ສະໄຫມບູຮານ ຈົນເຖິງປະຈຸບັນນີ້, ເລົ່າກັນແຕ່ເຫນືອຈົນຮອດໃຕ້, ເລົ່າກັນໄດ້ທຸກກາລະໂອກາດ. ການເລົ່າໃຫ້ມ່ວນ ແລະ ເນື້ອໃນຂອງແຕ່ລະຕອນຈະຮັບໃຊ້ຜົນປະໂຫຍດອັນໃດນັ້ນ ແມ່ນຂຶ້ນກັບຜູ້ເລົ່າເປັນຕົ້ນຕໍ. ດັ່ງນີ້ ໃນການເລົ່ານັ້ນ ມີບາງຕອນຊຽງຫມ້ຽງ ກໍ່ເປັນຕົວລະຄອນ ທີ່ສະຫລາດສະຫລຽວ, ມີໄຫວພິບ, ບາງຕອນກໍ່ເປັນຄົນໂງ່ທີ່ເຮັດ ແນວທີ່ບໍ່ສົມຄວນເຮັດ.

ໄລຍະຜ່ານມາ ເຄີຍມີຮິບໂຮມນິທານຊຽງຫມ້ຽງ ແລະພິມເຜີຍແຜ່ເປັນຄຳກອນ ມາແລ້ວປະມານສາມຄົນດ້ວຍກັນ. ການຮິບ ໂຮມເປັນເຫລັ້ມຄັ້ງນີ້ ສຳນັກພິມພວກເຮົາໄດ້ຄົ້ນຄວ້າຕາມເອກະ ສານເກົ່າແລະຕາມການເລົ່າປາກເປົ່າຈາກຫລາຍແຫລ່ງດ້ວຍກັນ.ພິເສດກໍ່ຄືພວກເຮົາໄດ້ຮັບກຽດຈາກທ່ານພູມີ ວົງວິຈິດ ໂດຍທ່ານໄດ້ ຊ່ວຍປັບປຸງວິທີຂຽນຄຳກອນແລະເພີ່ມເຕີມໃຫ້ສົມບູນຍິ່ງຂຶ້ນ. ດັ່ງນີ້ຈຶ່ງຖື

ໄດ້ອ່ານນິທານຊຽງໝ້ຽງ ສະບັບນີ້ເປັນສະບັບທີ່ມີເນື້ອໃນຮັບ ປະກັນ ແລະ ເປັນຄຳກອນທີ່ມີຄູນນະພາບສູງ. ພວກເຮົາຂໍສະແດງ ຄວາມ ຂອບໃຈເປັນຢ່າງສູງຕໍ່ທ່ານ ພູມີ ວົງວິຈິດ ໄວ້ໃນໂອກາດນີ້ດ້ວຍ.

ສຳນັກພິມພວກເຮົາ ໄດ້ມອບໝາຍໃຫ້ ພ.ພວງສະບາ ເປັນຜູ້ ດຳເນີນການຮິບໂຮມ ເລືອກເຟັ້ນ ແລະ ຮຽບຮຽງຈົນສຳເລັດເປັນ ເຫລັ້ມອອກມາ ໂດຍໄດ້ຈັດແບ່ງອອກເປັນ 26 ຕອນ, ໄດ້ແຍກບຸບ ພະບົດ ແລະ ບົດສ້ອຍທ້າຍຂອງຄຳກອນໃຫ້ ເປັນລະບຽບ,ພ້ອມທັງ ໄດ້ແກ້ໄຂບາງຄຳສັບ, ບາງສຳນວນໃຫ້ເໝາະສົມ ແລະ ເຂົ້າໃຈ ງ່າຍ. ດັ່ງນີ້ຈຶ່ງເຊື່ອວ່າ ນິທານຄຳກອນເຫລັ້ມນີ້ ຈະເປັນປະໂຫຍດ ແລະ ນຳຄວາມມ່ວນຊື່ນມາສູ່ທ່ານຜູ້ອ່ານຢ່າງແນ່ນອນ.

ພວກເຮົາຫວັງຢ່າງຍິ່ງວ່າ ຈະໄດ້ຮັບຄວາມຮ່ວມມືຈາກ ທ່ານຜູ້ ອ່ານເປັນຢ່າງດີ ໂດຍເກັບກຳ ແລະ ສົ່ງເລື່ອງຊຽງໝ້ຽງ ທີ່ເລົ່າ ກັນຢູ່ຕາມທ້ອງຖິ່ນຕ່າງໆ ໄປປະກອບສ່ວນ ເພື່ອເຮັດໃຫ້ການພິມ ຄັ້ງ ຕໍ່ໄປສົມບູນຍິ່ງຂຶ້ນ.

ວັນທີ ------- 1989

ສຳນັກພິມ ແລະ ຈຳໜ່າຍປຶ້ມ ສ.ປ.ປ.ລ

ຜູ້ຮິບໂຮມ

ຫນັງສືນິທານຄຳກອນຊຽງຫມ້ຽງນີ້ ນັບວ່າເປັນນິທານພື້ນເມືອງ ທີ່ຄົນລາວເຮົານິຍົມຊົມຊອບຫລາຍທີ່ສຸດ, ສາມາດເວົ້າໄດ້ວ່ານິທານ ຊຽງຫມ້ຽງນີ້ ຄົນລາວທຸກຄົນຮູ້ເກືອບຫມົດ ແຕ່ວ່າຮູ້ກັນຄົນລະວັກລະ ຕອນ. ທັງນີ້ ຍ້ອນວ່ານິທານຊຽງຫມ້ຽງນັ້ນມີຫລາຍວັກຫລາຍ ຕອນ ແລ້ວແຕ່ໃຜຈະຈື່ຈຳໄດ້ຂອງໃຜຂອງມັນ ແລະ ກໍ່ເປັນນິທານ ທີ່ຄົນ ລາວເຮົາຈື່ຈຳໄດ້ງ່າຍ ເພາະມັນມີເນື້ອໃນແບບແກ້ເຜັດແກ້ຮ້ອນກັນ ແລະ ທັງເບົາສະຫມອງ ຮຽກສຽງຫົວເຮຮາ ແລະ ຮອຍຍິ້ມຈາກ ຜູ້ຟັງໄດ້ທຸກເວລາ, ຢູ່ໃນວົງສົນທະນາຕ່າງໆ ຖ້າຜູ້ໃດໃຊ້ເລ່ ລ່ຽມ ພິບໄຫວ ຫລືເວົ້າແບບຕັດບົດຫມູ່ໄດ້ດີ ພວກເຮົາມັກຈະເວົ້າກັນວ່າ" ຢ່າໃຊ້ແບບວິທີຊຽງຫມ້ຽງແມ " ອັນນີ້ກໍ່ຫມາຍຄວາມວ່າພິບໄຫວສະ ຕິປັນຍາຂອງຊຽງຫມ້ຽງ ບໍ່ມີເວລາໃດຫລ້າສະໄຫມໄປຈາກວົງ ສົນ ທະນາຂອງມະຫາຊົນຄົນລາວເຮົາ.

ນິທານຊຽງຫມ້ຽງ ນອກຈາກໃຫ້ຄວາມເບີກບານຫລືແກ້ເຜັດແກ້ ຮ້ອນດັ່ງກ່າວແລ້ວ ນິທານຊຽງຫມ້ຽງຍັງໄດ້ສະແດງໃຫ້ເຫັນເຖິງຮູບ ການຕໍ່ສູ້ຊົນຊັ້ນທາງດ້ານແນວຄິດຢ່າງຈະແຈ້ງ, ຄືລະຫວ່າງ ຊຽງ ຫມ້ຽງກັບພະຍາ ຕະຫລອດທັງທ້ອງເລື່ອງເຮົາຈະຮູ້ໄດ້ວ່າ ເວລາ ໃດຊຽງຫມ້ຽງກໍ່ເອົາຊະນະພະຍາຈົນໄດ້.

ການຮິບໂຮມນິທານຄຳກອນຊຽງຫມ້ຽງເທື່ອນີ້ ຂ້າພະເຈົ້າ ໄດ້ ແກ້ໄຂຫລາຍບ່ອນເຊັ່ນ ຈັດແບ່ງອອກເປັນຕອນ ແຕ່ຕອນທີ 1 ເຖິງ ຕອນທີ 26 ເພື່ອສະດວກແກ່ຜູ້ອ່ານ, ຂ້າພະເຈົ້າໄດ້ປະເປັນ ບາງ ຕອນທີ່ເຫັນວ່າມັນບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງສັງ ຄົມ,

ພ້ອມກັນນີ້ ຂ້າພະເຈົ້າກໍໄດ້ ຈັດແຍກບຸບພະບົດ ແລະສ້ອຍທ້າຍຂອງຄຳກອນໃຫ້ເປັນລະບຽບ ຕະຫລອດເຖິງເນື້ອຄວາມບາງ ຄຳທີ່ເຫັນວ່າ ບໍ່ຄັກບໍ່ແນ່ກໍໄດ້ດັດແປງແກ້ໄຂ, ນອກຈາກນີ້ ຂ້າພະ ເຈົ້າຍັງໄດ້ແຕ່ງເພີ່ມເປັນບາງຕອນ ເຊິ່ງບໍ່ມີໃນຕົ້ນສະບັບເດີມເຊັ່ນຕອນ " ຊຽງໝ້ຽງຕົວະພະຍາລົງໜອງ".

ແຕ່ເພື່ອຄວາມແນ່ໃຈອີກເທື່ອໜຶ່ງ ຄະນະບັນນາທິການໃຫຍ່ໄດ້ນຳສະເໜີຜ່ານທ່ານ ພູມີ ວົງວິຈິດ ຕື່ມອີກ. ແນວໃດກໍຕາມ ການຮິບໂຮມເທື່ອນີ້ ຂ້າພະເຈົ້າຂໍຮັບວ່າ ຍັງມີຢູ່ອີກຫລາຍໆຕອນ ທີ່ຍັງບໍ່ທັນໄດ້ຮິບໂຮມມາພິມ ຍ້ອນນິທານຊຽງໝ້ຽງມັນກວ້າງຂວາງ ດັ່ງກ່າວແລ້ວນັ້ນ; ການຮິບໂຮມເທື່ອນີ້ ຈຶ່ງບໍ່ແມ່ນສະບັບສົມບູນແຕ່ຢ່າງໃດ ເປັນແຕ່ພຽງສ່ວນໜຶ່ງນ້ອຍໆເທົ່ານັ້ນ. ການຮິບໂຮມຂອງ ຂ້າພະເຈົ້າເທື່ອນີ້ ຂໍຮັບຮອງວ່າ ຍັງມີຫລາຍອັນຂາດຕົກບົກພ່ອງ ແຕ່ຫວັງວ່າຈະໄດ້ຮັບອະໄພຈາກທ່ານຜູ້ອ່ານ ແລະ ຫວັງວ່າທ່ານຜູ້ອ່ານທີ່ຮູ້ຕອນອື່ນຈະກະລຸນາຈົດເອົາຕອນອື່ນທີ່ພວກທ່ານຮູ້ ແຕ່ບໍ່ມີຢູ່ໃນປຶ້ມຫົວນີ້ ສົ່ງໄປຊ່ວຍຂ້າພະເຈົ້າຈັດຮຽບຮຽງພິມເປັນປຶ້ມຫລົ້ມໃໝ່ .

ວຽງຈັນ, ວັນທີ 18 ມັງກອນ 1987

ດ້ວຍຄວາມຮັກແພງ

ພ. ພວງສະບາ.

18– ຄໍາພີລັງໂຈດແກ້ບັນຫາ

+ ບັດນີ້ຈັກກ່າວເຖິງ ລາຊາທ້າວ ນະຄອນລາດຕານີ ກ່ອນແລ້ວ

ເຈົ້າກໍ່ຍັງ ຣົມຄຶດ ຄຽດບໍ່ລາລືມໄດ້

ເພື່ອວ່າ ເສັຍຂອງຄ້າ ສິນພັນຄາວກ່ອນ ວັນນັ້ນ

ຍັງຈັກ ປຸນແຕ່ງແກ້ ທະວະດີທ້າວຕອບມື ວ່າດາຍ

+ ຊາດທີ່ເຊີງຜະຫຍານີ້ ບໍ່ຫຽມເທົ່າເມືອງທະວາດີ ນັ້ນລື

ຊາດທີ່ແນວຄົນເຮົາ ຄືດັ່ງກັນທັງຄ້າຍ

ໃຜຊິລືຊາກາ ເປັນມາແຕ່ເມື່ອເກີດ ບໍ່ມີແລ້ວ

ເຮົາກໍ່ບໍ່ ໄດ້ຮຽນແຕ່ຟ້າ ສະເຫມີດ້ານດັ່ງເຮົາ ນີ້ແລ້ວ

+ ຍັງຈັກໃຫ້ເຂົາໄປ ພະນັນເບິ່ງຊ້ຳ ເມືອງຊື່ທະວາດີ ກ່ອນແລ້ວ

ກູຈັກລອງລົງມື ອາຄາດມັນຈົນໄດ້

ຊາດທີ່ ຄົນກິນເຂົ້າ ຄືກັນບໍ່ມີຢ່ອນ ໃຜແລ້ວ

ເອົາໃຫ້ ຕົກສະເພີ້ ທູນນ້ອມສ່ວຍສິນ ແທ້ດາຍ

+ ຄ້ອນວ່າ ເຈົ້າກ່າວແລ້ວ ທັນຫມູ່ມະຫາສົງ

ເອົາລົງໂຮມ ສະຫນາມຫລວງ ຊູຕົ້ນພຽງພ້ອມ

ຄ້ອນວ່າ ມະຫາເຖນເຈົ້າ ມາໂຮມຫມົດຫມູ່

ແຕ່ນັ້ນ ພະບາດເຈົ້າ ຖາມພ້ຽນຊູຕົ້ນ

+ ໃຜຜູ້ຍັງຮ່ຳຮູ້ ອັກຂະລະແຫ່ງວິໄນ ນັ້ນເດ

ກັບທັງ ປາລະຊິກ ຫມູ່ຄຳພີທັງຫ້າ

ກັບທັງ ສົມມະນາພ້ອມ ປາລິແປອອກ

ກັບທັງ ຈຸນລະວັກ ແລະ ອະພິທຳຫມູ່ນັ້ນ ແປໃຊ້ຊູ້ອັນ ແດລື

\+ ແຕນັ້ນ ມະຫາສິງກ່າວຕ້ານ   ຂານຕອບລາຊາ

ຮັບພາກ ວາຈາຂານ   ຕໍ່ພະອົງເປັນເຈົ້າ

ຊາດທີ່ເຊີງໜັງສືນີ້   ຄູບາຫາກສອນສັ່ງ ມາດາຍ

ອັນແຕ່ ຂອງໝູ່ນີ້   ກໍພໍຫລິ້ນຕໍ່ຄົນ ພະເອີຍ

\+ ຢຽວວ່າ ເພິ່ນຫາກຮຽນຈາກຫ້ອງ   ສະຫວັນລ່ວງລົງຖາມ

ເຮົາຈິ່ງ ຊິຄາຄຳຖາມ   ຄອບບໍ່ມີຄວາມຮູ້

ແຕນັ້ນ ລາຊາເຈົ້າ   ພະຍາຫລວງຊົມຊື່ນ

ຄອບທີ່ ສຳມະນະເຈົ້າ   ຮຽນຮູ້ຊູ່ເຊີງ ຫັ້ນແລ້ວ

\+ ຕັ້ງຫາກ ຈົບເພດພຽງ   ລຳຍິ່ງແສນຖະໜັດ

ມາກແລ້ວ

ອັນວ່າ ສິງຄະເມືອງຕານີ   ກໍບໍ່ລອນຊິກົວຢ້ານ

ຕັ້ງບໍ່ ເສຍແຮງລ້ຽງ   ໂພຊະນາເຊົ້າຄ່ຳ ຈິງນໍ

ຢຽວວ່າ ຮູ້ແຕ່ໄປອ່ານຫລິ້ນ   ໂຄງຟ້າມ່າຍສາວ ນັ້ນດາຍ

\+ ບັດນີ້ ເຮົາຈັກປົງອາດໃຫ້   ສິງຄະລາດທັງປວງ

ເຈົ້າຈຶ່ງ ພາກັນໄປດູ ໜັງສື   ໂຈດໃນເມືອງພຸ້ນ

ຊື່ວ່າ ທະວາດີ້ຫາວ   ສະເຫວີຍເມືອງເປັນໃຫ່ຍ ຈິງແລ້ວ

ເຈົ້າຈຶ່ງ ພາກັນໄປໂຈດສິງຄະເຈົ້າ   ເມືອງນັ້ນຕໍ່ກັນ ແທ້ເນີ

\+ ຄັນວ່າເຮົາຫາກແພ້   ເຂົາມອບເວນເມືອງ ແທ້ເນີ

ໃຫ້ຮີບໄປ ພັນກັນ   ຢ່າກົວເກັງຢ້ານ

ຄັນວ່າ ເພິ່ນຫາກມີໄຊແພ້   ສິນພັນໃຫ້ມວນມອບ

ອັນວ່າ ຂອງຄ່າລ້ານ   ຍໍໃຫ້ຢ່າກົວ

\+ ເຮົາຈັກ ປຸນແຕ່ງໃຫ້   ຄົນນັບໝື່ນໄປນຳ

ເອົາໄປ ເປັນກຳລັງ　　ຊ່ວຍແຮງຍາມຮອນ

ມີທັງ ອາຈານຜູ້　　ເປິກສາແສນສ່ຳ

ທັງສະເພົາ ຫ້າຮ້ອຍ　　ໄປພ້ອມຊູ່ລຳ

+ ອັນວ່າ ເງິນຄຳແລະເຄື່ອງແກ້ວ ຂົນໃສ່ໃຫ້ມັນຫລາຍ

ເອົາຈົນເຕັມ ສະເພົາ　　ແລ້ວຈຶ່ງເດີນຈອນດົ້ນ

ຄັນວ່າ ບໍ່ເປັນຕາແພ້　　ຍໍເຍີງມອນມອບ ຈິງເຫັ້ນ

ໃຫ້ມັນ ຫມົດຊູ່ຫລົ້ມ　　ສະເພົາແລ້ວຈຶ່ງມາ ພະເອີຍ

+ ແຕ່ນັ້ນ ພະບາດເຈົ້າ　　ສອນສັ່ງທັງປວງ

ເຂົາກໍ່ ວາຈາຂານ　　ວ່າໂດຍພະຍຯເຈົ້າ

ເຮົາກໍ່ ໄປເມືອງພຸ້ນ　　ທະວາດີຖາມໂຈດ ດູແລ້ວ

ຕາມດັ່ງ ຄວາມມະຫາລາດເຈົ້າ　　ປົງໃຫ້ຊູ່ອັນ ນັ້ນແລ້ວ

+ ອັນຄອງພະສົງເຫລົ່ານີ້　　ໄດ້ຮຽນຮ່ຳຄືກັນ ແທ້ແລ້ວ

ໃຜຫ່ອນຮຽນຕັດສະລຸ　　ດັ່ງອົງພຸດໂທເຈົ້າ

ແຕ່ນັ້ນ ເລີຍເລົ່າຂົບປົງມ້ຽນ　　ຄຳສຸຊຸມແລ້ວເລີກ

ໃຜກໍ່ ເມືອສູ້ຫອງ　　ເຮືອນຢ້າວແຫ່ງຕົນ ນັ້ນແລ້ວ

+ ແຕ່ນັ້ນ ພະບາດເຈົ້າ　　ໂອວາດປົງຄວາມ ຫັ້ນແລ້ວ

ສູຣິບ ຕົກແຕ່ງແປງສະເພົາ　　ທຸກລຳກຽມພ້ອມ

ເມື່ອນັ້ນ ສິບໆເຂົ້າ　　ດາກັນທຸກສິ່ງ

ສະເພົາ ຫ້າຮ້ອຍ　　ປຸນຫ້າງແຕ່ງແປງ

+ ສິບພະສົງພ້ອມ　　ທຸກເບື້ອງບັນນາການ

ເງິນຄຳທັງ　　ເທບແພລຳກວ້າງ

ອັນວ່າ ຂອງຄາມລົ້ນ　　ໃນເຍຍຂົນອອກ

ແລ້ວເລົາ ຂົນໃສ່ເຂົ້າ　　　　　ສະເພົາກວ້າງຊູ່ລຳ
　　+ ແຕ່ນັ້ນ ສົມມະນະເຈົ້າ　　ອອກຈາກອາຣາມ
ເລີຍເລົາໄປ ເຖິງສະເພົາ　　　ຄ່ອຍເນົາໃນຫ້ອງ
ພໍ່ດູ ນັກຂັດຕະລຶກຟ້າ　　　　ເມໂຄສູນເມກ ພຸ້ນເຢີ
ດາວອັງຄານ ລ່ວງດັ້ນ　　　　　ດາວດັ້ງປີ້ນຮຽງ
　　+ ດາວເສົາ ວຽນວົງເຂົ້າ　　ສະຖິດຢູ່ນຳກັນ
ດາວພຸດ ຕາມຮອຍມາ　　　　　ຮອດພະຈັນຈອນດັ້ນ
ອາທິດ ຍົນໆຍ້າຍ　　　　　　ສະເດັດໄປກວມເມກ
ດາວພະຫັດ ໄປພ່ຳພ້ອມ　　　　ຕົນເຈົ້າບໍ່ວາງ
　　+ ອັນວ່າ ສຸກເສົາ ຄະເຄື່ອນຍ້າຍ　　ໄປສູ່ລາສີ
ຝູງໝູ່ ດາວອາສາພັນ　　　　　ເພີ້ມນຳຖວາຍແກ້ວ
ອັນວ່າ ກຸມຊະໂລຍ້າຍ　　　　ຍໍຫົວຫາງແລ່ນ
ຝູງໝູ່ ດາວຄາບແກ້ວ　　　　ເນົາເວີ້ອນເປີ່ງແສງ
　　+ ເມື່ອນັ້ນ ດາວໄກນ້ອຍ　　ແຝງແລ່ນມາໂຮມ
ດາວຄ່າງ ເດີນຈອນຕິດ　　　　ຕໍ່ກັນຍວງຍ້າຍ
ເປັນເລື່ອງ ພາຄືນເວົ້າ　　　　ນຳມາເປັນເລື່ອງ
ດາວສະເພົາ ຍາບເຫລື້ອມ　　　ລັງສີແຈ້ງສ່ອງໃສ
　　+ ມີທັງ ດາວດອກໄມ້　　　ລຽນກ່ອງບານງາມ
ດາວພິດານ ພາຍບົນ　　　　　ອາດຕາມາກັ້ງ
ເປັນລຶກເກນ ດີແທ້　　　　　ດວງດາວແຈ້ງສ່ອງ
ຊ້າງອ້າຍກ່ຳ ເນົາຢູ່ຫ້ອງ　　ວັນນັ້ນກໍ່ຍ່ອມຂວາງ ເຈົ້າເອີຍ
　　+ ໝໍ່ກໍ່ຈົງ ແຕ່ງເຄື່ອງພ້ອມ　ນວນມອບພະລຶກຳ

ເຮົາຈັກເອົາບູຊາ ເຊີ້ງເຂົາ ໜີຈາກເຮົາປາງນັ້ນ
ເພິ່ນກໍ່ຫາກ ລືຊາແທ້ ປາງປະຖົມເຖົ້າເກົ່າ ຈິງແລ້ວ
ຕັ້ງວ່າ ຈົບເພດພຽງ ນິນແກ້ວສາດຕະສິນ ເຈົ້າເອີຍ
+ ແຕ່ນັ້ນ ເລື່ອນໆຍ້າຍ ສະເພົາເບີກຕາມລົມ ພຸ້ນເຍີ
ດິແກ່ ແຊວງສຽງ ໂຫ່ໂຮຄືນຮ້ອງ
ຕັ້ງຫາກ ເນືອງນັນເຫົ້າ ປັດຖະວີໄຫວຫວັ່ນ
ສຽງລະຄັງ ປະສົມໃສ່ຄ້ອງ ດັງກ້ອງມ່ວນລະວົມ
+ ຫອຍສັງ ທັງປີ່ແຕ້ ພິນພາດສອນໄລ
ແຫ່ນແຫ່ທັງປວງສິງ ພ່ຳມວນຍອງຍ້າຍ
ອັນວ່າ ຝູງໝູ່ຄົນສະຫລາດຮູ້ ແຟຫຳຣະນິງອ່ານ
ກັບທັງ ອັດສຳໂມໝູ່ວິໄນພ່ຳພ້ອມ ເດີນດັ້ນຮ່ວມກັນ
+ ແຕ່ນັ້ນ ເລື່ອນໆເປື້ອງ ສະເພົາເບີກຕາມລົມ ພຸ້ນເຍີ
ພໍ່ດູ ລົມຕີພັດ ຟາດຟອງເຟືອນຟົ້ງ
ຫລິງເຫັນ ສວຍລວຍໄມ້ ລຽນລຳລຽບລ່ຳ
ອັນວ່າ ຕົ້ນກ່າຍຕົ້ນ ສູງລ້ຳຊູ່ລຳ
+ ພໍ່ດູ ອະນັນອະເນກໄມ້ ແສນສ່ຳສັກຂີ ພຸ້ນເຍີ
ໃນດົງຫລວງ ລຽບນຳແຄມນ້ຳ
ບໍ່ອາດ ສັງຂະຫຍາໄດ້ ດູຕະການຫລາຍສິ່ງ
ຝູງໝູ່ ປາອອກບ້ອນ ແຄມນ້ຳຝັ່ງເຟືອນ
+ ພໍ່ດູ ດອກເຜີ້ງເຂື້ອງ ບານຈໍ່ຈູມຈີ ກໍ່ມີ
ຕັ້ງຫາກ ມີນວນຫລາຍ ຊູ່ລຳເຕັມຕົ້ນ
ຝູງໝູ່ ອະມະລິນແສ້ວ ຣຊີຍຊົມເອົາກິ່ນ

ດີແຕ່ ຫອມດອກໄມ້ ຍາມເຊົ້າເມື່ອເຢັນ
+ ພໍ່ດູ ທຸກສ່ຳໄມ້ ຊ້ອງຊໍ່ແຄມຊິນ ພຸ້ນເຢີ
ດີແຕ່ ດອນລຽນດອນ ຫມື່ນພູພະນັງຂັ້ນ
ແຕັ້ນນ ຝູງບ່າວສາວ ຮາມນ້ອຍ ພາກັນກັ້ນໂສກ
ຕົກຫນີ ໄກຈາກບ້ານ ຄະນິງຊູ້ຜູ້ຢູ່ເຮືອນ
+ ໂອນໍ ຄຶດເມື່ອຫອມກິ່ນແກ້ວ ຍາມຮ່ວມຮຽງສະເໜ ນັ້ນເດ
ຮຽມກໍ່ ມາໄກອວນ ຊິອ່າວເຖິງແຖມເລື້ອຍ
ອັນວ່າ ແພງແສນສ້ອຍ ສຸດຊາດາດວງຍອດ ອີ່ຮຽມເອີຍ
ຕິແຕ່ ກົ້ນເຈົ້າແວັນ ແຍງເລື້ອຍເບິ່ງແຕ່ໂຕ ອີ່ພີ່ນາ
+ ໂອນໍ ມາອີ່ດູສຸດຊາດານາດນ້ອຍ ຜິວພ່ອງງາມຕາ ນັ້ນເດ
ທໍ່ວ່າ ຕົວຮຽມຫນີ ຫ່າງໄປໄກແລ້ວ
ໂອນໍ ມາອີ່ດູອົ້ນດານ້ອຍ ຜິວງາມເນື້ອຊຸ່ມ ອີ່ຮຽມເອີຍ
ຄອຍໃສ່ເກີບ ຕີນແຍ່ງແຍ້ ຄອຍຖ້າພີ່ຕ່າວມາ ແດ່ເນີ
+ ໂອນໍ ມາອີ່ດູພິມພານາດນ້ອຍ ເນື້ອອຸ່ນສາຍສະຫມອນ
ທໍ່ວ່າ ຫູຫອີ້ນ ກັບຫັງສິບ ແວ່ງພໍດູ້ຮາຍ
ໂອນໍ ມາອີ່ດູ ຄຳມານ້ອຍ ສາຍໃຈຊູ້ພີ່ ອີ່ຮຽມເອີຍ
ທໍ່ວ່າ ຕິແຕ່ດັ້ງອິກເຈົ້າ ສະດວງດັ້ນບຸ່ນກິນ ອີ່ພີ່ນາ
+ ໂອນໍ ມາອີ່ດູບົວທອງນ້ອຍ ຊູ້ມິ່ງສາຍສະຫມອນ ກູເດ
ທໍ່ວ່າ ຕິແຕ່ແຂນເຈົ້າຫາກ ງົງເງາະ ແກວ່ງໄກວທາງກົ້ນ ແລນໍ
ໂອນໍ ຂໍໃຫ້ ລົມພັດຍູ້ ສະເພົາຄືນບ້ານເກົາ
ທ່ຽວເຫັ້ນ
ເພື່ອວ່າ ຮຽມຄະນິງນາດນ້ອງ ປານນີ້ກໍ່ບໍ່ລືມ

+ ນັບແຕ່ມາຫ່າງໄກຈາກບ້ານ ເປັນຊົ່ວຫລາຍວັນ ຈິງແລວ

ທໍ່ວ່າ ຍັງຊິມີວັນກັບ   ຕ່າວເມືອເມືອງບ້ານ

ອັນວ່າ ເມືອງທະວາດີທ້າວ   ຢູ່ທາງໃດບໍ່ຮູ້ແຫ່ງ ເສຍແລວ

ເປັນດັ່ງ ເຮົາຫລັບຕາງວາກງ້ວາງ   ໃນມຸ້ງມືດມິນ ແທ້ແລວ

+ ແຕ່ນັ້ນ ຝູງຫມູ່ ເຄີຍທ່ຽວຄ້າ ຖະແຫລງຕອບວາຈາ

ຜິວ່າ ລົມຫາກມາແຮງໆ   ຊິຮອດໃນວັນຫນ້າ

ແຕ່ນັ້ນ ສະເພົາເລີຍພາຍເຂົ້າ   ແດນເມືອງທະວາດີເຮືອຮີບ

ບ້ານສືບບ້ານ   ເປັນຖ້ານຖີ່ຖັ້ນ ແທ້ດາຍ

+ ຫລິງເຫັນ ຕານແລະພ້າວ   ໂດຍລະດາດໄກຕາ ພຸ້ນເຢີ

ຈັ່ງແມ່ນ ເປັນທິວທັດ   ສະຫງ່າງາມຈິງແທ້

ທ່າສະເພົາ ເມືອງນີ້   ງາມດີມີລະບຽບ

ອັນວ່າ ສະເພົາຫ້າຮ້ອຍ   ກໍ່ເຂົ້າຢັ້ງທ່າເມືອງ ຫັ້ນແລວ

+ ແຕ່ນັ້ນ ສວາງພ້ອມ   ທວາຍເທດຕານີ

ເຂົາກໍ່ ເອົາກັນມາ   ເບິ່ງຄອຍສະເພົາຄ້າ

ອັນວ່າ ຝູງຫມູ່ສາວຮາມເອີ້ນ   ຈາດອນສ້ວຍສຽດ

ອັນວ່າ ບ່າວຕ່າງບ້ານ   ກໍ່ງາມລົ້ນເກືງອິນ ແທ້ນໍ

+ ຜິວ່າ ເປັນໂສດແທ້   ຢາກຂໍຈູບເຊີຍຊົມ ເບິ່ງເດ

ຕາງໃຕ້ ມີແນວຄົນ   ຕ່າງເມືອງມາລ້ຽງ

ແຕ່ນັ້ນ ຝູງຫມູ່ຊາຍຮາມນ້ອຍ   ຊາວຕານີເອີ້ນຢອກ

ເຂົາກໍ່ ປາກສຽງຫວານຈ້ອຍໆ   ຈ້າຕານຕອບສາວ

+ ໂອນໍ ຊາດທີ່ສົມບັດເພື່ອນນີ້ ທະລອນປາກຈານຈໍາ ແລນໍ

ເຊີນນ້ອງ ມາສະເພົາ   ຮ່ວມເຮືອນຮຽງອ້າຍ

ອ້າຍນີ້ ຕັ້ງວ່າບໍ່ມີເມຍຊອນ   ຈຶ່ງເດີນທາງມາເຖິງອຸ່ນ
ພີ່ແລ້ວ

ທໍ່ວ່າ ຢ່າໄດ້ເຫັນທີ່ຮ້າຍ   ຕາມີກ້ຳຝ່າຍຮຽມ ແດ່ເນີ

+ ພິວ່າ ນ້ອງຫາກບໍລິສຸດທ່ຽງແທ້   ຊິຂໍຢູ່ເຊີຍຊົມ ພະອວນເອີຍ

ຄັນວ່າ ແດດຫາກບໍ່ມາກອນສວາຍ   ຊິຢູ່ໂຮມຮຽງນ້ອງ

ອັນວ່າ ຄືນສາມຮ້ອຍ   ຊິຍອມບິນຢ້ານໂພດ   ພະອວນເອີຍ

ອັນໃຫ້ ເຖິງຖິບແທ້   ພັນພຸ້ນກໍ່ຈຶ່ງສົມ ອຸ່ນເອີຍ

+ ທໍ່ວ່າ ພິວແຈ່ມເຈົ້າ   ກໍ່ຍັງຢູ່ນຳກັນ ພີ່ບໍ

ຢ້ານທໍ່ ພິວນາງເຫັນ   ຊິໄລ່ຕີກຳຄ້ອນ

ແຕ່ນັ້ນ ສວາງພ້ອມ   ສາວຮາມຫົວອະເທີ່ຍ

ສັງເລົ່າມາ ຊ່າງເວົ້າ   ຄວາມໂອ້ອື່ງສະຫາວ ນີ້ເດ

+ ພິວ່າ ຊາຍຫາກຈິ່ງດັ່ງເວົ້າ   ໃຫ້ອ້າຍຖອດດວງໃຈ ເບິ່ງແມ

ຂໍຈຶ່ງ ເມືອນຳນາງ   ຮີບໄວດຽວນີ້

ຢ້ານເປັນ ດັ່ງປາລອຍນ້ຳ   ກົວເກັງຢ້ານແຕ່ຝັ່ງ

ປານນັ້ນ ເຫລືອແຕ່ເວົ້າ   ບໍ່ເອົາໄດ້ບ່ອນໃດ

+ ແຕ່ນັ້ນ ຊາວສະເພົາພໍ່ຄ້າ   ຕາມີແຕ່ງແປງດີ

ໃຫ້ໝູ່ ເນນທັງສິງ   ຂຶ້ນສູ່ອາຮາມກ້ວາງ

ບັດນີ້ ລາຊາເຈົ້າ   ຕາມີໃຊ້ຮອດ ຈົງແລ້ວ

ເພື່ອວ່າ ຢາກຖາມຂ່າວເຈົ້າ   ສະຫາຍແກ້ວທ່ານພະຍາ   ວ່າດາຍ

+ ຄັນວ່າ ພະຫາກຮັກຮັດແທ້   ໃຫ້ຊີ້ບອກຄວາມຈິງ ທ່ຽງຫ້ອນ

ເວົ້າໃຫ້ ເຮົາພໍເຫັນ   ຊົ່ວດີ ຫລືຮ້າຍ

ແຕ່ນັ້ນ ເຂົາກໍ່ຈົ່ງນຳຄຳຂຶ້ນ   ເມືອເຖິງຫູນບາດ

ກົມຂາບໄຫວ້ ທູນນີ້ວກ່າວຈາ
+ ບັດນີ້ ຊາວພື້ນອງ ກາ້ຝ່າຍຕານີ ພາຍພຸ້ນ
ພະຫາກ ຕົກແຕ່ງຊຸມຊາວສິງ ມາຮອດເຮົາພາຍພີ້
ວ່າຈັກລົມ ເຖິງພົ້ນ ພຸດທະຄຸນເປັນເລື່ອງ
ຫັງວິໄນ ຖີ້ຖອນ ໃຫ້ເຫັນແຈ້ງຊູ້ອັ້ນ
+ ເມື່ອນັ້ນ ພະບາດທ້າວ ຊົມຊື່ນຍິນດີ
ຈຶ່ງບອກຊາວເສນາ ແຕ່ງແປງການຕ້ອນ
ເຖິງເມື່ອ ວັນລຸນເຊົ້າ ພິງາຍແດດແກ່
ທ່ານ. ຈຶ່ງພາແຂກເຈົ້າລຸ່ມຟ້າ ມາເຝົ້າແຫ່ງເຮົາ ທ່ຽວເຫັ້ນ
+ ແຕ່ນັ້ນ ເຂົາກໍລາຈາກຫ້ອງ ພູວະນາດຈອມເມືອງ
ແລ້ວເລົ່າ ເມືອເຮືອນຕົນ ພັກແຄມຄືນນັ້ນ
ຄັນວ່າ ເຖິງເມື່ອວັນລຸນແລ້ວ ເຮວພະລັນໄປບອກ
ບັດນີ້ ຂຸນແຂກເຈົ້າຢ່າຊ້າ ດາຫາວ່າແຕ່ງແປງ ທ່ຽວເຫັ້ນ
+ ອັນວ່າ ພະບາດເຈົ້າ ຍິນຊື່ນກູມາ ແທ້ແລ້ວ
ວ່າໃຫ້ ພາເອົາຝູງ ແຂກເມືອງເມືອເຝົ້າ ວ່າດາຍ
ກັບທັງ ສົມມະນະເຈົ້າ ເມືອມວນທຸກໝູ່
ພະກໍໄຄ່ຢາກ ຖາມຂ່າວເຈົ້າ ສະຫາຍແກ້ວໜຶດການ
+ ແຕ່ນັ້ນ ນາຍສະເພົາພໍ່ພ້ອມ ທຸກໝູ່ສົມມະນາ
ເລີຍເລົ່າ ຕົກແຕ່ງເຄົ່າຄາຂອງ ຝາກພະຍາເມືອພ້ອມ
ເຂົາກໍ ຍົນຍ້າຍ ເມືອງຫລວງລັດລ່ວງ
ຂຸນເມືອງ ພາແຫ້ບ້ານ ເມືອເຝົ້າພໍ່ພະຍາ
+ ເຂົາກໍ ເດີນຟັ່ງຟ້າວ ຮອດພາສາດພະຍາເມືອງ

ເມືອງນອງໄຫລ　　　　ຫລັ່ງໄປໂຮງກວ້າງ
ເຂົາກໍ່ເລົ່າ ຖວາຍບັນນາການພ້ອມ ແຖມສິນພານພູວະນາດ
ເມື່ອນັ້ນ ພະບາດເຈົ້າ　　　　ຖະແຫລງຖ້ອຍກ່າວຖາມ
+ ອັນວ່າ ສິນມະນະພໍ່ພ້ອມ　ເດີນດ່ວນມາເຖິງ ທີ່ພີ້
ຍັງຄ່ອຍ ເຫຍລະຄາຄີງ　　　　ຢູ່ສະບາຍບໍເຈົ້າ
ໃພບໍ່ ແຄນຄີງຮ້ອນ　　　　ເດີນທາງອິດເມື່ອຍ ນັ້ນບໍ
ຍາມເມື່ອ ເຈົ້າພື້ນອງອອກຈາກບ້ານ ສະຫາຍຂ້ອຍຢູ່ດີ ແດ່ລີ
+ ແຕ່ນັ້ນ ສິນມະນະເຈົ້າ　　　　ຮັບພາກລາຊາ
ສະຫາຍ ຍັງຄ່ອຍຄີງຄຳສຸກ　　　　ບໍ່ເຄືອງຄຳຮ້ອນ
ເມື່ອນັ້ນ ລາຊາເຈົ້າ　　　　ພະຍາຫລວງກອຍກ່າວ
ອັນວ່າ ພະສະຫາຍເຮົາຢູ່ແຫ່ງພຸ້ນ　ປະສິງແທ້ເມືອງໃດ
+ ກໍ່ຈື່ງໃຫ້ ສິນມະນະເຈົ້າ　ດັ້ນດຸ່ງທາງໄກ ດັ່ງນີ້
ມາເຖິງ ເມືອງທະວາດີ　　　　ຮອດເຮົາພາຍພີ້
ເມື່ອນັ້ນ ສິນມະນະເຈົ້າ　　　　ວາຈາຮັບພາກ
ວ່າປະສົງຢາກຮູ້　　　　ເຖິງເບື້ອງເລື່ອງທຳ ພະເອີຍ
+ ກໍ່ຈື່ງ ຈີງແຕ່ງຕັ້ງ　　　　ພວກເຮົາດຸ່ງເດີນມາ
ວ່າໃຫ້ ຂອກຫາຄູອາຈານ　　　　ຜູ້ຊ່ຽວຊານທາງພີ້
ສິນທະນາຄວາມຮູ້　　　　ລີງພັນຊ້ຳເທື່ອໃຫມ່
ທັງໃຫ້ເມືອງຝ່າຍພີ້ ແມ່ນເຄືອງຄ້າ　ລີງຕັ້ງຕໍ່ພັນ ທ່ານເອີຍ
+ ຄ້ອນວ່າ ສິນທະນາເລີກແລ້ວ　ສິນມະນະລາລີງ
ລາຈາກ ອົງພະຍາຫລວງ　　　　ເລີກເມືອສະເພົາກວ້າງ
ພາກັນ ສິນງຍ້າຍ　　　　ເມືອສະເພົາສະຖິດຢູ່

ຄອຍຖ້າ ທາງທະວາດີຝ່າຍພຸ້ນ ຊິຈາເອົາມີດປະຊຸມ
+ ເມື່ອນັ້ນ ພະບາດເຈົ້າ ຕີນຝ່າຍທະວາດີ
ກໍຈຶ່ງ ນິມົນເອົາ ໜູ່ສົງມາຕ້ານ
ແຕ່ນັ້ນ ເຂົາກໍຄວາຄີຟ້າວ ໄປທັນສິນມະນາດ
ໃຫ້ຮີບ ໄຫວ້ຊູດ້ານ ລາຊະຄູເຈົ້າຊູອົງ
+ ບັດນີ້ ພະບາດເຈົ້າ ຈອມລາດພະຍາເມືອງ
ວ່າໃຫ້ ສີນມະນະ ໄປຊຸມນຸມ ທີ່ສະໜາມວັນນີ້
ເມື່ອນັ້ນ ສິນມະນະເຈົ້າ ໂດຍຄຳມະຫາລາດ
ເລີຍເລົ່າ ໄປບໍ່ຊ້າ ມວນພ້ອມຊູຕົນ
+ ເຂົາກໍ ລຸດງເຂົາ ເຕັມຂ່ວງສະໜາມຫລວງ
ມາມວນໝົດ ຊູຕົນມວນພ້ອມ
ແຕ່ນັ້ນ ລາຊາເຈົ້າ ຖາມດູສິນມະນາດ
ໃຜຜູ້ ຍັງຈັກອັນຕໍ່ຕັ້ງ ສິນມະນະເຈົ້າຕ່າງເມືອງ
ໄດ້ເດ
+ ຄັນວ່າ ຕົນໃດຍັງສະຫລາດຮູ້ ໄຕເພດທັງສາມ
ໃນປາລີ ໜູ່ວິໄນພ້ອມ
ກັບທັງ ອະພິທຳເຈົ້າ ອັດສຳໂນແປອອກ
ສືບທັງຫລາຍ ເລົ່າບໍ່ຂອງ ສະເໜີນຳເປັ່ງຝາຍ ນັ້ນແລ້ວ
+ ເຮົາຈັກ ຖວາຍທອດໃຫ້ ພັນຊັ່ງຄຳຕົນ
ໃຫ້ຊັກຖາມ ຄອງທຳ ໃຫ້ເພີ່ນປຸນປອງແກ້
ເພາະວ່າ ລາຊາເຈົ້າ ຕານິນະຄອນລາດ ພາຍພຸ້ນ
ພະກໍໃຫ້ ສິນມະນະເຈົ້າ ມາພີ້ໂຈດກັນ ວ່າດາຍ

+ ຄົນວ່າ ໃຜຜູ້ຍັງຂາດຄ້າງ ບໍ່ຊ່າງຕອບຄຳດຽວ ກໍດີ

ຈັກໄດ້ເອົານະຄອນຫລວງ ສ່ວຍໄຮວາງໃຫ້ ວ່າດາຍ

ອັນວ່າ ສົມມະນະເຈົ້າ ຕານີເມືອງຕ່າງ ພາຍພຸ້ນ

ຕັ້ງວ່າ ຫີນຢູ່ຫ້ອງ ເຕັມແລ້ວຈຶ່ງດຸ່ງມາ ທ່ານເອີຍ

+ ອັນໜຶ່ງ ເໝືອນດັ່ງພານລ່າເນື້ອ ຫາທຸກສິ່ງທີ່ເປັນພົນ

ຈິ່ງແລ້ວ

ຕັ້ງວ່າ ປືນມີລູກ ກະສອບເຕັມຈຶ່ງມາໄດ້

ອັນວ່າ ດິນດີເພິ່ນຈຶ່ງໃຊ້ ດິນບໍ່ດີເພິ່ນດູຖູກ ແທ້ດາຍ

ອັນວ່າ ຄວາມບູຮານກ່າວເວົ້າ ມາແລ້ວຊູ່ອັນ

+ ແຕ່ນັ້ນ ສົມມະນະເຈົ້າ ທະວາດີສົ່ນເຊັນກົວ

ກໍ່ຫາກ ບໍ່ມີຕົນໃດຂານ ຊິໂຈດຖາມເອົາໄດ້

ກໍ່ບໍ່ມີ ຜູ້ອັນຕໍ່ສູ້ ສົມມະນະຕານີຕ້ານຕອບ ໄດ້ແລ້ວ

ກໍ່ທໍ່ ຄາງຍ່ອມຢ້ານ ຍອມໄວ້ແຕ່ໄກ

+ ເຮົານີ້ ຕັ້ງວ່າຮຽນບໍ່ເຖິງຖອງຮູ້ ສາມາດແປທຳ ໄດ້ແລ້ວ

ກໍ່ທໍ່ ຄູພຽນສອນ ສູດໄປພໍໄດ້

ພໍວ່າ ໄປໂຈດຕັ້ງ ພະນັນກັນອັນຕໍ່

ເກັງທໍ່ ເສຍປະເທດບ້ານ ເມືອງໃຫ້ແກ່ເຂົາ ນັ້ນແລ້ວ

+ ເຮົາກໍ່ ຫາກຍອມຢູ່ແລ້ວ ຂໍພະບາດຈຶ່ງເຫັນໃຈ ຫັ້ນທ້ອນ

ເກັງທໍ່ ຝູງເພິ່ນເອົາຊະນະ ຊິຍ່ອມອາຍເຂົາແທ້

ເມື່ອນັ້ນ ລາຊາເຈົ້າ ຂະໜັງຫວງພອຍຄຽດ

ເພື່ອວ່າ ສົມມະນາດເຈົ້າ ກົວຢ້ານອ່ອນຂາມ ເພື່ອນັ້ນ

+ ແຕ່ນັ້ນ ເຈົ້າຈຶ່ງບອກອາດໃຫ້ ຝູງໝູ່ໄທເຂົາ

ບັດນີ້ ສູຈົ່ງໄປນຳກະນິດຖາ ໃຫ້ຮີບມາຫາຂ້າ ທ່ຽວເທີ້ນ
ຢ່າໃຫ້ ເນີນນານຊ້າ ໃຫ້ເດີນມາເຮວຮີບ ວ່າເນີ
ເມື່ອນັ້ນ ເຂົາກໍໂດຍອາດເຈົ້າ ພະລັນດັ້ນແລ່ນໄປ
+ ຮອດທີ່ຊຽງໝັ້ນຽງແລ້ວ ເຂົາກ່າວກອນຖະແຫລງ
ບັດນີ້ ເໜືອຫົວມີອາດຍາຫັນ ໃຫ້ຮີບເມືອດຽວນີ້ ຊຽງເອີຍ
ໃຫ້ເມືອນຳ ຝູງຂ້າ ພະລັນເຮວຮີບແລ່ນ ວ່າດາຍ
ແຕ່ນັ້ນ ຊຽງກໍໂດຍອາດເຈົ້າ ພະຍາເຈົ້າສັ່ງການ
+ ກໍເລົ່າ ເມືອຮອດເຈົ້າ ຂາບທູນພີ່ພະຍາຫລວງ
ບັດນີ້ ລາຊາຊົງ ແຕ່ງລົມໄປເອີ້ນ
ຈັກວ່າ ມີການຮ້ອນ ແນວໃດມາຈື່ມ
ພະບາດ ຊົງສັ່ງຂ້າ ມາຟ້າວຟັ່ງພະລັນ ພະເອີຍ
+ ບັດນີ້ຂ້າກໍມາຮອດແລ້ວ ຜາຍໂພດກູມາ ທ່ຽວເທີ້ນ
ຂໍພະອົງ ມີອາດຍາ ບອກມາພໍຮູ້
ທຸກສິ່ງ ພໍກະທຳໄດ້ ຊິຈົ່ງໃຈກະທຳໂລດ
ພະບາດ ຊົງສັ່ງແລ້ວ ຫນີລີ້ຫ່ອນຊິເປັນ ພະເອີຍ
+ ແຕ່ນັ້ນ ພະບາດເຈົ້າ ເວົ້າຕໍ່ກອນຊຽງ
ຕັ້ງວ່າ ເສຍໃຈເຮົາ ບໍ່ນຶກຝັນຊິເຫັນໄດ້
ຕັ້ງວ່າ ເສຍແຮງຍໍພາເຂົ້າ ໄປເຄນດາຍດອກ ຊຽງເອີຍ
ພວກພະສົງ ເພື່ອນບໍ່ຄິດອາດຕຸ້ມ ເມືອງບ້ານຊ່ວຍເຮົາ ແທ້ດາຍ
+ ລອນທໍ່ແຖຫົວໄປນອບນ້ອມ ສະແຫວງບວດເປັນສົງ
ກໍບໍ່ ເອົາໃຈຮຽນ ຮ່ຳເອົາຄວາມຮູ້
ເຫັນວ່າ ເປັນສົງແລ້ວ ຊິນອນກິນດາຍດອກ

ທຳບໍ່ມີ ຄ້າງຫ້ອງ ທະລອນເອ້ອວດເຊີງ ແທ້ນໍ

+ ຈິດບໍ່ຄຶດອ່າວເອ້ອ ຮຽນພະສູດພະທຳພູດ ອື່ສິ່ງແລ້ວ

ມີແຕ່ ແປງໂຄງສານ ອ່ານເປັນເຊີງຫລີ້ນ ນັ້ນເດ

ຍັງເລົ່າ ໂລພາລົ້ນ ວັດຖຸທານທຸກສິ່ງ

ເຫັນແກ່ ອາມິດຂອງລື່ນລົ້ນ ຊິນຈົ້ນຢູ່ເລີງ ແທ້ນໍ

+ ຕັ້ງວ່າ ເສຍແຮງທິດສິງໃຫ້ ອະພິເສກເປັນຄູ ແທ້ແລ້ວ

ບາດວ່າ ເຫດໃຫ່ຍມາປະຈົນເຖິງ ໂລດບໍ່ມີຄວາມຮູ້

ບັດນີ້ ເຮົາຈັກຫາໃຜໄດ້ ມາແປໂຈດເພື່ອນ ນັ້ນເດ

ບໍ່ຊ່າງວ່າ ຈັກໃຫ້ເສຍຍົດບ້ານ ເມືອງກວ້າງແຫ່ງເຮົາ ນັ້ນເດ

+ ແຕ່ນັ້ນ ຊຽງຫມັ້ນຽງເວົ້າ ຂານຕອບພະຍາຫລວງ

ໃຜກໍ່ບໍ່ ຮັບອາສາ ຕອບເຂົາຝູງນັ້ນ ແທ້ລີ

ຄັນວ່າ ບໍ່ມີໃຜແທ້ ຍອມເຂົາຫມົດຊູບ່ອນ ເສຍນັ້ນ

ຂ້ອຍຈັກໄປ ບວດຄ້ຳ ຄຳແກ້ໂຈດເຂົາ ກ່ອນແລ້ວ

+ ເຂົານັ້ນບໍ່ໃຊ້ ຮຽນຢູ່ຫ້ອງ ຕົນແມ່ນມານດາ ພຸ້ນດາຍ

ເຮົາກໍ່ ຮຽນຄຳຄຶດ ດັ່ງດຽວກັນແທ້

ຊາດທີ່ເກີດມາໃນກົງພົ້ນ ທໍລະນີເຫນືອແຜ່ນ ດິນນັ້ນ

ໃຜບໍ່ມີ ສະຫລາດຮູ້ ປັນຍາລ້ຳລື່ນກັນ ດອກນາ

+ ຊາດທີ່ຄົນຊາຍບໍ່ຫ່ອນຢ້ານ ຍອມອາດເຊີງຄົນ ດອກນາ

ກົວແຕ່ ອິນລົງມາ ຈາກພົມພາຍຟ້າ ບໍ່ຮູ້

ຈິ່ງຈັກ ເສຍໄຊຫລູ້ຍ ຊຽງເຮົາຊິຢູດຢ່ອນ ເສຍແລ້ວ

ຫລືວ່າ ສືບພັນຍູເຈົ້າທາກລົງເກີດກ້ຳ ເມືອງບ້ານແຫ່ງເຮົາ ບໍ່ຮູ້

+ ຊາດທີ່ ທຳພະເຈົ້ານີ້ ມີແປດຫມື່ນສີ່ພັນຂັນ ແທ້ແລ້ວ

ໃຜຈັກ ອາດອິນເອົາຫມົດ　　ຊູ່ຄວາມມາເວົ້າ
ໃຜບໍ່ທ່ອນ ອິນເອົາເຂົ້າ　　ໃນໃຈຫມົດຊູ່ບ່ອນ ພະເອີຍ
ຢຽວວ່າ ເຂົາຫາກຊິນິລະມິດດັ່ງພະເຈົ້າ　　ປັນຍາແກ້ວສ່ອງເຫັນ
ບໍ່ຮູ້
+ ຊາດທີ່ເປັນຄົນ ຢູ່ພາກພື້ນ　　ບໍ່ຍອມຢ່ອນກົວໃຜ ແທ້ແລ້ວ
ແມ່ນຊິບໍ ດິນຍົກ　　ແຜ່ນພິມພາຍຟ້າ
ກໍ່ບໍ່ ຍອມມັນໃຫ້　　ເສຍເມືອງໂດຍງ່າຍ
ຄວາມຄົນຖາມຕ້ອງແມ່ນຄົນຕອບໄດ້　　ຄາຄ້າງບໍ່ທ່ອນມີ ພະເອີຍ
+ ເຊີນ ພະສະຫວັດຢູ່ຫ້ອນ　　ຢ່າໄດ້ອ່າວຄະນຶງສົງ ພະເອີຍ
ຂ້າຫາກ ຈັກຂັ້ນອາສາຕາງ　　ບໍ່ໃຫ້ເຄືອງຈອມເຈົ້າ
ແຕ່ນັ້ນ ລາຊາເຈົ້າ　　ພະຍາຫລວງຊົມຊື່ນ
ເພາະເພື່ອ ນ້ອງແກ່ນແກ້ວ　　ອາສາຄ້ຳຊູອົ້ນ ທັ້ນແລ້ວ
+ ພະຍາ ກໍ່ຈຶ່ງບົນບອກໃຫ້　　ຫມົດທຸກຫມູ່ເສນາ
ບັດນີ້ ສູຈຶ່ງເຄົາດາຕົກ　　ແຕ່ງຕາມພະອົງເວົ້າ
ເຂົາຈຶ່ງ ເອົາຊຽງຫມ້ຽງ　　ແຖຫົວໄປບອດ
ອັນວ່າ ສັງຄະເຈົ້າ　　ມາພ້ອມຊູຕົ້ນ
+ ຊຽງຫມ້ຽງໄດ້ເລີ່ມຕົ້ນ　　ໄປບອດເປັນເນນ
ແລ້ວບອດ ໄປເປັນສົງ　　ເມື່ອວັນດຽວນັ້ນ
ທົດສົງໃຫ້　　ສອງທີ່ເປັນຫລາຍ
ຍັງຈັກ ອຸບພິເສກໃຫ້　　ເປັນຄູຄ້ຳ ສາສະຫນາ ແທ້ແລ້ວ
+ ເຂົາກໍ່ ເອົາທາດແກ້ວ　　ມາແຕ່ງເປັນລິນ
ເອົາຄຳປິວ ມາພອກ　　ເຮືອເຮືອງເຫລືອງເຫລື້ອມ

ທາງເທິງ ແປງທີ່ກັ້ງ   ພິດານສູງປະດັບດອກ
ເອົາໃຫ້ ສິນກຽດເຈົ້າ   ຊຽງຫມັ້ນຮຽງບໍ່ພະຫຍາ
+ ທີ່ສິງນ້ຳ ບ່ອນນີ້   ມີຮູບໃຫຍ່ສິນຄວນ
ເພື່ອແຕ່ງປຸນ ເປັນທີ່   ຮູບໂຮງງາມລົ້ນ
ຮູບຮ່າງ ເປັນປ່າງກວ້າງ   ຈຶ່ງເປັນທີ່ຜາສາດ
ຕັ້ງຫາກ ມາບງເຫລື້ອມ   ວິມານແກ້ວພອກຄຳ
+ ມີຫມູ່ ດາວມາບເຫລື້ອມ   ປຸນດັ່ງເມືອງສະຫວັນ
ທາງທຽວມີ   ແຜ່ນທອງປູພື້ນ
ສອງຟາກທາງທິວເອ້   ມາລາສີບພະສິ່ງ
ເອົາກໍ່ ເລົ່າປູກກ້ວຍອ້ອຍ   ລຽນຖານຖີ່ຖຸ້ມ
+ ຝູງຫມູ່ ທຸງໄຊຫລາຍມາກລົ້ນ   ລຽນໂບກປິວສະບັດ
ປະທີບ ໂຮຍໆຫອມ   ລຽບທາງຕາມໄຕ້
ອັນວ່າ ຫີນທາງກວ້າງ   ດູງາມພຽງຮາບ
ຊາຍແຮ່ພ້ອມ   ໂຮມໄວ້ຊູ່ພາຍ
+ ແລ້ວເລົ່າ ປູກກ້ວຍອ້ອຍ   ທັງຊໍ່ທຸງຝາຍ
ຕັ້ງຫາກ ລຽນເປັນຖຸ້ມ   ສະຫວ່າງງາມສອງເບື້ອງ
ອັນວ່າ ພິດານກັ້ງ .   ພາຍບົນດູອາດ
ທຽນ ແລະ ທູບປະທີບໄຕ້   ສອງຂ້າງເຮືອງເຮືອງ
+ ເອົາກໍ່ ເອົາສະລ່ຽງເອ້   ຫາມແຫ່ກະນິດຖາ
ແຊງໄປ   ສູ່ທີ່ສິງນ້ຳ
ພາຍບົນກັ້ງ   ສີບພະຫີນດວງດອກ
ເສດຕະສີດຮີ່ມກັ້ງ   ຄັນຈ້ອງຊູ່ພາຍ

+ ອັນວ່າ ຈຳນອນຫລາຍຫລາກເຫລື້ອມ   ໄກວແກວ່ງສີນອນຄຳ

ຈັ່ງແມ່ນ ບັນເນືອງສຽງ   ລື່ນກອງທັ່ງຄ້ອງ

ຟັງສຽງດິນຕີກ້ອງ   ສວນໄລແກນປີ່

ພິນພາດພ້ອມ   ແຄນໄດ້ຊູ່ຍຊໍ

+ ອໍລະແອ ແອ່ນຟ້ອນ   ລະບຳຍ່າງຕາມເພງ

ອໍລະຊອນສຽງ   ຊູ່ຍຊໍແກນຄ້ອງ

ຄົນທັງຫລາຍມວນລົ້ນ   ຕາມຫລັງແຫນແຫ່

ຖືໂອຂັນໃສ່ນ້ຳ   ມາໄວ້ເພື່ອສົງ

+ ລາງພ່ອງ ຖືດອກໄມ້   ທຽນທູບສອນລອນ

ລາງຄົນໂຮ   ໂຫ່ນຳເພືອນຟົ້ນ

ແຕນັ້ນ ຝູງສາວຍ້ຽມ   ຫລິງແລບາບ່າວ

ອັນວ່າ ຝູງຫມູ່ສາວສ່ຳຊູ້   ຫິວໄຫ້ຫອດນຳ

+ ໂອນໍ ບັດນີ້ ພະພີ່ຕົ້ນ   ເຮົາບວດເປັນສົງ ແລນໍ

ແມ່ນວ່າ ເຮົາຈັກໄປຊົມໃຜ   ກໍ່ບໍ່ມີປານເຈົ້າ

ອັນແຕ່ ເຊີງຊາຍນີ້   ໃຜຈັກປຸນປານປຽບ ໄດ້ເດ

ສຸດແຕ່ ພະພີ່ເຈົ້າ   ຕົນລ້ຳໂລກລື ແທ້ແລ້ວ

+ ເມື່ອນັ້ນ ເຮົາຈັກຄອງຢູ່ຖ້າ ກໍ່ມີໃຊ່ອາການ ເຈົ້າເອີຍ

ຄັນຈັກ ຫາໃຫມ່ມາທຽມສອງ   ຍ້ານບໍ່ປຸນປານເຈົ້າ

ຫລືວ່າ ເຮົາຈັກແຖຕົວເຂົ້າ   ເປັນນາງຂາວດອມທ່ານ

ຍ້ານທໍ່ ທຳບໍ່ຊອບໄທ້   ພະເນືອງເຈົ້າຜູກຕີ ບໍ່ຮູ້

+ ຄ້ອນວ່າແລ້ວ   ເຫງົາຢູ່ຊະເຈົາຈິດ

ເພາະວ່າ ຄົມມະນາຄຶດ   ຮອດເຖິງຊຽງຫມ້ຽງ

ພຽງແຕ່ ຄຳນຶງໂອ້ ລຳພັນໃຈດາຍເປົ່າ

ເພາະວ່າ ຊຽງຫມັ້ນຮຽງເຈົ້າ ປະສົງເຂົ້າບວດຮຽນ ແທ້ແລ້ວ

+ ແຕ່ນັ້ນ ສວ່າງກ້ອງ ເຂົາແຫ່ແຫນໄປ ພຸ້ນເຢີ

ເຖິງທີ່ ອາຮາມຫລວງ ຈອດເຊົາທັນນັ້ນ

ແຕ່ນັ້ນ ລາຊາເຈົ້າ ຈອມເມືອງສະເດັດຄ່ອນ

ດີແຕ່ ຄົນແຫ່ຫຸ້ມ ລີ້ລາຍອອກໄປ

+ ເຖິງທີ່ ກະດີໃຫຍ່ກວ້າງ ສະຖິດຢູ່ເຊົາແຄມ

ພະກໍ່ ປົງຕົວລົງ ອາດສະຫນາພື້ນກວ້າງ

ເມື່ອນັ້ນ ສົງຄະລາດພ້ອມ ພະຊາຄູພ້ອມພ່ຳ

ມານັ່ງ ໂຮມຮ່ວມເຕົ້າ ໃນຫັ້ນດັ່ງດຽວ ແທ້ແລ້ວ

+ ປະຊາຊົນມາກລົ້ນ ຫລຸຫລັ່ງກັນມາ

ເຂົ້າສູ່ອາຮາມຫລວງ ພັກເຊົາໃນນັ້ນ

ກັບທັງເສນາທ້າວ ທັງຫລາຍເລີຍຮີບ

ມາພ່ຳພ້ອມ ໂຮມຫັ້ນຍ່ອນດຽວ

+ ແຕ່ນັ້ນ ທຸກທົ່ວພ້ອມ ແປງຫລາຍນຳກັນ

ສະລັກລົງ ເປັນນາມ ວ່າແມ່ນອົງພະຄູແກ້ວ

ຊື່ວ່າ ໄຊຍະສິດຕະກະແກ້ວ ຄຳພີລັງອົງອາດ ຈິງແລ້ວ

ໃຫ້ເປັນແຂວງເຂື່ອນກວ້າງ ຫລີໄທ້ທີ່ນະຄອນ ແທ້ແລ້ວ

+ ເມື່ອນັ້ນ ເຂົາກໍ່ລົງເລກຕ້ອງ ໃສ່ໃບຫລາຍຄຳແດງ

ຕົບແຕ່ງ ປຸນເປັນດວງ ຫລາຍຄຳແດງຍ້ອມ

ແຕ່ນັ້ນ ເຂົາກໍ່ເລື່ອນງຍ້າຍ ໂຊມຊຽງດັ້ນຮອດ

ກະນິດຖາ ແຈ່ມເຈົ້າ ເລີຍຂຶ້ນນັ່ງເທິງ

+ ອັນວ່າ ຣົ່ມກິ່ງກົ້ງ　　ເລີຍແຫ່ແຫນໄປ

ເຂົ້າສູ່ໃນ ທໍ່ສົງ　　ຫລັ່ງລົງລິນແກ້ວ

ດີແກ່ ຕຸລິຍະນົນຕີພ້ອມ　　ສຽງມັນມ່ວນມື່

ເຂົາກໍ່ ເສບແຈ່ມເຈົ້າ　　ສົງນ້ຳຊູ່ພາຍ

+ ຟັງສຽງຕຶງໆກ້ອງ　　ສະບູໃຫຍ່ຍິງຂ່ຳນັບ

ມັນແມ່ນ ອວຍພອນໄຊ　　ໃຫ້ພາບມານທັງຄ້າຍ

ເຂົາກໍ່ ເລັ່ງຂັນລົງເບື້ອງ　　ຂັນທີຍໍຫລັ່ງ

ບາງພ່ອງ ໂອໃສ່ນ້ຳ　　ຍໍຂື້ນຖອກລົງ

+ ພໍ່ດູ ຝົນຫ່າແກ້ວ　　ລົງຫວ່ານພາຍໆ ພຸ້ນເຍີ

ຝູງຫມູ່ ເວີນຄ່ຳມີ　　ຊູ່ອັນໃນຫັ້ນ

ເຂົາກໍ່ ສົນໆເຕັ້ນ　　ປົບໄປຊົງຍາດ

ເຂົ້າຕອກ ທັງດອກໄມ້　　ພາຍຂື້ນຫວ່ານລົງ

+ . ບາງພ່ອງເຊຫ່າວລົ້ມ　　ລົງໄຂ່ວຂົນກັນ

ບາງພ່ອງ ໂຣແຊວມັນ　　ອ້າປາກໄປທັງຣ້ອງ

ຄ້ອນວ່າ ບໍລະບວນແລ້ວ　　ທັງຫລາຍລາເລີກ

ອັນວ່າ ສຽງເສບນ້ອຍ　　ອວນເຈົ້າສູ່ສະຖານ

+ ເຂົາຈຶ່ງ ຕົກແຕ່ງພ້ອມ　　ເຄື່ອງເບີກບາສີ

ອັນວ່າ ພາມມະນາເລີຍ　　ອ່ານພອນຖວາຍເຈົ້າ

ຂໍຈົ່ງໃຫ້ ສະຫວັດສະດີຫມັ້ນ　　ເທຍລະຄາຍືນຍົ່ງ ຈົ່ງເທີ້ນ

ໃຫ້ເຈົ້າ ໄດ້ພາບມ້າງ　　ມານມ້ວນອ່ອນໂຍນ ແທ້ເນີ

+ ອັນຫນຶ່ງ ຂໍໃຫ້ໄດ້ພາບແພ້　　ຕ່າງປະເທດທັງຫລາຍ ຈົ່ງເທີ້ນ

ໃຫ້ອ່ອນຍອມ ໂຍມມາ　　ສ່ວຍໄຣພະຍາເຈົ້າ ແທ້ເນີ

ຄ້ອນວ່າ ພານມະນາເຖົ້າ　　ຖວາຍພອນແລ້ວຢ່າ
ເຂົາກໍ່ເລົ່າ ຕີລົ້ນຄອງ　　ເລີຍຮອງວ່າຊາ
\+ ຄ້ອນວ່າ ພິທີເລີກແລ້ວ　　ທຸກຄົນກ່າວອຳລາ
ໃພກໍ່ ຄືນເມືອເຮືອນ　　ຢູ່ສະບາຍເບົາເນື້ອ
ປວງປະຊາຊົນເຊື້ອ　　ມີໃຈຊ້ອຍຊື່ນ
ເຫັນພະຊາໃຫມ່ນີ້　　ງານຍ້ອຍສະຫລາດດີ
\+ ແຕ່ນັ້ນ ຟັງຍິນຮ່ອນໆຟ້າ　　ຝົນຫລັ່ງແຖມແຖວ ພຸ້ນເຍີ
ດີແຕ່ ຝູງຊາວຄົນ　　ແຕ່ງຄວາຍໄຖກ້າ
ທັງຝ່າຍລາຊາເຈົ້າ　　ຈອມເມືອງປົງອາດ
ບອກໃຫ້ ສົມມະນາດເຈົ້າ　　ຕານີພຸນຊູຕົ້ນ
\+ ຕັ້ງແຕ່ ລາຊະຄູຫລວງພ່ຳພ້ອມ　　ສັງຄະລາດທັງມວນ ກໍ່ດີ
ໃຫ້ຄ່ອຍເດົາດາກຽມ　　ແວດລະວັງໃຈໄວ້ ທ່ຽວເຫັ້ນ
ແລ້ວເລົ່າ ມີອາດຍາໃຫ້　　ຊາວສະເພົາໄດ້ຮູ້ຂ່າວ
ກັບທັງສົມມະນາເມືອງຕານີພ່ຳພ້ອມ　　ເຫັນຮູ້ທົ່ວກັນ
\+ ຫາກວ່າ ວັນພຸ່ງຫນ້າ　　ອະມະຕະໂຊກຍາມດີ
ເຮົາຈັກ ໂຮມກັນມາໂຈດຖາມ　　ຢູ່ທີ່ສະຫນາມກວ້າງ
ເມື່ອນັ້ນ ລາຊະຄູເຈົ້າ　　ຄຳພິລັງຕຶກແຕ່ງ
ອັນວ່າ ຄົນແຫ່ພ້ອມ　　ລີ້ລາຍສູ່ສະຫນາມ
\+ ແຕ່ນັ້ນ ເຈົ້າກໍ່ເລົ່າອາດຕັ້ງ　　ສະຫນາໃຫ່ຍແວນສູງ
ໃນບ່ອນ ປຸນແປງຮັບ　　ລາຊະຄູຫລວງເຈົ້າ
ແຕ່ນັ້ນ ຂຸນພະສົງເຈົ້າ　　ຕານີຍົວລະຍາດ ມາແລ້ວ
ເລີຍເລົ່າ ມວນຫມູ່ເຂົ້າ　　ສະຫນາມກວ້າງຈອດເຊົາ

\+ ດີແກ່ ສັງຄະເຈົ້າ ສວ່າງໂຮມກັນ ພຸ້ນເຍີ
ຟັງຍິນສຽງຄົນນັ້ນ ຊູ່ພາຍຄອຍຢ້ຽມ
ແຕ່ນັ້ນ ລາຊະຄູເຈົ້າ ຄຳພີລັງກອຍກ່າວ
ເຮົາຄ່ອຍ ຢັ້ງຢູ່ຖ້າ ລາຊະຄູເຈົ້າໄປລັງ ກ່ອນທ້ອນ
\+ ຂ້ອຍກໍ່ ຢູ່ປະເທດກ້ຳ ຂັນຂອບທະສີມາ ທີ່ພຸ້ນ
ເພິ່ນນັ້ນ ເນົາຄາເມ ນອກເມືອງພາຍພຸ້ນ
ທໍ່ວ່າ ມີອາຍຸໄດ້ ຊາວສາມປີຫົດຫ່ຽວ ຈິງແລ້ວ
ມະຫາລາຊະເຈົ້າ ອຸບພິເສກໃຫ້ ວານນີ້ຕື່ມນາມ ເຈົ້າເອີຍ
\+ ອັນວ່າ ລາຊະຄູທັງສາມທ່ານເຈົ້າ ແມ່ນຢູ່ໃນເມືອງ ນີ້ແລ້ວ
ເພິ່ນກໍ່ ຮຽນຈົບຈົບ ພະໄຕປີດົກແທ້
ແຕ່ນັ້ນ ລາຊະຄູເຈົ້າ ເມືອງຕານີຊົມຊື່ນ
ຂໍໃຫ້ ເຈົ້າກ່າວຕ້ານ ລົມໃຫ້ສູ່ຟັງ ແດ່ທ້ອນ
\+ ຍັງເຫືອ ປານໃດຫ່ຽວແທ້ ຊິມາເວົ້າໂຈດກັນ
ເຮົາກໍ່ ເດີນມາໄກ ເພາະຢາກຮຽນຄວາມຮູ້
ເມື່ອນັ້ນ ລາຊະຄູເຈົ້າ ຄຳພີລັງຮັບພາກ
ບັດນີ້ ເຮົາຄ່ອຍລອງພາກເວົ້າ ກັນຖ້າເພື່ອນມາ ກ່ອນທ້ອນ
\+ ເຮົາຈັກ ແລກປ່ຽນຫລິ້ນ ໃຫ້ເຫັນບ່ອນຄວາມຈິງ ກ່ອນທ້ອນ
ຊາມຊາ ອົງພະຄູຫລວງ ເພິ່ນຊິມາຈາເວົ້າ
ເມື່ອວ່າ ເຮົາຈັກຈາກັນດ້ວຍ ອະພິທຳກໍ່ກວ້າງຢູ່ ຈິງນາ
ອັນວ່າ ຄອງພະເຈົ້າ ເຮົານັ້ນກໍ່ເລີກຂຳ ແທ້ດາຍ
\+ ຖ້າວ່າ ເຮົາຊິເວົ້າ ໃນເລື່ອງອາສຳໂມ ດັ່ງນັ້ນ
ມັນກໍ່ເປັນອັນແປ ຍາກແຄນຈິງແທ້

ເຮົາຄວນ ຈາໃນຫ້ອງ   ມະຫາວົງພຸດທະບາດ ເຮົາແລ້ວ
ເພາະວ່າ ພຸ້ນ ແລະພີ້   ເຮົາກໍຮູ້ຊູ້ຄົນ ຢູ່ແລ້ວ
+ ອັນວ່າ ພະພໍ່ເຈົ້າ   ວົງປະເສີດໂຄດົມ ເຮົານັ້ນ
ກັບທັງ ວົງມານດາ   ຊື່ໃດເດເຈົ້າ
ແຕ່ນັ້ນ ສັງຄະເຈົ້າ   ຕານີບົນບອກ
ພະສີສູດໂທທະນະເຈົ້າ   ເປັນເຄົ້າພໍ່ພະອົງ ແທ້ດາຍ
+ ອັນວ່າ ພະແມ່ເຈົ້າ   ໃຫ້ກຳເນີດອົງພຸດໂທ ເຮົານີ້
ແມ່ນນາງ ພິມພາສີມະຫາມາຍາ   ຊື່ແນວນາມເຊື້ອ ເຈົ້າເອີຍ
ແຕ່ນັ້ນ ຄຳພີລັງເຈົ້າ   ເລີຍຈາສືບຕໍ່ ໄປນັ້ນ
ບໍ່ໃຫ້ ຂາດປາກໄດ້   ສະເຫມີນ້ຳຫລັ່ງໄຫລ ແທ້ແລ້ວ
+ ອັນວ່າ ພະປູ່ເຈົ້າ   ຕົ້ນພໍ່ສີສຸດໂທ ນັ້ນເດ
ທັງມານດາ   ຍ່າພະອົງເປັນເຈົ້າ
ຈັກວ່າ ແມ່ນພະຍາໃດແທ້   ນາມມະກອນເປັນໃຫຍ່
ຜູ້ທີ່ເຫງົ້າ   ນາມເຄົ້າຊື່ໃດ ນັ້ນເດ
+ ເມື່ອນັ້ນ ພະມະຫາສັງຄະເຈົ້າ ເມືອງເຫດຕານີ
ພະກໍ່ ໄຂວາຈາ   ບອກມາຈົງແຈ້ງ
ຕາມທີ່ເຮົາຮຽນຮູ້   ໃນທຳພຸດທະບາດ
ພະຍາສີຫາທະນຸລາຊະເຈົ້າ   ເປັນເຄົ້າປູ່ພະອົງ ເຈົ້າເຮີຍ
+ ອັນວ່າ ຍ່າແຈ່ມເຈົ້າ   ບໍ່ມີອາດພັນລະນາ ໄດ້ແລ້ວ
ກໍ່ບໍ່ມີ ໃຜສອນ   ບອກນາມມະກອນແກ້
ແຕ່ນັ້ນ ລາຊະຄູເຈົ້າ   ຄຳພີລັງຊ້ຳກ່າວ
ອັນວ່າ ພໍ່ພະຍາສີຫາທະນຸລາດນັ້ນ   ນາມທ້າວຊື່ໃດ ນັ້ນເດ

24 / VII
ຫ້າມຈຳໜ່າຍ

+ ກັບທັງ ພວກແກ່ນໄທ້ ເປັນແມ່ມານດາ
ມີຊື່ເປັນແນວໃດ ໃຫ້ບອກມາພໍ່ຮູ້ ແດ່ທ້ອນ
ເມື່ອນັ້ນ ລາຊະຄູກໍ່ ຕານີເລີຍບອກ
ອັນວ່າ ພໍ່ພະຍາສີຫາຫະນຸລາດນັ້ນ ນາມເຈົ້າກໍ່ຫາກມີ ແທ້ດາຍ
+ ຊື່ວ່າ ພະຍາໄຊຍະເສນາທ່ຽງແທ້ ຜູ້ໄດ້ສືບສະຫວັດເມືອງ
ທ່ານເອີຍ

ແຕ່ວ່າ ມານດາມີ ຊື່ໃດບໍ່ເຄີຍຮູ້
ແຕ່ນັ້ນ ຄຳພີລັງເຈົ້າ ພາງານຖາມສືບ ໄປນັ້ນ
ອັນວ່າ ພໍ່ໄຊຍະເສນາຜູ້ເຄົ້າ ປາງນັ້ນແມ່ນໃຜ ເຈົ້າເອີຍ
+ ກັບທັງພະແມ່ເຈົ້າ ຜູ້ເປັນເອກເທວີ
ຂໍຈົ່ງ ວາຈາໄຂ ບອກມາພໍ່ຮູ້ ແດ່ທ້ອນ
ອັນວ່າ ເຂື່ອນແຂວງເມືອງຫລວງພຸ້ນ ກັບທັງວົງສືບຕໍ່ ຄືນນັ້ນ
ກັບທັງ ແນວຊາດເຊື້ອ ມານດາເຄົ້າຊູ້ອັນ
+ ກັບທັງພະຍາພໍ່ເຈົ້າ ເຊື້ອຊາດລຸງອາ
ເຮົາຂໍຈົ່ງໃຈຖາມ ຊູ້ອັນພໍ່ຮູ້
ພະກໍ່ຖາມ ໄປເລື້ອຍ ບໍ່ມີຄາວຊິຢຸດຢູ່
ຄືດັ່ງ ຝົນເດືອນສິບເລັ້ງເລື້ອຍ ບໍ່ມີເອື້ອນຊົ່ວຍາມ
+ ກໍ່ຫາກເຫນັດເຫນື່ອຍແທ້ ອິດອ່ອນພໍ່ອີດູ ແທ້ແລ້ວ
ມີແຕ່ຖາມລົງໄປ ແບບບໍ່ມີຍາມຢັ້ງ
ແຕ່ນັ້ນ ລາຊະຄູຫລວງເຈົ້າ ເມືອງຕານີຄຶດຢູ່
ເລີຍເລົ່າ ໄປບໍ່ໄດ້ ຄາຄາງລວດຊະເຈົ່າ ແທ້ແລ້ວ
+ ແຕ່ນັ້ນ ຄຳພີລັງແຈ່ມເຈົ້າ ພັດຖາມຍົມລົງເລີຍ ໄປແລ້ວ

ບໍ່ຊ່າວ່າ ລາຊະຄູຫລວງທັງສາມ   ຊິໂຈດລົງແນວນີ້

ຈົນບໍ່ມືນຕາໄດ້   ຈັກຊຸຄົງຄ້າງຢູ່ ແທ້ແລ້ວ

ຫລັບກໍ່ຫລັບບໍ່ໄດ້   ຖາມເລື້ອຍ ຢູ່ບໍ່ເຊົາ

+ ຄັນວ່າເພື່ອນຫາກໄດ້ຈ່າຍເນັ້ນ   ໃນແຫ່ງອະພິທຳ ເມື່ອໃດ

ກັບທັງອາສຳໂມ   ຫມູ່ວິໄນພ້ອມ

ກັບທັງ ອັດຖະຕັ້ງ   ວາງແປຫລາຍວາດ

ກໍ່ຫາກໄຫລ ສົ່ງນ້ຳ   ທັງທ້າຫລົ່ງແຖວ ນັ້ນແລ້ວ

+ ຫລ້າງຈັກຕົກຂະມະແທ້   ລືມເພດພໍສະຫລົບ ບໍ່ຢ່າແລ້ວ

ອັນວ່າ ຝູງຫມູ່ແມງວັນຂຽວບິນຕອມ   ຂີ້ໄຂ່ຂາວຊິເຕັມແຂ້ວ

ອັນນີ້ ເຮົາຂໍໂຍມຍອມແລ້ວ   ປັນຍາບໍ່ທັນເກິ່ງ ແທ້ນາ

ຈາແຕ່ ພໍເບົາບາງແບບນີ້   ກໍ່ຄາຄ້າງຕອບບໍ່ເປັນ ແທ້ແລ້ວ

+ ແຕ່ນັ້ນ ສົງຄະເຈົ້າ   ກ້ຳຝ່າຍເມືອງຕານີ

ຫນ້າຫລ່າ ທັງເຫລືອໃຈ   ອ່ອນໂຍມຢຳຢ້ານ

ກໍ່ບໍ່ ມີໃຜພ້ອງ   ພານຄວາມສະນາຫງົດຢູ່ ແທ້ແລ້ວ

ໃຜກໍ່ຫາກ ຕົກຄະມະຄ້າງ   ລືມເວົ້ານິ້ງເຊົາ ແທ້ດາຍ

+ ກໍ່ທໍ່ ໃຈຫຸ່ມຊ້າ   ໂຍມອ່ອນຍິນຂາມ ມາກແລ້ວ

ເພື່ອວ່າ ຄູພີລັງຈາ   ນາບຄວາມເຕັງໄວ້

ບັດນີ້ ເຮົາກໍ່ຫາກມີໄຊແພ້   ຈັດເອົາສິບສ່ວຍ ຈິງແລ້ວ

ແຕ່ນັ້ນ ສົງຄະກ້ຳ   ເມືອງຕານີເສົ້າຫມື່ນຫມອງ ແທ້ແລ້ວ

+ ໃຜກໍ່ບໍ່ພົບ ພະເນດຢຽມ   ແລລ່ຳຄຳພີລັງ ໄດ້ແລ້ວ

ກໍ່ບໍ່ ໄຂວາຈາສົງ   ຕອບມາພໍ້ນ້ອຍ

ແຕ່ນັ້ນ ກະນິດຖາພີລັງເຈົ້າ   ຈັດເອົາສິບສ່ວຍ

ເຂົາກໍ່ເລົ່າ ປາກບໍ່ໄດ້ | ໂດຍເຈົ້າຊູ່ຄືນ

+ ເຂົາກໍ່ບໍ່ໄດ້ຢືນຍັດທ່ານເຈົ້າ | ພະຄູໃຫ່ຍຄຳພີລັງ ຫັ້ນແລ້ວ

ໃຜບໍ່ມີ ຢືນຍັດ | ອ່ອນໂຍນກົວຢ້ານ

ຫມົດທຸກອັນ ເອົາໃຫ້ | ຕາມຄວາມທີ່ໄດ້ວ່າ

ອັນວ່າ ສະເພົາຫ້າຮ້ອຍ | ກໍ່ຍໍມວນມອບເຄນ

+ ບໍ່ໃຫ້ ເສຍສັດຈະແທ້ | ສິນດັ່ງຄວາມພະນັນ

ພະຫາກມີ ໄຊວານ | ຂໍມອບເວນຖວາຍເຈົ້າ

ແຕນັ້ນ ຊາວສະເພົາກໍ້ | ເມືອງຕານີຕົກຂະມ່າ

ເພື່ອວ່າ ເພື່ອນໂຈດແພ້ | ເສຍຂອງແທ້ມາກຫລາຍ ແທ້ແລ້ວ

+ ແຕນັ້ນ ເຂົາກໍສ່ວາງພ້ອມ | ຢືນຂອງອອກສະເພົາຫມົດ

ບໍ່ໃຫ້ວາງອັນໃດ | ອຽດອຳເອົາໄວ້

ຂອງທຸກອັນ ຍໍໃຫ້ | ບໍ່ທານມີຄຳຕໍ່

ໃນສະເພົາຫ້າຮ້ອຍ | ກອງໄວ້ອະເນກນອງ

+ ເມື່ອນັ້ນ ແສນສ່ຳຂ້າ | ຊຸນຫມື່ນທະວາດີ

ເຂົາກໍ່ ມວນກັນໄປ | ຫາບຫາມມາໄວ້

ເຂົາກໍ່ເລົ່າ ຢືນຂອງເຂົ້າ | ເມືອໃນເມືອງໃຫ່ຍ

ເຖິງຂ່ວງຄຸ້ມ | ໂຮມໄວ້ກ່າຍກອງ

+ ມີທັງ ກຳມະຍີພ້ອມ | ແຮເທດເງົາງາມ

ກັບທັງ ເງິນຄຳຫລາຍ | ຫມື່ນຫາມທັງແກ້ວ

ເຂົາກໍ່ເລົ່າ ແຊວງຍ້ອງ | ຄຳພີລັງສ່ວາງ

ດູດັ່ງ ບຸນມາກລົ້ນ | ສິນພານເຈົ້າເກື່ອງອິນ ແທ້ແລ້ວ

+ ຊາດທີ່ຄົນຢູ່ໃນລຸ່ມຟ້າ　ພື້ນໂລກເຮົາເຫັນ ຢູ່ນີ້
ເວົ້າເລື່ອງແນວ ເຊີງພະຫຍາ　ແມ່ນບໍ່ມີໃຜແພ້
ໃຜຊິດຶງ ເອົາພື້ນ　ທໍລະນີມາໂຈດ ກໍ່ຕາມທ້ອນ
ໃຜຊິຟື້ນ ແຜ່ນຟ້າ　ມາສື້ກໍ່ບໍ່ກົວ ດອກນາ
+ ຢຽວວ່າ ເຈົ້າຈັກພັນບໍ່ແພ້　ຊິຍອມມອບວາງເມືອງ
ເພື່ອນດາຍ

ບັດນີ້ ເປັນແຕ່ສົມພານພະ　ຊິພາບມານ ມວນແພ້
ເມື່ອນັ້ນ ທະວາດີທ້າວ　ເລີຍຫົວຊົມຊື່ນ
ເພາະເພື່ອ ມີໂຊກຍ້ອນ　ຄຳພີລັງເຈົ້າມາກມູນ
+ ແຕ່ນັ້ນ ສຸລິໂຍເຄື່ອນຄ້ອຍ　ຄ້າຍຄ່ຳລົງແລງ
ຝູງຫມູ່ສັງ ເມືອງຕານີ　ຟ້າວເລີກລາລົງຫ້ອງ
ກໍ່ເລື່າ ສົນໆຍ້າຍ　ສະຫນາມຫລວງຫນີຈາກ
ເມືອບ່ອນ ສະເພົາຈອດຢັ້ງ　ກໍ່ລົງເຍື້ອນນັ່ງເຊົາ ຫັ້ນແລ້ວ
+ ຄັນວ່າ ເຖິງເມື່ອວັນຫນ້າແລ້ວ　ຊາວສະເພົາເລີກລາຫນີ
ເຂົາກໍ່ຈື່ງ ເມືອໂຮງຫລວງ　ກາບລາພະຍາເຈົ້າ
ບັດນີ້ ຝູງຂ້າຊິໄດ້ລາພະອົງເຈົ້າ　ເຫນືອຫົວຢັ້ງຂະຫນ່ອມ ກ່ອນ
ຊິໄດ້ກັບກ່າວປື້ນ　ຄືນເຂົ້າສູ່ເມືອງ ພະເອີຍ
+ ພະຈື່ງ ສຸກສະຫວັດຢູ່ເລື້ອຍ　ສະຖິດນັ່ງສະເຫວີຍເມືອງ
ຫັ້ນທ້ອນ

ອັນວ່າ ໂລຄາສົງ　ຢ່າມີມາຕ້ອງ
ຢ່າໃຫ້ ເຄືອງຄຳຮ້ອນ　ປະການໃດຈັກສິ່ງ ນັ້ນເນີ
ຮ້ອຍເອັດ ປະເທດທ້າວ　ມານ້ອມສ່ວຍໄຊ ແທ້ເນີ

+ ຟູງຊ້າ ກໍຫາການຳຂອງພະຍ່ຳເກົ້າ ນະຄອນລາດຕານີ

ມາແລ້ວ

ວ່າຈິ ເອົາມາພົນ ຍາດເອົາເມືອງບ້ານ
ບັດນີ້ ເສຍໄຊແລ້ວ ຖຽງກັນບໍ່ແພ້ເພື່ອນ
ຈຶ່ງໄດ້ ຍໍຍົກໃຫ້ ຖວາຍໄທ້ພໍ່ພະຍາ ນີ້ແລ້ວ
+ ເມື່ອນັ້ນ ພະບາດເຈົ້າ ເມືອງໃຫຍ່ທະວາດີ
ພະກໍ່ ໄຂວາຈາ ຕໍ່ຊຸມສະເພົາຄ້າ
ບອກວ່າ ດີແລ້ວ ຈົ່ງໃຈສັດຊື່
ຄາວເມື່ອ ພົນບໍ່ແພ້ ກໍຍອມໃຫ້ງ່າຍດາຍ
+ ບັດນີ້ ພວກທ່ານທ້າວ ຊາວປະເທດຕານີ
ຈິໄດ້ ພາກັນຫນີ ຕ່າວຄືນເມືອບ້ານ
ຂໍໃຫ້ ໄປດີທ້ອນ ຢ່າມີໄພບັງບຽດ
ເຮົາ ຂໍຝາກຄວາມຖາມຂ່າວຂໍ້ ສະຫາຍແກ້ວພູ້ຢູ່ໄກ ແດ່ເນີ
+ ຂໍສະຫາຍຢ່າຮ້າຍ ກົ້ວໂກດໂກທາ
ຂໍໃຫ້ ຖືວ່າ ເປັນທີໃຜ ເມື່ອມັນຊິວຽນປີ້ນ
ບໍ່ຊະນະ ໃນຄາວນີ້ ຈຶ່ງລອງກັນເທື່ອໃຫມ່
ປະເທດເຮົາ ຈື່ມໃກ້ ຊິຫຽວພໍ້ຢູ່ເລີງ ດອກແລ້ວ
+ ຄ້ອມວ່າແລ້ວ ເອົາກາບປະນົມກອນ
ຊາວສະເພົາກັບ ຕ່າວຄືນເມືອບ້ານ
ແຕ່ນັ້ນ ເອົາກໍ່ລາລົງຫ້ອງ ຫໍປາງພູວະນາດ
ເອົາກໍ່ເລົ່າ ເມືອສູ່ຫ້ອງ ສະເພົາແລ້ວເບີກໄປ
+ ສະເພົາຫ້າຮ້ອຍ ດັ່ງສະນັ່ນນັນເມືອງ

ດີແກ່ ລົມພານພັດ   ແຜ່ນກະໂດງນຳຍູ້
ສະເພົາ ເດີນຜ້າຍ   ຫນີໄປໄກຝັ່ງ
ສະເພົາ ຫ້າຮ້ອຍ   ໄປພ້ອມພ່ຳກັນ
+ ພໍ່ດູ ລົມປີ້ນເປື້ອງ   ເປື້ອງປີ້ນເສົາກະໂດງ ພຸ້ນເຢີ
ເຂົາກໍ່ເອົາກັນກັບ   ອ່ວາຍສະເພົາເມືອບ້ານ
ພໍ່ດູ ທົມໆນ້ຳ   ຕີຟອງເຟືອນຟາດ ພຸ້ນເຢີ
ດີແຕ່ ລົມປີ້ນເປື້ອງ   ປົວຍູ້ສົ່ງໄປ
+ ພໍ່ດູ ຍາບໆຍ້າຍ   ສະເພົາໄຕ່ຕາມກັນ
ລູດໆໄປເປັນແຖວ   ຕໍ່ກັນຕາມສົ້ນ
ແຕ່ນັ້ນ ຝູງຫມູ່ຊຸມສາວນ້ອຍ   ທະວາດີເມືອງມຶງ
ພາກັນ ຫລີງລ່ຳຢ້ຽມ   ສະເພົາຜ້າຍເຜີ້ນໄປ
+ ເຂົາກໍ່ເອີ້ນສົ່ງສ້ອຍ   ເວົ້າສຽດຊາວສະເພົາ
ໂອນໍ ! ຄິດວ່າສຽມດວງດີ   ລັບຄາຍຄົ້ນກາ
ເອົາເຂັ້ນດີ ພໍແລວ   ຈຶ່ງເອົາເດີນດັ້ນດ່ວນ ແຫ້ດາຍ
ຫວັງຊິຊ້ວານເອົາຫີນແມ່ຊາງ   ເມືອງເທດທະວາດີນີ້ຈຶ່ງຫນີ ພີ່ເອີຍ

+ ຫວັງຊິແບກເອົາຫມົດແຜ່ນພື້ນ   ເມືອງຊື່ທະວາດີ
ເອົາໄປເມືອງຕານີ   ນັ່ງປອງເປັນເຈົ້າ
ບັດນີ້ ສຽມຄົ້ນທຽມ   ສືບລົ້ງພັດເປ່ບ້ານ ເສຍນໍ
ຄິດບໍ່ ສົມດັ່ງແມ້ງ   ຊິອາຍຫນ້າຕ່າວເມືອ ແລນໍ
+ ເຫັນຮອຍມືຊ່າງໄມ້   ເມືອງທະວາດີແລ້ວບໍ
ມັນບໍ່ເຄີຍ ຂຸດດິນ   ດັ່ງສຽມພະອວນອ້າຍ

ເຄີຍແຕ່ ວົນນຳໄມ້ ຟັນໄປດວຍເລື່ອຍ

ເມື່ອຖືກ ບັດຢູ່ເລື້ອຍ ກໍລອງຫລົ້ນແບກສຽມ ພີເອີຍ

+ ຄົນວ່າເຫັນຄົກແລ້ວ ໃຫ້ຈຳຈື່ຢ່າລືມ ແທ້ເນີ

ວ່າຊິເອົາ ທະວາດີ ບໍ່ງ່າຍຄືກິນກ້ວຍ

ຊາດທີ່ ຕີນວຍນີ້ ລະວັງຕົວໃຫ້ຖ້ອນຖີ່

ຄັນບໍ່ເຮັດດັ່ງນີ້ ຊິອາຍໜ້າຕ່າວເມືອ ນັ້ນແລ້ວ

+ ແມ່ນວ່າ ສຽມບ່ານເປ້ ຄົນລຸ່ຍບໍ່ກິນແໜງ ນ້ອງເອີຍ

ທໍ່ວ່າ ສຽມຫລັກຂອງຊາວເມືອງຕານີ ບໍ່ແກ່ນຄືຂອງນ້ອງ

ຈະຕ້ອງ ຄືນເມືອບ້ານ ເອົາໄປຊຸບອີກກ່ອນ

ຕົວພີ່ຊາຍ ກໍ່ຕ້ອງຊຸບອີກດ້ວຍ ເພາະຄາວນີ້ແມ່ນບໍ່ເຄີຍ
ນ້ອງເອີຍ

+ ເມື່ອນັ້ນ ພວກບ່າວນ້ອຍ ຂານຕອບຊຸມສາວ

ຫີນຢູ່ເມືອງທະວາດີ ແກ່ນແຮງແຂງກ້າ

ເຮັດໃຫ້ສຽມ ອີ່ຣຽມເປ້ ຊຸດລົງຈົນວ່າບ່ານ

ຊິໄດ້ ເມືອຊຸບໃຫ້ ຄົມກ້າກວ່າຫລັງ ນ້ອງເອີຍ

+ ເທື່ອນີ້ ຫລັກຊຸບແລ້ວ ກໍຫາກບ່ານນຳຫາງ ນ້ອງເອີຍ

ພີ່ວ່າ ລອງໄປເຫີງ ອາດຊິມີຄົມກ້າ

ຄ່ອຍຢູ່ດີ ເຢັ້ນອງ ສາວທະວາດີຜູ້ກ້າກັ້ນ ຣຽມເອີຍ

ຢ່າໃຫ້ ມີໂລກຮ້າຍ ບຽນເນື້ອແຕ່ງພະນາງ

+ ພີ່ຈັກ ກັບຕ່າວປິ້ນ ຄືນສູ່ຕານີ ກ່ອນແລ້ວ

ເທື່ອນີ້ ຫລືອວິໄສ ພີ່ຫາກມີການຟ້າວ

ພີ່ຈົ່ງ ເອົາຕີນດັ້ນ ຈຳຈອນເຈຍລະຈາກ

ໃຫ້ນ້ອງອຶດຢູ່ຢື້ງ　　ຊາມຖ້າພີ່ຕ່າວມາ ແດ່ເນີ

+ ອັນໜຶ່ງ ຢ່າໄດ້ໃຫ້ຜົວຮັກນ້ອງ　　ປ່ອຍດ່າຊົ້ວທຣຽມ ແດ່ເນີ

ວ່າພວກທຣຽມມາດຶງ　　ຊ່ວງຊີງເອົານ້ອງ

ໃຫ້ນ້ອງວາຈາຕ້ານ　　ຂໍພອນອະນຸຍາດ

ແລ້ວເລົ່າ ໃຫ້ນ້ອງເອົາໝາກກະໂຕ້ນ　　ວາງໃຫ້ແກ່ເຂົາ ແທ້ເນີ

+ ແຕ່ນັ້ນ ສະເພົາລ່ວງຍ້າຍ　　ອອກຈາກທະວາດີ

ດີແຕ່ ແຊວງເຂົາ　　ໂຫ່ໂຮທັງຮ້ອງ

ເມື່ອນັ້ນ ຊາວສະເພົາຄ້າ　　ເມືອງຕານີເລີຍຈື່ມ

ສ່ວາງເວົ້າ　　ເພື່ອນພັ້ນຊູ່ລຳ

+ ອັນວ່າ ທະວາດີທ່ານທ້າວ　　ຜະຫຍາມາກເຫລືອຫລາຍ
ຈິງແລ້ວ

ແມ່ນວ່າ ເຮົາຊິພົບກັນໄປກັນມາ　　ກໍ່ບໍ່ປຸນປອງແພ້

ພົດແຕ່ ມາພົບທ້າວ　　ເມືອງທະວາດີໄດ້ສອງເທື່ອ
ນີ້ແລ້ວ

ເຂົາກໍ່ ຍັງຍ່ອມແພ້　　ເສຍຂອງແທ້ມາກຫລາຍ
ເຈົ້າເອີຍ

+ ກັບທັງ ເງິນຄຳແລະເຄື່ອງແກ້ວ　　ຂອງດີມາກເຫລືອຫລາຍ

ຈິນວ່າ ເຕັມສະເພົາກໍ່ຈຳເປັນ　　ຕ້ອງມອບມວນຍໍມ້ວນ

ໃຜຢ່າໄດ້ ໄປຫວນທ້ອນ　　ເມືອງທະວາດີຊິວາຍຄອບ
ຈິງດາຍ

ຕັ້ງວ່າ ດັບບໍ່ມ້ວ　　ຊິອາຍໜ້າເພື່ອນຫຍັນ　ເຈົ້າເອີຍ

+ ຄັນວ່າ ສິມມະນາດເຈົ້າ　　ເມືອງເທດຕານີ

ຄຶດຄະນຶງ ໃນໃຈ   ບໍ່ຕິງຕົວໄດ້
ອຸກອັ່ງໃຈ ຈົນແຄ້ນ   ມູມໃນເວົ້າບໍ່ອອກ
ບໍ່ຊ່າງ ແນວຊິແກ້   ລັກອາຍໜ້າດັ່ງຊິຕາຍ ນັ້ນແລ້ວ
+ ເໝືອນນົກຍາງອ່ອນນ້ອຍ   ຊິຕົວະສວາບກິນຢາ ນັ້ນແລ້ວ
ຕົວບໍ່ມີ ປັນຍາ   ທໍ່ປາລອຍນ້ຳ
ຄິດຊິກິນເຂົາໃຫ້   ເສຍເມືອງມວນມອບ
ຕົນກໍ່ຫາກບໍ່ມີພະຫຍາມາກລົ້ນ   ຊິພັນສູ້ຕໍ່ກັນ ແທ້ດາຍ
+ ກໍ່ຫາກເປັນທີ່ເສຍໜ້າແທ້   ເໝືອນດັ່ງດຽວກັນ
ໃຜບໍ່ຄວນອາຈາ   ຍົກແຕ່ໂຕມາອ້າງ
ວ່າຊິກິນເຂົາແທ້   ທະວາດີເມືອງໃຫຍ່
ບັດນີ້ ກິນບໍ່ໄດ້   ພັດອາຍໜ້າ ຕ່າວຄືນ ແທ້ແລ້ວ
+ ດີແກ່ ລົມເປົ່າເປື້ອງ   ສະເພົາເລື່ອນລອຍໄປ
ກໍ່ຫາກ ຫລາຍວັນຄືນ   ລ່ວງທະເລໄປໜ້າ
ກໍ່ຈຶ່ງ ເມືອເຖິງບ້ານ   ເມືອງຕານີທີ່ຕົນຢູ່
ເຂົາຈຶ່ງ ເມືອຂາບໄຫວ້   ທູນທ້າວພໍ່ພະຍາ
+ ນຳຄວາມເຖິງທ່ານທ້າວ   ໄຂຂ່າວວາຈາ
ບັດນີ້ ສົມມະນາເຮົາ   ໄປໂຈດເຂົາຄາວນີ້
ກໍ່ບໍ່ມີແນວໄດ້   ທັງເຂົາໄຊຊະນະໃຫຍ່
ຕັ້ງວ່າ ເສຍເຄື່ອງລົ້ນ   ຈົນກ້ຽງຊູ່ສະເພົາ ທ່ານເອີຍ
+ ໃນສະເພົາຫ້າຮ້ອຍ   ຈຳໄດ້ມອບເຄນເຂົາ
ເພາະວ່າ ປັນຍາເຮົາ   ແມ່ນບໍ່ທັນເຂົາແທ້
ມີແຕ່ ເຂົາຖາມສູ້   ເຮົາຄາບໍ່ຮູ້ຕອບ

ເຂົາຈຶ່ງ ເປັນຝ່າຍແພ້ ພວກເຮົາແກ້ບໍ່ທັນ ພະເອີຍ

+ ເມື່ອນັ້ນ ຕຶກຂະມ່າແຫ້ ພະຍາໃຫ່ຍຕານີ

ເຈົ້າກໍ່ ຟູມຟາຍຟົດ ໃສ່ສົມມະນາເຈົ້າ

ພະກໍ່ຟັງ ຄຳເວົ້າ ຈາເຂົາທັງຈື່ມ

ມາວ່າ ຕົວະຍົວະໃຫ້ ເສຍແຫ້ ສິ່ງຂອງ ນີ້ເດ

+ ອັນວ່າ ເງິນຄຳມີຄ່າລົ້ນ ແກ້ວປະເສີດຂອງດີ ເຮົານັ້ນ

ຕັ້ງວ່າ ເຕັມສະເພົາຫລວງ ອະເນກລອງເຫລືອລົ້ນ

ວ່າຊິ ເອົາໄປຕັ້ງ ພັນເອົາເມືອງສ່ວຍ

ຕັ້ງວ່າ ເຕັມສະເພົາຫ້າຮ້ອຍ ເສຍສ້ຽງບໍ່ຫລໍ

+ ຕັ້ງວ່າ ພາກັນແຖທົວຫລ້ອນ ປອກໂລ້ນ ເປັນສິ່ງຢູ່ຄຽວຄາຍ ແຫ້ນໍ

ຮູ້ທໍ່ ກິນເພນທັງຈັງຫັນ ອອດໂຕລົມອ້າງ

ຢຽວວ່າ ຈັກໄປເປັນພົ້ນ ລືມຄວາມອັນປາກກ່າວ

ຄາວເມື່ອເວົ້າແຕບ້ານ ລືແຫ້ກໍ່ຈຶ່ງຈຳ ດອກນາ

+ ຄັນວ່າ ບໍ່ລືມຄວາມທີ່ເວົ້າ ກໍ່ອົດອ່ອນໂຍນຄວາມ ເສຍແມ

ຢ່າໃຫ້ເສຍຫິນຮອນ ມາກມາຍແນວນັ້ນ

ອັນນີ້ ທຽມດັ່ງເອົາຫີນກ້ອນ ແຂວນຄໍເປັນປ່ອມ ນັ້ນແລ້ວ

ຍາມເມື່ອ ຖິ້ມໃສ່ນ້ຳ ຈົມປັ້ງກໍ່ບໍ່ເຫັນ ເຈົ້າເອີຍ

+ ຈັກເອົາຫີນໃຫ້ເລື່ອຍ ແຮງຊິຕື່ມຄວາມອາຍ ແລນໍ

ບໍ່ມີຫວັງ ເອົາຫີນ ຕ່າວຄືນມາໄດ້

ເປັນດັ່ງ ບາຍໂຍນຖິ້ມ ລົງໃນນະທີໃຫ່ຍ ພາຍພຸ້ນ

ຕັ້ງວ່າ ບໍ່ມີເສດຄ້າງ ບຸງຊາຕ່າວຄືນ ນັ້ນແລ້ວ.

19– ຊຽງໝ້ຽງໄປເລວເສິກ

+ ບັດນີ້ຈັກກ່າວເຖິງ ພະບາດເຈົ້າ ພະຍາໃຫ່ຍປັນຈາ ກ່ອນແລ້ວ
ພະຢາກ ໄປຕີທະວາດີ ຈູດເພພັງມ້າງ
ບັດນີ້ ກູຈັກຕັດຫົວເຈົ້າ ທະວາດີ ຜູ້ໂອ້ອວດ ກ່ອນແລ້ວ
ຝູງໝູ່ ເມືອງມຶງບ້ານ ຊິຈຳໃຫ້ສ່ວຍໄຣ ແທ້ດາຍ
+ ເມື່ອນັ້ນ ພະຍາກໍ່ຈຶ່ງບົນບອກໃຫ້ ຂຸນໃຫ່ຍມາໂຮມ
ທັງເລົ່າ ເຕີນໂຍທາ ຊູ່ພາຍມີ້ຊາ
ເຂົາກໍ່ ໂດຍພະກະສັດໃຫ້ ມາໂຮມທຸກໝູ່
ພະກໍ່ ບົນບອກໃຫ້ ຈຶງແຈ້ງຊູ່ອັນ
+ ບັດນີ້ ສູຈົ່ງເຣວຣີບຟ້າວ ຕົກແຕ່ງພະລັນເປືອງ
ທ່ຽວເທີ້ນ
ພວກໝູ່ ຂຸນຊາວຂຸນ ໃຫ້ແຕ່ງເຄົາດາທ້າງ
ອັນວ່າ ພົນແພລັ້ນ ມານວນຄຸມຄັ່ງ
ໄຫລຫລັ່ງລົ້ນ ໂຮມເຂົ້າສູ່ເມືອງ
+ ແລ້ວເລົ່າໄປບໍ່ຊ້າ ຫາໂຊກຍາມດີ
ປະຄືໄຊໄກວ ກ່ອນອວນພົນລ້ານ
ພໍ່ດູ ຄົນຫລາມລົ້ນ ນອງມາຄັບຄັ່ງ ພຸ້ນເຍີ
ກຸນຊະໂລ ອອກໜ້າ ເດີນກ້າວກ່ອນພົນ
+ ຝູງໝູ່ ແສນສໍ່າມ້າ ທີລະແທ່ນນຳຫລັງ
ສຽງ ບາດຕີນມັນດັງ ສະນັ່ນທັງສຽງຣ້ອງ
ດີແຕ່ ປະຄືແດງກັ້ງ ລົມໄກວເປື້ອງປືນ

ເຂົາກໍ່ ໄປກ່ອນໜ້າ	ຂອນເຈົ້າພະຍອດເມືອງ
+ ກອງທັບ ໄຫລເລື່ອນຍ້າຍ	ຂ້າມປ່າໄພໜາ
ທັງໝູ່ ເດີນຈອນລັດ	ປ່າດົງດອນໄມ້
ກໍ່ຫາກ ຫລາຍວັນໄດ້	ຫລາຍຄືນມີມາກ
ກໍ່ຈຶ່ງໄປຮອດ ເມືອງທະວາດີແຫ່ງຫອງ	ເມືອງກວ້າງໃຫ່ຍຫລວງ
+ ເມື່ອນັ້ນ ຝູງປະຊາຊາດເຊື້ອ	ຜູ້ເນົາຢູ່ແດນເມືອງ
ເຂົາກໍ່ ແຊວງສຽງ	ປະຫລາດໃຈເລີຍທ້ວງ
ຈັກແມ່ນຄົນເມືອງໃດແທ້	ດູຫລາຍອະນັນເນກ
ຮ້ອຍທີ່ວ່າ ແມ່ນເສິກຕ່າງບ້ານ	ມາແຫ່ບໍ່ສິງ ເຈົ້າເອີຍ
+ ເຂົາຈັກ ມາເປັ້ນາງ	ຊີງຍາດເມືອງເຮົາ ບໍ່ຢ່າແລ້ວ
ຄວນທີ່ເຮົາ ເມືອເມືອງຫລວງ	ຂາບທູນພະຍາເຈົ້າ
ຄ້ອນວ່າ ເຂົາຈາແລ້ວ	ພະລັນໄປເຣວຣີບ
ດັ້ນດຸ່ງ ຜ້າຍ	ເຖິງເຫົ້າຮອດເມືອງ
+ ເຂົາຈຶ່ງເມືອ ຂາບໄຫວ້	ມະຫາລາດພະຍາເມືອງ
ເຂົາກໍ່ວາຈາໄຂ	ຊູ້ອັນເອົາຕານ
ອັນນີ້ ເສິກໃຫ່ຍຫລວງແທ້	ເມືອງໃດມາຮອດ ເຮົານີ້
ຮ້ອຍທີ່ຈັກເປັ້ນາງ	ເມືອງບ້ານແຫ່ງເຮົາ ບໍ່ຢ່າແລ້ວ
+ ຕັ້ງຫາກ ຫລາຍມາກລົ້ນ	ເປັນໂກດກືຄົນ ແທ້ແລ້ວ
ຖືແມ່ນ ກອງທະຫານເສິກ	ຕ່າງເມືອງມາເຕົ້າ ພະເອີຍ
ເມື່ອນັ້ນ ພະຍາຫລວງເຈົ້າ	ຕົກໃຈຟ້າວຟັ່ງ
ເກັງທໍ່ ຈັກເສຍແຫ່ງຫອງ	ເມືອງບ້ານທີ່ຕົນ ຫັ້ນແລ້ວ
+ ພະກໍ່ຈຶ່ງ ຕຶດຕ່ອຍຄ້ອງ	ໜ່ວຍໃຫ່ຍຄູນເມືອງ

ຟັງຍິນ ສຽງເມືອງມັນ	ຊຸມຫລັ່ງມາໂຮມເຕົ້າ
ເມື່ອນັ້ນ ແສນເມືອງຜູ້	ວັນທາທູນບາດ
ຈັກວ່າ ເປັນເຫດຮ້ອນ	ການບ້ານເຍື່ອງໃດ ພະເອີຍ
+ ແຕ່ນັ້ນ ພະບໍ່ຊ້າ	ຈາຕໍ່ແສນເມືອງ
ບັດນີ້ ເສິກເມືອງໃດ	ລ່ວງມາເຖິງພີ້
ຮ້ອຍທີ່ ຈັກມາເພພ້າງ	ເມືອງເຮົາຊິງຍາດ ບໍ່ຮູ້
ຫລືວ່າ ຈັກຫລັ່ງເຕົ້າ	ມາເຂົ້າສ່ວຍໄຮ ບໍ່ຮູ້
+ ແຕ່ນັ້ນ ພະບາດທ້າວ	ຕຶກແຕ່ງປຸ່ນແປງ
ພະກໍ່ເອົາ ກຳລັງມາ	ແວດລະວັງວຽນລ້ອມ
ຮັກສາດີ ທາງເຂົ້າ	ລະວັງທັງທາງອອກ
ຢ່າໃຫ້ ໃຜລ່ວງເຂົ້າ	ເມືອງບ້ານແຫ່ງເຮົາ ທ່ານເອີຍ
+ ແຕ່ນັ້ນ ແສນເມືອງປາກກ່າວຕ້ານ	ຮັບຮອງຢ່າງແຂງແຮງ
ຂໍໃຫ້ ຈອມເມືອງຄຶດ	ຢ່າກິວເກັງຢ້ານ
ຂໍຈົ່ງ ປົງຄວາມເວົ້າ	ວາຈາຕ້ານສັ່ງ ທ່ຽວເທີ້ນ
ຂ້າຈັກ ໄປຕໍ່ຕ້ານ	ເອົາໃຫ້ຊະນະມັນ
+ ແຕ່ນັ້ນ ພະສັ່ງໃຫ້	ຕຶກແຕ່ງດາດີ
ທ່ານຈຶ່ງໄປໂຮມເອົາ	ໄພ່ເມືອງຫລາຍບ້ານ
ກຸ່ມຊະໂລ ທັງມ້າ	ກໍ່ໂຮມເອົາມວນມາກ
ຝູງຢ່າງຕີນກໍ່ໃຫ້	ໂຮມໄວ້ອະເນກນອງ
+ ທັງໃຫ້ເຝິກແອບໄວ້	ວິຊາຊ່າງເຊີງຮົບ
ອາວຸດ ມີໃນມື	ຄູ່ ຄົນຍາຄາງ
ຝູງຫມູ່ ຄົນທານໃຫ້	ໄປຕາມຊູ່ເຄື່ອງ

ໃຫ້ຖື ທອກຄາຍວ້າວ
+ ແຕ່ນັ້ນ ພະກໍບິນບອກແຈ້ງ
ຄັນວ່າ ໃຜຜູ້ຍັງແຂງຂັດ
ແຕ່ນັ້ນ ແສນເມືອງຜູ້
ອັນວ່າ ຊຽງຫມ້ຽງນັ້ນ
+ ຫລືວ່າ ຈັກໃຫ້ທ່ານຢູ່ບ້ານ
ຂໍຈົ່ງ ກູມາຕັດ
ເມື່ອນັ້ນ ທະວາດີຫ້າວ
ແລ້ວຈຶ່ງ ບິນບອກຂໍ້
+ ອັນວ່າ ຊຽງຫມ້ຽງນີ້
ຄວນໃຫ້ ມັນໄປຄິດ
ລາງເທື່ອ ມີທາງແກ້
ຊະນະ ແບບບໍ່ເສຍເລືອດເນື້ອ
+ ຄັນວ່າ ຊຽງຫາກຮູ້
ອາດຈະມີ ຄວາມຫວັງ
ຫລືວ່າ ເປັນໃດແທ້
ຖ້າຫາກ ຍັງຍາກແທ້
+ ແຕ່ນັ້ນ ພະບາດເຈົ້າ
ຄວນທີ່ ໃຫ້ຊຽງໄປ
ແມ່ນວ່າ ຊຽງຫມ້ຽງເວົ້າ
ໃຫ້ສູ່ເຮັດ ດັ່ງກູກ່າວເວົ້າ
+ ແຕ່ນັ້ນ ແສນເມືອງທູນບາດໄທ້

ປີນພ້ອມຊູ້ຄົນ ທ່ຽວເຫັນ
ໂດຍອາດຍາຕັດ
ອ້າຕາຍນໍລະນ້ຽມ
ລາຊາບິນບອກ
ຈອມເຈົ້າຊິໃຫ້ໄປ ແທ້ລື ?
ເຝົ້າບາດຕາມຕີນ ພະນັ້ນ
ບອກມາຄຳແຈ້ງ
ຣົມເພິງຄະນິງມາກ
ຈາຕ້ານຕໍ່ຂຸນ ຫັ້ນແລ້ວ
ພະຫຍາກໍລືມປະມານ ແທ້ດາຍ
ເບິ່ງຕາມພະຫຍາໄວ້
ໂດຍອາງເລ່ລ່ຽມ
ຮັກສາໄດ້ປະເທດເຮົາ
ເຫັນຮ່ອມແນວທາງ
ປາບມານລົງໄດ້
ພາຍລຸນຈຶ່ງຄິດເບົາ
ຈຶ່ງໄປຮ້ອນຮອດຊຽງ ທ່ານເອີຍ
ຈາຕໍ່ແສນເມືອງ
ກ່ອນພົນອວນຫນ້າ-
ອັນໃດຢ່າໃຫ້ລືມ ມັນເນີ
ດຽວນີ້ຈື່ຈຳ ແທ້ເນີ
ຮັບວ່າໂດຍໆ

ໃຜຫ່ອນກາຍຄຳສອນ　　　　ພະຍອດເມືອງເປັນເຈົ້າ
ເມື່ອນັ້ນ ແສນເມືອງເຈົ້າ　　　　ລາລົງເຮືອຮີບ
ເມືອສູຫ້ອງ　　　　ເຮືອນບ້ານແຕ່ງດາ
+ ບັດນີ້ຈັກກ່າວເຖິງ ກະນິດຖານ້ອຍ ນ້ອງພະບາດພະຫຍາດີ
ກ່ອນແລ້ວ

ພະຍາ ກໍ່ເອົາບວດເລີຍເອົາຫົດ　　　　ເພື່ອໂຈດກັນວັນນັ້ນ
ພະຍາ ໃສ່ຊື່ວ່າ ຄຳພິລັງເຈົ້າ　　　　ລາຊະຄູອົງອາດ
ພະຍາ ກໍ່ເລົ່າຈຳໂຈດຕໍ່ສັງຄະເຈົ້າ　　　　ເມືອງຕານີແພ້ພ່າຍເມືອ
ຫັ້ນແລ້ວ

+ ພະໄດ້ ໄປໂຈດແພ້　　　　ພະສິງຝ່າຍເມືອງຕານີ ແລ້ວນັ້ນ
ເຈົ້າກໍ່ເລົ່າ ເລີຍລາສິກ　　　　ເມື່ອວັນຫລັງນັ້ນ
ກໍ່ບໍ່ມີໃຜເອີ້ນ　　　　ເປັນຈານປານບໍ່ບວດ ອີ່ສັງແລ້ວ
ເອົາກໍ່ ເລົ່າສ່ວາງເອີ້ນ　　　　ຊຽງຫມັນຽງດັ່ງແຕ່ຫລັງ ນັ້ນແລ້ວ
+ ກໍ່ທໍ່ ເນົາຢູຫ້ອງ　　　　ສະຖານແຫ່ງເຮືອນຕົນ
ຊົມສະເຫນຫາ　　　　ຊູ່ວັນເຜືອຝັນ
ນັບແຕ່ ສະເຫນຫາຊູ້　　　　ສາວຮາມແມ່ຮ້າງຖ່າວ
ເອົາກໍ່ ຫາກດົ່ນໆດົ້ນ　　　　ດອມເຈົ້າຊູ້ຄົນ
+ ຕັ້ງຕໍ່ ເປັນທີ່ຮັກບໍ່ແລ້ວ　　　　ນຳບ່າວຊຽງງາມ ແທ້ແລ້ວ
ຊູ້ຄົນກໍ່ວ່າ ຈັກເອົາເປັນຜົວຂ້ອນ　　　　ຮ່ວມນອນນຳແທ້
ເອົາກໍ່ ລ່ຽນໆກັ້ນ　　　　ໃຈກະສັນອົກສັ່ນ ຊິຕາຍແລ້ວ
ກໍ່ເພື່ອ ຄວາມຮັກໄດ້　　　　ດອມເຈົ້າອ້າຍບ່າວຊຽງ
ແທ້ແລ້ວ

+ ຈິ່ມຊິເປັນປ່ວງບ້າ   ປະເປົ່າແລງວາຍ
ໂພຊະນັງປະ   ບໍ່ກິນຍັງເຂົ້າ
ທ້າວກໍວາຈາຕ້ານ   ດອມສາວອ້ອຍອື່ນ
ນັບແຕ່ ສິກອອກແລ້ວ   ຊິໄປເຝົ້າຢູ່ນຳ ຫັ້ນແລ້ວ
+ ຍັງໄປ່ ທັນໄດ້ໄປຍ່ອງຢີ້   ຢາມພີ່ພະຍາເມືອງ ເທື່ອນາ
ຍັງບໍ່ທັນ ໄປເທັນ   ພີ່ພະຍາປານນີ້
ບັດນີ້ ມີການຮ້ອນ   ພະຍາຈິ່ງຮັບສັ່ງ
ກໍ່ເລົ່າ ໂດຍບາດເຈົ້າ   ພະລັນດັ້ນດ່ວນໄປ
+ ກົ້ມຂາບໄຫວ້   ທູນແລ້ວເລົ່າຖາມ
ພະໄດ້ມີ ອາດຍາທັນ   ວ່າມີການຮ້ອນ
ມັນແມ່ນ ແນວການຮ້ອນ   ປະການໃດເດພີ່
ຈຶ່ງໄດ້ ບິນບອກຂ້າ   ພະລັນຟ້າວຮີບມາ ດັ່ງນີ້
+ ແຕ່ນັ້ນ ພະກໍ່ເລົ່າພາກໃຕ້   ຊຽງຮ່ຳຄະນິງດູ
ອັນວ່າ ສັດຕູມາ   ຂູ່ພະຈິມເຮົາແລ້ວ
ເຂົາຊິມາ ເພນ້າງ   ເມືອງເຮົາໃຫ້ມຸດມອດ ວ່າດາຍ
ບັດນີ້ ມຶງຢ່າໄດ້ຢູ່ຊ້າ   ໄປຖ້ອນກ່ອນພິນ ທ່ຽວເທີ້ນ
+ ແຕ່ນັ້ນ ຊຽງໄດ້ຮູ້ເລື່ອງແລ້ວ   ກໍ່ເລີຍຮີບລາລີງ
ໄປສູ່ ເຮືອນຕີນເລີຍ   ນັ່ງເນົາເຊົາຢັ້ງ
ແລ້ວເລົ່າ ບາຍຍັງພ້າ   ເດີນໄປເຂົ້າປ່າ
ຕັດເອົາ ໄມ້ໄຜ່ໄດ້   ພໍແລ້ວແບກມາ
+ ຊຽງກໍ່ ມາຮອດບ້ານ   ຍາມຄ່ຳພໍດີ
ຫລັງຈາກ ກິນແລງເລີຍ   ພັກແຮງເຊົາຢັ້ງ

ພໍແຮງແລ້ວ ກໍ່ເລີຍນອນນິດທະເນີ້ງ
ເດິກຊັກໃຊ້ ກໍ່ຫລັບມິ້ງເມື່ອຍຄີງ ຫັ້ນແລ້ວ
+ ຍາມນັ້ນ ຝູງໄພ່ຟ້າ ປະຊາລາດຊາວເມືອງ
ໃຜບໍ່ ແລຫລິງເຫັນ ສະພາບການດີຮ້າຍ
ຄັນວ່າ ເຖິງຍາມແລ້ວ ກອງງາຍຊຽງຕື່ນ
ມັນກໍ່ ລຸກສ່ອຍໜ້າ ອິງເຫົ້ງຢູ່ສະບາຍ ແທ້ແລ້ວ
+ ແຕ່ນັ້ນ ຊຽງກໍ່ຄຶດຮ່ຳແລ້ວ ຄະນຶງຢູ່ໃນໃຈ
ອ້າຍພະຍາ ວ່າໃຫ້ເຮົາເດີນໄປ ກ່ອນທະຫານອວນໜ້າ ດັ່ງນັ້ນ
ຮ້ອຍທີ່ມັນຄິດຢາກໃຫ້ເຮົາຕາຍລ້າ ຊີວັງວາຍມຸດມອດ ບໍ່ຢ່າແລ້ວ
ຍັງວ່າ ເປັນນ້ອງແທ້ ສັງມາໃຫ້ອອກເລວ ດັ່ງ ນີ້
+ ບໍ່ໃຊ່ ແມ່ນແນວໜາແທ້ງ ສັງຊິບອກໄປຕາຍ ນີ້ເດ
ຮ້ອຍທີ່ເຂົາຫາກຊັງກູ ມີພະຫຍາ ຢ້ານລືມກາຍເຂົາໄດ້ ນັ້ນບໍ
ເຂົາຈຶ່ງຈຳ ໃຫ້ກູໄປຕາຍມ້ຽນ ມໍລະນາລົດຊື່ວ ແນວນີ້
ບັດນີ້ ກູຈັກພິແຕ່ງຕັ້ງ ຕາມແທ້ດັ່ງໃຈ ກ່ອນແລ້ວ
+ ເພື່ອໃຫ້ຄົນໄດ້ຮູ້ ພະຫຍາເກົ້ງຂອງຊຽງ
ອັນວ່າ ພະຫຍາກໍ່ຫາກຍັງເຕັມປູມ ກໍ່ແຕ່ລີ້ບັກຊຽງໝ້ຽງ
ເມື່ອນັ້ນ ຊຽງກໍ່ອະທິບາຍຮູ້ ສານກວຍໜ່ອຍໃຫຍ່
ມັນກໍ່ເລື່າ ຈັກພ່າໄມ້ ເຫລົາແລ້ວເລື່າສານ
+ ແຕ່ນັ້ນ ຊຽງກໍ່ເລື່າໝອບງເຂົ້າ ສານແຕ່ງແປງກວຍ ຫັ້ນແລ້ວ
ພະຍາກໍ່ຮີບໃຊ້ຄົນໄປ ຫ່ຽວທັນຊຽງໝ້ຽງ
ແຕ່ນັ້ນ ເຂົາກໍ່ເລື່າ ໂດຍພະກະສັດເຈົ້າ ເຮືອພະລັນໄປຮອດ
ເຖິງທີ່ ຊຽງໝ້ຽງແລ້ວ ຈາເວົ້າບອກບິນ

+ ບັດນີ້ ພະບາດເຈົ້າ ຈຳໃຫ້ທ່ານທັນຊຽງ ຈົ່ງດາຍ
ຢ້ານທີ່ ເສີກມາພະຈົມ ຮອດເມືອງເຮົານີ້
ແຕ່ນັ້ນ ຊຽງຈາຕ້ານ ຂານຄຳເວົ້າຕໍ່
ຂ້ອຍກໍ ຍັງສານກວຍບໍ່ແລ້ວ ຊິໄປແທ້ໄປທັນ ທ່ານເອີຍ
+ ຊາດທີ່ຄົນພະຫຍາໃຫ່ຍກວ້າງ ສານກວຍໃຫ່ຍຈົ່ງພໍດີ ແທ້ດາຍ
ກວຍແປດອູ້ມ ມັນພໍດີ ໃສ່ຕົນຕົວຂ້ອຍ
ເຈົ້າຈົ່ງ ຄ່ອຍຄືນເມືອໄຫວ້ ພະຍາຫລວງຕົນພີ່ ກ່ອນທ້ອນ
ຂໍໃຫ້ ພະບາດເຈົ້າ ປານີໃຫ້ໂພດພາຍ ແດ່ທ້ອນ
+ ເມື່ອໃດ ກວຍຫາກແລ້ວ ຂ້ອຍຊິດຸ່ງເດີນເມືອ ດອກນາ
ເມື່ອນັ້ນ ເສນາເມືອ ກາບທູນພະຍາເຈົ້າ
ຊຽງວ່າ ກວຍຍັງບໍ່ທັນແລ້ວ ຂໍພະອົງຈົ່ງພາຍໂພດ ວ່າດາຍ
ເຈົ້າກໍ່ເລົ່າ ຟັງພາກຖ້ອຍ ເສນາເວົ້າຄອບຄວາມ
+ ພະກໍ່ ພາຍໂພດໃຫ້ ຕາມດັ່ງຊຽງປະສົງ ທ່ານເອີຍ
ຄັນວ່າ ເຫິງນານມາ ພັດແຕ່ງຄົນໄປເອີ້ນ
ຊຽງຫມັ້ນຽງ ກໍ່ເລົ່າອາຈາຕ້ານ ເປັນຄວາມຄືເກົ່າ ນັ້ນແລ້ວ
ສູເລົ່າ ມາຮ່າວເອີ້ນ ກູຟ້າວຢ່າງໃດ ນີ້ນໍ
+ ຍັງວ່າ ກວຍບໍ່ແລ້ວ ປະປ່ອຍບໍ່ທັນເປັນ ແທ້ນາ
ແມ່ນຊິມີການສັງ ດ່ວນເຮືອຮີບຮ້ອນ ກໍຕາມທ້ອນ
ຄັນວ່າ ສານກວຍແລ້ວ ຊິເດີນໄປນ້ອມພະບາດ ດອກນາ
ອັນນີ້ ກວຍບໍ່ແລ້ວ ຊິໄປໄດ້ຫ່ອນເປັນ
+ ເຮົານີ້ ເປັນນ້ອງເຈົ້າ ພະບາດກະນິດຖາ ແທ້ນາ
ຕ້ອງສານກວຍໃຫ້ພໍສົມ ແປດວາກວມອູ້ມ

ເຮົານີ້ ທີ່ວ່າເປັນແນວເຊື້ອ ພະຍາເມືອງຍົດໃຫຍ່ ຈິງດາຍ
ຈຶ່ງໄດ້ ສານກວຍພໍແປດອູ້ມ ເອົາຫ້າງໃສ່ພະຫຍາ ທ່ານເອີຍ
+ ພໍວ່າ ເຮົາຫາກເປັນໄພ່ນ້ອຍ ປະຊາລາດທຳມະດາ
ພະຫຍາ ບໍ່ມີຫລາຍ ກໍ່ອາດສານກວຍນ້ອຍ
ອັນນີ້ ເຮົາຫາກເຮັດຕາມເຊື້ອ ນາມມະກອນຜູ້ໃຫຍ່ ເຈົ້າເອີຍ
ການໂຕ ກໍ່ຫາກມາຮອດແລ້ວ ສົ້ງມາຫຍຸ້ງແກ່ເຂົາ ແທ້ນໍ
+ ພໍວ່າ ເຮັດຄືຝູງໄພ່ນ້ອຍ ກໍ່ສານແລ້ວແຕ່ເຫິງ
ເຈົ້າຈຶ່ງ ເມືອທູນອົງ ພະຍອດເມືອງພາຍພຸ້ນ
ທ່ຽວເທີ້ນ
ປານນີ້ ເໜືອຫົວເຈົ້າ ຊິຄອງຄອຍຖ້າຢູ່
ເມື່ອນັ້ນ ຝູງຂ້າໃຊ້ ພະລັນຟ້າວຕ່າວເມືອ ຫັ້ນແລ້ວ
+ ບອກວ່າ ຊຽງກ່າວເວົ້າ ວ່າຄາຍ່ອນສານກວຍ ພະເອີຍ
ສຳເລັດລົງຍາມໃດ ຊິດ່ວນມາຫາໄທ້
ບໍ່ໃຫ້ ຈອມຫົວເຈົ້າ ເຄືອງໃຈຮ້ອນເຮົ້ງ ວ່ານາ
ໃຈກໍ່ ຈຳຈື້ແລ້ວ ຊິມາເຝົ້າພະອົງ ທ່ານເອີຍ
+ ມັນວ່າ ທຳມະດາເປັນນ້ອງເຈົ້າ ລາຊາໃຫຍ່ພະຍາເມືອງ
ດັ່ງນີ້
ມັນກໍ່ ຕ້ອງຈົງໃຈສານກວຍ ໜ່ວຍເປັນແນວນີ້
ຄົນສຳຄັນ ແນວນີ້ ຕ້ອງສານກວຍອັນໃຫຍ່
ໃຫ້ມັນໄດ້ ແປດອູ້ມ ພະຫຍາເຂົ້າໃສ່ເຕັມ
+ ແລ້ວຈັກ ຄ່ອຍດຸ່ງດັ້ນ ເຂົ້າສູ່ສົງຄາມ
ແມ່ນຊິຈັດ ຊຽງແນວໃດ ກໍ່ຕອບຄວາມດຽວນັ້ນ

ເມື່ອນັ້ນ ລາຊາເຈົ້າ	ໄດ້ຍິນຄວາມກອຍໃຫ່ຍ
ເຈົ້າກໍ່ເລົ່າ ຄິດຄົ່ງແຄ້ນ	ແຄນແລ້ວກໍ່ເລົ່າຫົວ ແທ້ດາຍ
+ ແຕ່ນັ້ນ ພະບາດເຈົ້າ	ພະຍາເລົ່າຄອນເຄືອງ
ພະບໍ່ເຊົາ ຄວາມຄຽດ	ໃສ່ຕົວຊຽງຫມ້ຽງ
ຍັງວ່າ ສັດຕູເຂົ້າ	ມາຈົ່ມໃກ້ເຂດ ຈິງນາ
ເຮັດສັງ ມາບໍ່ຮູ້ໃຫ້ແລ້ວ	ຈັ່ງເຫິງອ້າງແຕ່ກອຍ ນັ້ນເດ
+ ແຕ່ນັ້ນ ພະບອກເວົ້າ	ຫລາຍເທື່ອໃຫ້ມັນມາ ນີ້ນາ
ມັນເອົາແຕ່ ການສານກອຍ	ຍົກຍໍມາອ້າງ
ໂອນໍ ຮ້ອຍວ່າ ທະວາດີກວ້າງ	ເມືອງກູຈັກເປັນສ່ອຍ ເສຍນໍ
ມັນຈັກດັບ ຍ້ອນບັກຂີ້ຮ້າຍ	ຊິພອຍຊາຄອບກອຍ ນັ້ນແລ້ວ
+ ມັນຕັ້ງ ເຮັດລື່ນລົ້ນ	ເຫລືອຮີດຄອງກອຍ ແທ້ດາຍ
ຈັກວ່າ ມັນຊິຄອນເອົາໄປ	ໃສ່ອີສັງເປັນກະດົ້
ກູກໍ່ ຫາກໂຮມກັນໄວ້	ເຕັມເມືອງເຄົ້າຄື່ນ
ເຂົາຢາກໄປ ກໍ່ຫາກໄປບໍ່ໄດ້	ຊິຄອຍຖ້າແຕ່ບັກຊຽງ ນັ້ນດາຍ
+ ແຕ່ນັ້ນ ຊຽງຫມ້ຽງກົ້ມ	ຍືນແລ້ວນັ່ງສານກອຍ
ມັນວຽນໄປວຽນມາ	ກໍ່ໃຫ່ຍສູງສົມອ້າງ
ຈັກຕອກ ຫົງກໍ່ກົ້ນ	ຈົນກອຍສູງໃຫ່ຍ
ສາມວັນ ກໍ່ຈັ່ງແລ້ວ	ດີແທ້ດັ່ງປະສົງ
+ ອັນວ່າ ຄານຫາບຍາວແທກໄດ້	ສາມວາປາຍສອກ ພໍດີ
ລວງໃຫ່ຍ ຂອງຄານນີ້	ທໍ່ຂາຄົນແທ້
ຊຽງກໍ່ຈັ່ງ ສິ້ນແປງແລ້ວ	ເຮວພະລັນຕັດອອກ
ແລ້ວກໍ່ ຫໍ່ເຂົ້າຫໍ່ກຳປັ້ນ	ວາງໄວ້ໃສ່ໃນ

+ ບັດນີ້ ກູຈັກໄປແປ້ນາງ ສູ້ຣົບສົງຄາມ ກ່ອນແລ້ວ
ຄັນວ່າ ໜົດເຂົ້າຖົງອັນມີ ຊິຕ່າວຄືນມາບ້ານ
ມາຮ່າວ ກົວເກົງຢ້ານ ເສິກເສືອເມືອງເພີ້ນ ດັ່ງນີ້
ອິດພໍໃຫ້ ເອົາງ່າງແຜ່ນຟ້າ ດິນໄວ້ຫອບຜາ ເຫາະນາ
+ ຄັນບໍ່ມີໃຜສູ້ໄດ້ ກູຊິສູ້ຄົນດຽວ
ມັນຊິເກັ່ງ ດີປານໃດ ສໍາເສິກແນວນັ້ນ
ຊື່ວ່າ ລືກູແລ້ວ ພະຫຍາດີກວຍໃຫຍ່
ໃຜຊິຢາກໃຫ້ໜົດຊູ້ພົ້ນ ປັກຊຽງໝັ້ນຽງກໍ່ຢ່າຫວັງ
ເຫາະເນີ

+ ຄ້ອນວ່າ ໄດ້ລຶກແລ້ວ ຊຽງແລ່ນພະລັນເປືອງ
ມັນກໍ່ ຄອນເອົາກວຍ ໃຫຍ່ມັນໄປພ້ອມ
ມັນກໍ່ເດີນທາງດົ້ນ ຫາພະຍາໂດຍດ່ວນ
ຊຽງກໍ່ ໄປຜ່ານບ້ານ ເອົາຫ້ວງນີ້ນັ້ນ
+ ກໍ່ທາກດູໃຫຍ່ລົ້ນ ກາຍຮິດຄອງກວຍ ແທ້ນໍ
ອັນນີ້ ບໍ່ໃຊ່ຄົນເມືອງເຮົາ ແມ່ນຜີອີ່ຕາຫົ້ມ
ແຕ່ນັ້ນ ຊຽງກໍ່ຍັງເລົ່າເດີນໄປໜ້າ ກວຍຄອນເປືອງແກວ່ງ
ຝູງໝູ່ ເດັກໜຸ່ມນ້ອຍ ກົວຢ້ານແລ່ນໜີ
+ ລາງພ່ອງລົ້ມ ລາງພ່ອງປົບໜີ ກໍ່ມີ
ລາງພ່ອງ ແຊວງສຽງ ອີແມ່ເອີຍເອົາຂ້ອຍ
ລາງພ່ອງ ຫົນໆໄຫ້ ຫົວແຊວຫ້ວງວ່າຕ່າງ
ລາງພ່ອງ ເຊຫ່າວລົ້ມ ຄາຮົ້ວໃຜ່ຫນາມ
+ ລາງພ່ອງ ປົບແລ່ນເຕັ້ນ ໜ້າຜາກແຕກຊູນກັນ ກໍ່ມີ

ແຂ້ວຂາດ ທັກລົງດິນ　　　ເລືອດລາມ ໄຫລຍ້ອຍ
ລາງພ່ອງ ປີນກົກໄມ້　　　ຕົວຕິງຢ້ານສັ່ນ
ລົງບໍ່ທັນ ກໍ່ຂວ້າ　　　ຫົວຕັ້ງກະແທກດິນ
　　+ ລາງພ່ອງ ຄານຂຶ້ນພົ້ນ　　　ຕາມລູກຄົນ ໄກເຮືອນ
ທັງເລົ່າ ຫລຽວຕາໄປ　　　ເບິ່ງຊຽງແລຢ້ຽມ
ລາງພ່ອງ ແຊວງຮ້ອງ　　　ປີບນຳໄປເບິ່ງ ກໍ່ມີ
ລາງພ່ອງ ໄປກ່າວເວົ້າ　　　ໃຍຫລົ້ນວ່າແມ່ນໂລງ ແທ້ນາ
　　+ ແຕ່ນັ້ນ ຊຽງໜ້ຽງເຕັ້ນ　　　ພະລັນແລ່ນຄອນກວຍ
ຄືແບກ ເອົາຄົນຄູ　　　ແກວ່ງໄກວຄວນຢ້ານ
ແມ່ນວ່າ ຝູງຄົນເຖົ້າ　　　ທັງຊາວນ້ອຍຫນຸ່ມ
ກໍ່ຫາກ ສ່ວາງຮ້ອງ　　　ມີຊື່ເບິ່ງຊຽງ ທັ້ນແລ້ວ
　　+ ມັນກໍ່ເລົ່າອຶດໃຈແທ້　　　ກວຍໃຫ່ຍອຶງລີງ ກໍ່ຄອນໄປ
ສົມແທ້ ຮົບກວຍຫລວງ　　　ຕ້ອງໃສ່ເຫິງຫລັງຊ້າງ
ແຕ່ນັ້ນ ຊຽງກໍ່ກາຍໄປໜ້າ　　　ທັງຈາເວົ້າຈື່ມ
ກະກຸນວ່າ ພະຫຍາທີ່ນີ້　　　ກໍ່ມາຊ້າຍາກທາງ ແທ້ນໍ
　　+ ຄົນກູ ຫາກເອົາຫລາຍກວຍໄປກ່ານີ້　ຊິຕາຍຄອບນໍລະນາ
　　　　　　　　　　　　　　ແທ້ແລ້ວ

ມັນແມ່ນ ພະຫຍາແນວໃດ　　　ຊິຂ້າໂຕຕາຍຊ້ຳ
ຄົນທຳມະດາແທ້　　　ແລເຫັນຄິດບໍ່ອອກ ຈິງແລ້ວ
ກວຍພະຫຍາ ໃຫ່ຍດັ່ງນີ້　　　ຊິໄປຖົ້ມໃສ່ໃຜ
　　+ ແຕ່ນັ້ນ ຊຽງບໍ່ຊ້າ　　　ເມືອຮອດແສນເມືອງ
ມັນຈຶ່ງ ເຕີນພົນຫລວງ　　　ປ່າວໄປທັງຟ້າວ

ສ່ວນວ່າ ຊຽງຫລວງເຈົ້າ ກໍ່ຄອນກວຍໄປກ່ອນ

ເຖິງທີ່ ທາງລັບຮ້າຍ ກວຍຂວ້າງລົ່ງຕົນ

+ ເພາະວ່າ ກວຍມັນຫນ່ວຍໃຫ່ຍລົ້ນຕົນປ່ອງປີກຕູຫວານ ເຈົ້າເອີຍ

ຕົ້ງຫາກ ປູລູກວຍ ຢູ່ທາງຕົນໄວ້

ອັນວ່າ ຝູງຫມູ້ຄົນທັງຊ້າງ ອໍກັນລັບລົ່ງ

ເຂົາກໍ່ ໄປບໍ່ໄດ້ ຄາຊ້າຫນ່ວຍຫລວງ ນັ້ນແລ້ວ

+ ຕົ້ງຫາກ ມືອມືດກຸ້ມ ຍັດຢຽດຈີມກັນ

ສອງຟາກທາງ ກວຍຫລວງ ແມ່ນແຕ່ຄົນເຕັມເຕົ້າ

ພໍ່ດູ ສະພັ້ງຊອງ ຄົນຫລາຍຊ້ອງຊໍ່

ເຂົາກໍ່ ທື່ມໆຮ້ອງ ໂຮ໊ອນສ່ວາແຊວ

+ ຍັງວ່າ ມີເຫດຮ້ອນ ເສີກເພື່ອນມາປະຈົນ ແທ້ນາ

ສັງບໍ່ ໄປປຽວເປືອງ ເລື່າມາຍັງຊ້າ

ເມື່ອນັ້ນ ໄທຫລັງເອີ໊ນ ຈັດໄປແອນທ່ຽວ ເຮວເຖີ໊ນ

ຍັງວ່າ ການວຽກຮ້ອນ ຊິມາຊ້າຢູ່ສັງ ນີ໊ເດ

+ ລາງພ່ອງ ຮ້ອງຮຽກເອີ໊ນ ທັງດ່າຈັດໄປ ກໍ່ມີ

ລາງພ່ອງ ເສີນໆລັດ ແລ່ນໄປທັງຟ້າວ

ບໍ່ຮູ້ວ່າ ເສີກເສືອຮ້າຍ ມາປະຈົນດົນຮອດ ເມືອງລີ

ສັງມາ ຮູ້ແຕ່ຊ້າ ໄປຫນ້າບໍ່ຢາກເປືອງ ນັ້ນເດ

+ ແຕ່ນັ້ນ ໄທທີວພິນເອີ໊ນ ປະລິງສົ່ງສຽງຄືນ

ຍັງວ່າ ເຮົາມາຄາ ຄອບກວຍຊຽງຫມັ້ນຽງ

ສູສັງ ມາດົນຖ້ອຍ ຈັດໄປວ່າໃຫ້ທ່ຽວ ສັນນີ໊

ຕາສູ ບໍ່ລ້າຢຽມ ກວຍທ້າວທ່ານຊຽງ ນີ໊ເດ

+ ແຕນັ້ນ ເຂົາກໍ່ຮ້ອງຊ້ວງ   ເອີ້ນດ່າລົງໄປ
ຈັກວ່າ ກວຍອືສົງ   ໃຫ່ຍເກີນກາຍດ້ານ
ອັນວ່າ ກວຍໃຫ່ຍເປັນແນວນັ້ນ   ສົງບໍ່ປູນແດງຫວ່ຽວ ໄປເດ
ອັນນີ້ ຕັ້ງຫາກ ໃຫ່ຍປູລູພອກພົ້ນ   ທາງກວ້າງກໍ່ອົ້ງຕັນ ແທ້ນາ
+ ບັດນີ້ ເຮົາຈຶ່ງພ້ອມກັນຟັນຜ່າມ້າງ ກວຍແລ້ວເປີດທາງ
ຫັ້ນທ້ອນ

ຄັນວ່າ ຊຽງຫາກຕາຍນຳກວຍ   ກໍ່ຢ່າມັນເສຍຊ້ຳ ຫັ້ນທ້ອນ
ຄັນຊິ ຄອຍຄອງຖ້າ   ຊິຕາຍຄາກັບບ່ອນ ນີ້ແລ້ວ
+ ພິວ່າ ບໍ່ແມ່ນພະບາດເຈົ້າ   ຊົງສົ່ງປົງຄວາມ
ກູຈັກ ຟັນຄໍຕັດ   ໃຫ້ລົດຊື່ອນນຳກວຍນັ້ນ
ລາງພ່ອງ ຈັບກວຍໄດ້   ດຶງຄືນ ລາກແກ່ ກໍ່ມີ
ລາງພ່ອງ ຕີນຖີບກວຍສົ່ງຫັ້ນ   ໃຫ້ໄປພົ້ນປາກປະຕູ
+ ແຕນັ້ນ ຊຽງກໍ່ໂອຍໆຮ້ອງ   ລົມທ່າວເຊໄປ ຫັ້ນແລ້ວ
ສົງມາ ທຳທາງຫລັງ   ຈ່ອງດຶງທາງຫນ້າ ດັ່ງນີ້
ເຂົາກໍ່ ເລົ້າ ແຊວໆເວົ້າ   ຫົວຊົມທັງຄຽດ
ບັກຊຽງ ຊິກລຶກຫນ້າ   ດຶງຫັ້ນແບກກວຍ
+ ນຶງຮູ້ບໍ່ ວ່າມັນຄັບເຮົ້ງແລ້ວ   ຊອກທາງອື່ນເດີນໄປ ສາເດ
ບັດນີ້ ນຶງຫາກມາຄາອັດ   ຕະຫລອດຕາຍຢູ່ແນວນີ້
ເມື່ອນັ້ນ ຊຽງດຶງຫັ້ນ   ພັດຄືນຫລັງຄຶດກຶ່ງ
ມັນຢາກຄືນ ກໍ່ຄືນບໍ່ໄດ້   ຊິໄປຫນ້າກໍ່ບໍ່ເປັນ
+ ເພື່ອວ່າ ກວຍໃຫ່ຍກວ້າງ   ຕັນປ່ອງປະຕູ ນີ້ແລ້ວ
ເຫລືອທີ່ ຮຸນແຮງຊຸກ   ກໍ່ບໍ່ບິນໄປໄດ້

ແຕ່ນັ້ນ ທັງຫລາຍທັ້ນ   ດັງກວຍຍູ້ຊ່ອຍ
ກວຍກໍ່ຈຶ່ງ ຫລຸດອອກມັ້ນ   ປະຕູຕ້າຍຈາກວຽງ ແທ້ດາຍ
+ ເມື່ອນັ້ນ ເຂົາກໍ່ເຊທ່າວລົ້ມ   ຂືນໄຂ່ເນືອງນອງ
ອັນວ່າ ຕົວຊຽງເອງ   ກໍ່ເລົາເຊຊວນລົ້ມ
ເຂົາກໍ່ ເລົາປຸກມັນຂຶ້ນ   ມັນເນືອງຮ້ອງໂຫ່
ເຮົາກໍ່ຈັກ ພາກັນມານອດມ້ຽນ   ຕາຍສ້ຽງຄອບຊຽງ ແທ້ແລ້ວ
+ ກໍ່ບໍ່ມີຫວັງ ໄປຕໍ່ສູ້   ປະເຊີນຕໍ່ສົງຄາມ ແທ້ແລ້ວ
ລາງຄົນ ເອົາຫົວຕູບ   ຖືກບ່ອນເປັນຫົວລ້ານ
ລາງພ່ອງ ໂລທົດຍ້ອຍ   ແຂນຫັກເລືອດອອກ ກໍ່ມີ
ລາງພ່ອງ ຕຳທັ່ງໄມ້   ຫົວໄທ້ຍ່າວຍົມ
+ ລາງພ່ອງ ຊູນສະດຸດຕ້ອງ   ຫົວໂປ້ຕີນເລີຍແຕກ
ລາງຄົນ ເອົາຕີນເຕະ   ຖືກໜານເປັນສ້ຽນ
ອົດຍ່າງ ຍໍຕີນຍ້າຍ   ເດີນໄປສົກກະເດີດ
ໃຜຊ່ວຍໃຜບໍ່ໄດ້   ແຮງມ້ອຍປ່ອຍໂຊ
+ ແຕ່ນັ້ນ ຊຽງກໍ່ພູດລຸກແລ້ວ   ຮ້ອງຢູ່ຄາງແຖມ
ແລ້ວເລົາ ຄອນກວຍໄປ   ສູ່ປະຕູວຽງກ້ວາງ
ເຂົາແຮ່ງ ຊຸກໃສ່ຊ້ຳ   ທຳໄປຍູ້ແລ່ນ
ແຕ່ນັ້ນ ຊຽງໜ້ມຽງ ມັນກໍ່ລຸກຍ່າງຍ້າຍ   ພະລັນຟ້າວແລ່ນໄປ
+ ແລ້ວເລົາ ພະລາດລົ້ມ   ກົ້ນຂີ້ທົ່ງທັງຍືນ
ກວຍຊຽງ ສະເດັນໜີ   ຈາກຕົວດູ້ຮ້າຍ
ມັນກໍ່ເລົາ ໂອຍໆຮ້ອງ   ທັງຄາງເຈັບປວດ
ລິດົງ ເປັນພະຍາດຮ້າຍ   ຫົວຂວ້ຳ ໃສ່ດິນ

+ ຄຶດວ່າຈັກໄປເລວເສິກຫ່ຽວແຫ້ ຊິມາປ່ອຍບໍ່ທັນເລວ ແລ້ວນໍ

ໂອນໍ ມາເຊຊວນ　　ພະລາດລິງຈົມລົ້ມ
ອັນວ່າ ວັດຖົງຜ້າ　　ໃນແອວຫລຸດອອກ ເສຍແລ້ວ
ທັງເລົ່າ ປະປິດກົ້ນ　　ລົມຫ້ວງສ່ວາແຊວ ນີ້ເດ
+ ມັນກໍ່ ເລົ່າປະປ່ອຍໃຫ້　　ລົມອື່ນເຫັນທຳ
ເຮັດໃຫ້ ລົມທັງຫລາຍ　　ສະນັ່ນເນືອງກັນຫ້ວງ
ລາງພ່ອງ ຫົວຊື່ນຊົມເຊີຍຍ້ອງ　　ລາງຄົນຊ້ຳດຽດ
ຊັງວ່າ ຊຽງໜ້ຽງປະເປີດກົ້ນ　　ທຳໂດຍໃຫ້ເພິ່ນເຫັນ
+ ເຂົາຈຶ່ງເວົ້າ　　ແໜງໜ່າຍບັກຊຽງເດ
ສັງວ່າ ມາໂລເລ　　ອ່ວຍເປັນແນວນີ້
ເຂົາກ່າວເຕືອນຊຽງໜ້ຽງ　　ທຳໂດຍໃຫ້ມັ້ຽນແດ່ ຊຽງເອີຍ
ຕັ້ງຫາກ ໜ້າໜ່າຍແທ້　　ດູສິ້ນແສບຕາ ແທ້ແລ້ວ
+ ລາງພ່ອງ ຊີ້ຫອກໃຫ້　　ຈາຍອກແຫງທຳ ກໍ່ມີ
ຊຽງກໍ່ ໂງເຊຊັກ　　ຜ້າມາຣຳໄວ້
ແຕ່ນັ້ນ ຊຽງຈຶ່ງເດົາດາມ້ຽນ　　ທຳໂດຍໄວ້ແຈບ
ມັນກໍ່ ລຸກຂື້ນໄດ້　　ຄອນກວຍແລ້ວເລົ່າໄປ
+ ຊຽງກໍ່ ອຶງຮ້ອງ　　ຄາງຈົ່ມຈາໄປ
ກູນີ້ ມາຊ່າງເຮັດໃຫ້ທັງປວງຫົວ　　ດັ່ງຄົນເມົາເຫລົ້າ ແທ້ນໍ
ຄ້ອນວ່າ ພໍຄາວແລ້ວ　　ຊຽງເຖິງປະຕູໃຫ່ຍ
ມັນກໍ່ເລົ່າ ເອົາກວຍຂີ້ຮ້າຍ　　ຍໍ້ຄາງໃສ່ຕົ້ນ ນັ້ນແລ້ວ
+ ເມື່ອນັ້ນ ທັງຫລາຍຫ້ວງ　　ຊິສ່ວາຈາກັນ
ບັດນີ້ ເຮົາຮົບຫາຈົມເພ　　ຢ່ຳມັນກວຍຮ້າຍ

ເມື່ອຈັກ ຄອງຄອຍຖ້າ ກວຍຊຽງເໝືອນແຕ່ກ່ອນ ດັ່ງນັ້ນ
ຢ້ານວ່າ ເສີກລ່ວງເຂົ້າ ປະຈົນແພ້ບໍ່ທັນ ເຈົ້າເອີຍ
+ ແຕ່ນັ້ນ ເຂົາກໍເລົ່າເອົາທອກວ້າວ ຟັນຜ່າແຫງກວຍ
ລາງພ່ອງ ຍໍຕີນທຳ ດ່າຂ້ວນທົ່ງປ່ອຍ
ຕັ້ງທາກ ຮຸນແຮງແລ້ວ ເຮັດສັນໃດກໍ່ຕັ້ງຢູ່
ເຫລືອທີ່ ເຂົາທາກ ດິ້ງຍາດທົ້ນ ທຳໄດ້ກໍ່ບໍ່ເໜັງ
+ ກວຍບໍ່ຕິງ ຢູ່ຕັ້ງ ສະເໜີດັ່ງຄົນຕາຍ ຄານັ້ນ
ມັນກໍ່ເລົ່າ ເອົາທິວເມາະ ພາດກວຍກອງກົ້ນ
ແຕ່ນັ້ນ ແສນເມືອງຕ້ານ ຖະແຫລງຄຳກອຍກ່າວ
ບັດນີ້ ຄວນທີ່ເຮົາຄືນເມືອໄຫວ້ທ້າວ ຈອມທິວເຈົ້າພະຍອດເມືອງ
+ ຊຽງນີ້ ພະແຕ່ງຕັ້ງ ອອກກ່ອນຝູງເຮົາ ຈິງດາຍ
ເຫດວ່າ ພະຍາປົງຄວາມ ວ່າໃຫ້ນຳຊຽງໝັ້ນຮຽງ
ພະທາກ ວາຈາຕ້ານ ຂານຄວາມຊິງສິ່ງ ມັນແລ້ວ
ຄັນວ່າ ເຮົາທາກກາຍລ່ວງໜ້າ ມັນນັ້ນໂທດຊິມີ ທ່ານເອີຍ
+ ຢ້ານທີ່ ພະບໍ່ລຽງ ຊິຕາຍຄອບນຳມັນ ບໍ່ຮູ້
ຄັ້ນວ່າ ຂຸນວາຈາ ກໍ່ລ່ວງເມືອທົ່ງຟ້າວ
ເມື່ອເຖິງ ລາຊາເຈົ້າ ປະນົມກອນກົ້ມກາບ
ຝູງຂ້າ ທູນບາດໄຫວ້ ພະອົງເຈົ້າຍອດເມືອງ ແທ້ແລ້ວ
+ ພວກຂ້າ ຢາກໄປກໍ່ໄປບໍ່ໄດ້ ຊຽງໝັ້ນຮຽງຢູ່ຕົ້ນທາງ ພະເອີຍ
ມັນເອົາ ກວຍໃຫຍ່ມາຕັນປະຕູ ບໍ່ລອດປີນໄປໄດ້
ມັນທາກ ປຸລູຄາກວຍໄວ້ ຕັນທາງບໍ່ເຫັນປ່ອງ
ໃຜຊິໄປ ກໍ່ໄປບໍ່ໄດ້ ຄາຄ້າງບ່ອນປະຕູ ພະເອີຍ

+ ແມ່ນວ່າ ແສນສໍາທ້າວ	ມ້ານືງໂຍທາ ກໍ່ດີ
ໃຜບໍ່ອາດ ກາຍປະຕູຫລວງ	ລ່ວງໄປບໍ່ມີໄດ້
ຂໍແກ່ ເໜືອຫົວເຈົ້າ	ຄະນຶງໃຈຄຶດຮ່ໍາ ດູທ້ອນ
ຢ້ານທໍ່ ເສີກລ່ວງເຂົ້າ	ມາໃກ້ຮອດເມືອງ ບໍ່ຮູ້
+ ແຕ່ນັ້ນ ທະວາດີ ທ່ອນທ້າວ	ໃຈຊິຂາດຫົນຫວາຍ
ເຈົ້າກໍ່ ໂກທາຟຸນ	ຄຽດໃສ່ຊຽງແຮງກ້າ
ບໍ່ຊ່າວ່າ ກູຈັກບາຍເອົາວ້າວ	ຟັນຄໍສິນຂາດ ນັ້ນລື
ແລ້ວຈຶ່ງເອົາຫົວມັນໄປສຽບໄວ້	ຫົນທາງກວ້າງແຕ່ງຄົນ ພຸ້ນທ້ອນ
+ ໃຫ້ມັນ ຕາຍຄອບວ້າວ	ດັບຊື່ຊີວິດ ເສຍນັ້ນ
ພິຈັກ ຕາມໂກທາ	ຟັກຍໍາສະເໜີກ້ອຍ
ທໍ່ວ່າ ປິຕາໄທ້	ພະຍາຫລວງສອນສັ່ງ ສັນນັ້ນ
ຄຶດເມື່ອພະພໍ່ເຈົ້າ	ເອົາລ້ຽງພ່ຳກັນ ນັ້ນມາ
+ ເມື່ອນັ້ນ ພະບາດເຈົ້າ	ຕ້ານຕໍ່ແສນເມືອງ
ບັດນີ້ ທ່ານຈຶ່ງໄປແວນເປືອງ	ບອກມັນຄືນຖ້ອນ
ແຕ່ນັ້ນ ແສນເມືອງທ້າວ	ວັນທາລາເລີກ
ເຮວຮີບໄປຮອດທ້າວ	ຊຽງໝັ້ນຽງບອກບົນ
+ ບັດນີ້ ລາຊາຕັດສັ່ງໃຫ້	ນຶງຮີບກັບຄືນ ຊຽງເອີຍ
ມຶງຢ່າ ເນີນນານເຕີງ	ຮີບໄປດຽວນີ້
ແຕ່ນັ້ນ ຊຽງກໍ່ຟັງກອນຂໍ້	ແສນເມືອງບົນບອກ
ວ່າ ໃຫ້ຄືນຄອບບ້ານ	ດຽວນີ້ຢ່ານານ ວ່າດາຍ
+ ຊຽງກໍ່ ຊຶກລຶກໜ້າ	ຍິນດີຊື່ນຊົມຫົວ
ມັນບານ ສິບຫົວ	ເປີດແປນເຫັນແຂ້ວ

ແຕ່ນັ້ນ ຊຽງຈາຕ້ານ   ດອມຂຸນໂດຍຮີບ

ຍັງວ່າ ຂ້ອຍຊິໄປເສິກຫ່ຽວແຫ້   ສັງຊິໃຫ້ຕ່າວຄືນ ນີ້ເດ

\+ ເພື່ອວ່າ ຄັນບໍ່ເອົາພະພີ່ເຈົ້າ   ກໍ່ກົວໂທດໂພຍເຖິງ

ຢ້ານທໍ່ ພະບໍ່ປານິພາຍ   ຊິຂາດຄໍຟັນຂ້າ

ກູຂໍໃຫ້ ມຶງຄືນເສຍຖ້ອນ   ເອົາຫົວຫລາຍໂຮມດ່າ

ມຶງນີ້ ມາພອກພົ້ນ   ຫລືອບ້ານກວ່າເມືອງ ເພື່ອນເດ

\+ ຕູບໍ່ ເສຍດາຍຫ່ຽວແຫ້   ຕາຍກໍ່ຢ່າຫົວມຶງ ຫັ້ນຫ້ອນ

ມຶງນີ້ ຊາຍເກເລ   ຊື່ວເລວຊານຮ້າຍ

ໃຈຫາກ ພາໂລແຫ້   ກວນເມືອງໃຫ້ມົວຂຸ່ນ

ເຫມືອນດັ່ງ ຫມາໂຕຖ່ອຍຮ້າຍ   ໄປກິນຂີ້ຈຶ່ງຊິສົມ ດອກນາ

\+ ແຕ່ນັ້ນ ຊຽງກໍ່ອ້າງປະໄວ້   ກວຍອື່ງລື່ງຂອງມັນ

ຫນ້າຄຽດ ບູດຫຍູຫຍີ   ໂດດແລ່ນຄືນຄະໂຍງຕົ້ນ

ກູຫາກ ເຫລືອໃຈແຫ້   ຈຳໄປແລ້ວ ພັດບອກ ຄືນນີ້

ສັງບໍ່ ປະປ່ອຍໄວ້   ບັກຊຽງຫມັ້ຽງຫາກຊິເລວ

ດອກນາ

\+ ມາຮ່າວ ກົວຍ່ອນຢ້ານ   ເສິກເພື່ອນພະລັນມາ ອື່ສັງນີ້

ສາມຫມື່ນ ຫ້າຮ້ອຍເມືອງນອງມາ   ກູຜູ້ດຽວຊິທົນສູ້

ບັດນີ້ ກູຄືນແລ້ວ   ສູຈົ່ງໄປລອງເບິ່ງ ດູຫ້ອນ

ຄັນບໍ່ ເປັນຂີ້ພົ້ນ   ຈົ່ງຄືນໄຫວ້ບອກກູ ເທາະເນີ

\+ ກູຄິດວ່າ ຢາກໄປລອງຮົບສູ້   ປຸ້ນປາບສັດຕູ ເບິ່ງເຕ

ກູຊິ ລອງແຮງມັນ   ໃຫ້ທຸກຄົນເຫັນຮູ້

ກູຊິ ເອົາພະຫຍາສູ້   ສັດຕູໃຫ້ຮູ້ເມື່ອ

ເສຍແຕ່ ພະບາດເຈົ້າ　　ຈຳໃຫ້ຕ່າວຄືນ ດັ່ງນີ້

+ ເມື່ອຊິຮັດ ພະບາດເຈົ້າ　　ກໍ່ກົວແຕ່ຄວາມຕາຍ ທັ້ນແລ້ວ

ໃຜທ່ອນ ໄປແຂງຮັດ　　ພະຍອດເມືອງເປັນເຈົ້າ

ແຕ່ນັ້ນ ຊຽງກໍ່ກອຍໆຕ້ານ　　ຄຳສະຫາວອ້າງໂອດ ໂຕນັ້ນ

ອັນແຕ່ໃຕ້ລຸ່ມຟ້າ　　ບໍ່ມີຢ້ານຍ່ອນໃຜ ແທ້ແລ້ວ

+ ຄັ້ນວ່າ ຊຽງກ່າວແລ້ວ　　ຕີ່ຈົ່ມຄືນເມືອ

ມັນກໍ່ ເດີນພະລັນໄປ　　ເຂົ້າສູ່ເມືອງທັງຟ່າວ

ແລ້ວເລົ່າ ເມືອເຮືອນຢ່າວ　　ເຖິງຊະນອນມັນເຊົານັ່ງ

ແລ້ວເລົ່າ ກິນເຂົ້ານ້ຳ　　ນອນຫລັ້ນຢູ່ເຮືອນ

+ ມັນກໍ່ ນອນຢູ່ບ້ານ　　ເອົາສານອ່ານເປັນໂຄງ

ນອນລຸກມາ ເລີຍລົງ　　ອາບສີສົ້ງນ້ຳ

ແລ້ວເລົ່າ ຫວີຫົວກຽງ　　ທານ້ຳມັນເປື້ອງປື້ນ

ແລ້ວເລົ່າ ຄ້ຽວຫມາກເຈັ້ຍ　　ຫົວຍຸ້ມເພດຊູນ ແທ້ແລ້ວ

+ ແຕ່ນັ້ນ ເສິກໃຫ່ຍຫລາຍຫມື່ນເຕົ້າ　　ມາແຕ່ເມືອງທະວາດີ

ກູນຊະໂລ ເອົາຊິດ　　ຄູ່ຄຽງຕົວມ້າ

ເອົາລ່ວງເລີຍ ມາເຂົ້າ　　ໄພສິນເຖິງປ່າ

ພັກພ່ອນຢັ້ງ　　ໃນທັ້ນຢູ່ເຊົາ

+ ວັນຮຸ່ງຂຶ້ນ　　ມື້ໃຫ່ມວຽນມາ

ເອົາກໍ່ ເລົ່າມອງພົນໄປ　　ບໍ່ເຊົາມີຊ້າ

ແຕ່ນັ້ນ ພົນຫລວງເຈົ້າ　　ເມືອງປັນຈາຮູ້ຂ່າວ

ເອົາກໍ່ ຢຸດຍ່ອນຢ້ານ　　ຂາມເຈົ້າພ່າຍຄືນ

+ ເອົາກໍ່ ເຣວຣິບຟ້າວ　　ດັ້ນດຸ້ງຄືນເມືອ

ເຖິງເມືອງປັນຈາ ນະຄອນຫລວງ   ຢູ່ເຢັນມີ້ຮອມ
ແຕ່ນັ້ນ ພົນຫລວງເຈົ້າ   ເມືອງທະວາດີຮູ້ຂ່າວ
ອັນວ່າ ເສິກໂຄບຢ້ານ   ຫນີແລ້ວພັດຕ່າວຄືນ
+ ເຂົາກໍ່ ລັດເລັ່ງຂ້າມ   ຫລາຍລື່ນອະລັນຍາ ມາແລ້ວ
ຫລາຍວັນເລີຍ   ຕ່າວຄືນເມືອບ້ານ
ແມ່ນວ່າ ຝູງຫມູ່ເສນາທ້າວ   ຊາວເມືອງນ້ອຍໃຫ່ຍ
ເຂົາກໍ່ ເຂົາກັນເມືອສູ່ບ້ານ   ເຮືອນຢ້າວນັ່ງເຊົາ
+ ຄັນວ່າ ມາຮອດແລ້ວ   ແລ້ວຢູ່ເຢັນໃຈ
ກໍ່ບໍ່ມີ ອົນຕາຍ   ບຽດບຽນພານຕ້ອງ
ອັນນີ້ ກໍ່ຫາກເປັນແຕ່ເຕໂຊເຈົ້າ   ເມືອງທະວາດີບຸນມາກ ຈິ່ງແລ້ວ
ຝູງຫມູ່ ສັດຕູຂາມຍ່ອນຢ້ານ   ໂຍມເຈົ້າພ່າຍພັງ
+ ກໍ່ບໍ່ມີ ເມືອງໃດເຂົ້າ   ບັງບ່ຽດ ປະຈໍາຈົບ ໄດ້ແລ້ວ
ພະກໍ່ຫາກ ມີຄວາມສຸກ   ດັ່ງພະອິນບົນຟ້າ
ກໍ່ຫາກ ລືຊາທ້າວ   ເມືອງໄກປະເທດຕ່າງ ຈິ່ງແລ້ວ
ບໍ່ອາດ ຈັກມີຜູ້ມ້າງ   ຍິນຢ້ານແຕ່ໄກ ເຈົ້າເອີຍ

20– ພະຍາບອກຊຽງໝ້ຽງມາກ່ອນໄກ່

+ ແຕ່ນັ້ນ ພະບາດເຈົ້າ   ຈາຕໍ່ພາຍໃນ
ສູຈົ່ງ ເມືອເຮືອນຊຽງ   ບອກມັນມາແທ້
ຢ່າໃຫ້ ມັນນານຊ້າ   ມາພະລັນມື້ອື່ນ
ໃຫ້ມາ ກ່ອນໄກ່ແທ້   ຢ່າຊ້າຣິບມາ ທ່ຽວເທີ້ນ

+ ແຕ່ນັ້ນ ໄທເດັກນ້ອຍ   ໂດຍອາດຍາເມືອງ
ເຂົາກໍໄປ ພະລັນເຖິງ   ຮອດເຮືອນຊຽງຫມ້ຽງ
ແລ້ວຖະແຫລງ ຄຳຕ້ານ   ຈາລະຈາບົນບອກ
ບັດນີ້ ພະບາດໄທ້   ທັນທ້າວທ່ານຊຽງ ແທ້ດາຍ
+ ໃຫ້ຮີບມາກ່ອນໄກ່ແທ້   ມື້ອື່ນເຮວພະລັນ ວ່ານາ
ທ່ານຢ່າ ໄດ້ທຳເມີນເສີຍ   ຫນ່ວງເນີນນານຊ້າ
ຄວາມກໍ່ ມີມາເທົ້າ   ເຫນືອຫົວປົງອາດ
ພະຫາກ ຕັດຂາດມ້ຽນ   ໄປຊ້າໂທດຊິມີ ທ່ານເອີຍ
+ ແຕ່ນັ້ນ ຊຽງຫມ້ຽງຕ້ານ   ຈາຕໍ່ຫູຕາ
ບັດນີ້ ຂ້ອຍຫາກ ໂດຍຄຳຕາມ   ພະຍອດເມືອງເປັນເຈົ້າ
ຂ້ອຍກໍ່ບໍ່ ໄດ້ຂັດຂວາງຂອງ   ຄຳພະຍາຈັກສັ່ງ ອີສັ່ງແລ້ວ
ແຕ່ນັ້ນ ຄົນຊ່ວງໃຊ້   ຟັງແລ້ວວາດີ ແທ້ແລ້ວ
+ ເຂົາກໍ່ ເຮວຮີບຟ້າວ   ເມືອໄຫວ້ ແຫ່ງພະຍາ
ບອກວ່າ ຊຽງຍອມຮັບ   ຮູ້ອັນດີແລ້ວ
ຊຽງຫມ້ຽງ ໂດຍຈອມເຈົ້າ   ຊິມາຕາມຄຳສັ່ງ ພະເອີຍ
ວັນພຸ່ງນີ້   ຊຽງຫມ້ຽງຫາກຊິມາ
+ ແຕ່ນັ້ນ ສຸລິເຍດຄ້ອຍ   ມົວມືດສູນແສງ
ມັນແມ່ນ ຕາເວນຕົກ..   ຄ່ຳຈວນບໍ່ມີແຈ້ງ
ປວງປະຊາຊົນພ້ອມ   ພາແລງສະເຫວີຍພ່າງ
ສຽງກອງຍາມປ່າວໂປ້ງ   ເລີຍແລ້ວລວດນອນ
+ ໃນກາງຄືນ ມັ້ນນະ   ມີຫມູ່ດາວສະເພົາ
ເຮືອງເຮືອ ຮົງໆແສງ   ສ່ອງລົງບົນຟ້າ

ດາວເສືອຊ້ອງ ປະກາຍແວວວິວລາບ

ຝູງຫມູ່ ດາວໄກ່ນ້ອຍ ແຝງພ້ອມພ່າງພາ

+ ກັບທັງ ດາວຄ່າງຕັ້ງ ຊ້າງໃຫຍ່ເວີຍງາ ພຸ້ນເຍີ

ກັບທັງ ດາວເພດານ ທ່ຽງຊັນພຽງເຄົ້າ

ຍາມນັ້ນ ເມືອງຫລວງກວ້າງ ຄົນນອນສະຫງັດຢູ່

ເລີຍເລື່າ ເຖິງຕູດຊ້າຍ ກອງເຄົ້າຮອດຄົວ

+ ແຕ່ນັ້ນ ໄກ່ຕື່ນພ້ອມ ຕົບປີກຂານຂັນ

ດີແຕ່ ແຊວງມັນ ສົ່ງສຽງຂັນທ້າ

ແຕ່ນັ້ນ ຊຽງກໍ່ຢອງງເຂົ້າ ເມືອໃນໃຕ້ລ່າງ

ມັນກໍ່ຈື່ງ ຈັບໄກ່ໄດ້ ຂັງໄວ້ໃສ່ຍາງ

+ ແຕ່ນັ້ນ ຕາເວັນຍ້າຍຈາກຫ້ອງ ຫົນຫລ່ຽມເຂົາສະເຫມັນ

ດີແຕ່ ຂຸມພູເຮືອງ ທີບແສງເລີຍແຈ້ງ

ມັນໄດ້ ກາຍມາຕັ້ງ ອະລຸນມື້ໃຫມ່

ຊຽງກໍ່ຄິດ ວ່າຊິເດີນດຸ່ງດັ້ນ ໄປເຝົ້າພີ່ພະຍາ

+ ຊຽງໄດ້ ປັ້ນເຂົ້າເຊົ້າ ໃຫ້ມັນອີ່ມເຕັມແຮງ

ແລ້ວເລື່າ ຄວາຄີເອົາຄໍາ ຫມາກມາປຸ້ນຄຽວ

ອີງໃສ່ເທິງ ຫມອນເທົ້ງ ເອົາຂາລົງວາງໄຂ່ວ

ຊຽງບໍ່ຄິດ ເດືອດຮ້ອນ ນອນຫລົ້ນຢູ່ສະບາຍ

+ ຊຽງບໍ່ຄິດວ່າ ພະບາດເຈົ້າ ໄດ້ໃຫ້ເມືອໄວ

ມັນກໍ່ ເຢັນໃຈນອນ ເພີດເພີນໃຈແທ້

ມັນວ່າ ເຖິງເມື່ອຕາເວັນຄ້ອຍ ພໍແລງໃກ້ຄ່ຳ

ຊຽງກໍ່ ຈື່ງເມືອຂາບໄຫວ້ ທູນເຈົ້າພະຍອດເມືອງ

+ ແຕ່ນັ້ນ ຊຽງໝ້ຽງມັນບໍ່ຊ້າ ຜູກໄກ່ແກ່ນຳຫລັງ
ອັນວ່າ ມື້ມັນຖື ເຊືອກດຶງເມືອໜ້າ
ແຕ່ນັ້ນ ກຸດໂຕຮ້ອງ ນຳຫລັງຈອກໆ
ອັນວ່າ ໄກ່ແຮ່ງຮ້ອງ ບັກຊຽງໝ້ຽງພັດຍ່າງໄວ
+ ເມື່ອນັ້ນ ຊຽງມາບປ່ອຍ ດ່າໄກ່ສຽງແຂງ
ບັກເຫວັນ ກິນຫົວມຶງເອີຍ ສິ່ງໃດຊິມາຮ້ອງ
ບັດນີ້ ລາຊາໃຫ້ ກູໄປແວນທ່ຽວ ຈິງດາຍ
ກູຈິ່ງ ໄປຮີບຮ້ອນ ໄປຟ້າວກ່ອນມຶງ ໄກ່ເອີຍ
+ ພະກໍ່ ບິນບອກໃຫ້ ມຶງຄ່ອຍນຳຫລັງ ແທ້ດາຍ
ມຶງຢ່າ ໄດ້ໄປອວນທາງ ກ່ອນກູເມືອໜ້າ
ຄັນວ່າ ກາຍຄວາມເຈົ້າ ເໜືອຫົວ ຜິດອາດ ຍາແລ້ວ
ກູຫາກ ຢ້ານແທ້ໆ ພະຍາເຈົ້າຊິໂກດເຄັ່ນ ບໍ່ຮູ້
+ ບັດນີ້ ມຶງສັ່ງມີແຕ່ຮ້ອງ ບໍ່ເຊົາພັກຈັກຍາມ ແທ້ເດ
ມຶງບໍ່ຟັງ ຄວາມກູ ກູຊິເອົາໄປປີ້ງ ແທ້ດາຍ
ມຶງບໍ່ຟັງ ຄວາມກູແທ້ ຄືນເມືອເຮືອນຊິຂ້າອ່ອມ
ກູຈັກ ສີກຊຸບຊົ້ວ ກິນແທ້ກໍ່ຫາກນົວ ໄກ່ເອີຍ
+ ແຕ່ນັ້ນ ພວກໝູ່ທ້ວງ ຊຽງແກ່ໄກ່ນຳຫລັງ
ມາເບິ່ງຊຽງ ລອງດູ ສັ່ງວ່າເປັນແນວນັ້ນ
ເອົາກໍ່ ແຊວໆທ້ວງ ຫົວຂ້ວນຊິສ່ວາ
ເອົາກໍ່ ບໍ່ທ່ອນຮູ້ ຊຽງນີ້ຊ່າງເປັນ ແທ້ເດ
+ ຊຽງສັ່ງມາ ລາກຫີ້ນ ແກ່ໄກ່ນຳຫລັງ ນີ້ນໍ
ແໜງສູ້ ບິດຄໍເສຍ ອ່ອມກິນລາງແລ້ວ

ແຕ່ນັ້ນ ຊຽງໝ້ຽງມັນຕອບຖ້ອຍ　　ຈາໄຂຂານຕອບ

ເປັນສັງ ສູຈິ່ງເວົ້າ　　ທິວເປີ້ຍແຕ່ກູ ນີ້ເດ

+ ອັນວ່າ ລາຊາເພີ່ນບອກໃຫ້　　ໄປກ່ອນໄກ່ ຈິ່ງດຶງມາ

ກູຈິ່ງ ເຮວພະລັນເລີຍ　　ແກ່ໄກ່ມານຳກົ້ນ ນີ້ແລ້ວ

ເມື່ອວ່າ ໄກ່ຫາກແກກຸຮ້ອງ　　ຊຽງກໍ່ດຶງແຮງຕື່ມ

ເພື່ອໃຫ້ ໄປຮອດເຈົ້າ　　ພະຍານັ້ນຫ່ວງທັນ ເຈົ້າເອີຍ

+ ມັນກໍ່ຈິ່ງ ເມືອໄຫວ້ເຈົ້າ　　ກົ້ນຂາບພະຍາຫລວງ

ພໍໃຫ້ ຄວາມພະອົງ　　ວ່າຊົວດີຫລືຮ້າຍ

ອັນວ່າ ເໜືອຫົວເຈົ້າ　　ທັນມາກ່ອນໄກ່

ບັດນີ້ ຂ້າກໍ່ມາຮອດແລ້ວ　　ຈອມເຈົ້າຊິວ່າສັງ ນີ້ເດ

+ ຂ້າກໍ່ ຫາກໂດຍອາດເຈົ້າ　　ຢັ້ງຂະໜ່ອມມາເປືອງ ພະເອີຍ

ໄກ່ກໍ່ ມານຳຫລັງ　　ຜູ້ຂ້າມາເຖິງນີ້

ແຕ່ນັ້ນ ຕີງລີງໜ້າ　　ພະຍາຫລວງຄຶດຄຽດ

ແຕ່ເລົ່າ ປາກກ່າວຕ້ານ　　ລືມເສື່ອງອື່ນໄປ ເຈົ້າເຮີຍ

21– ບອກຊຽງໝ້ຽງໄປເກັບໝາກພິກ (ໝາກເຜັດ)

+ ແຕ່ນັ້ນ ພະກໍ່ຈິ່ງສະເຫວີຍຍັງເຂົ້າ　　ພ້ອມຫລາຍສິ່ງອາຫານ

ມີລາບເປັດແກງປາ　　ໄຂ່ເຄັມໝູປີ້ງ

ແຕ່ນັ້ນ ພະກໍ່ຄະນຶງໃຈຮູ້　　ແກງເຜັດຂອງແຊບ

ຢາກຈະເອົາໝາກເຜັດມາກິນກັບສົ້ມຊີ້ນ　　ທັງສົ້ມໄຂ່ປາ

+ ພະຈິ່ງ ອອກປາກຕ້ານ　　ເວົ້າບອກດອມຊຽງ

ມຶງຈຶ່ງໄປ ເກັບໝາກເຜັດ   ໃຫ້ແກ່ກູດຽວນີ້
ກູຈັກ ກິນກັບສົ້ມ   ໃຫ້ມັນນົວກິນແຊບ ຊຽງເອີຍ,
ມຶງຢ່າ ໄດ້ຢູ່ຊ້າ   ດຽວນີ້ ທ່ຽວເປືອງ ແທ້ເນີ
    + ແຕ່ນັ້ນ ຊຽງໝັ້ນຽງມັນບໍ່ຊ້າ   ເຮວຮີບໄປເປືອງ
ພອຍເລົ້າ ໄປເຖິງສວນ   ໝາກເຜັດເຕັມຕົ້ນ
ຊຽງກໍ່ບໍ່ ໄດ້ປິດເອົາແທ້   ພະລັນຫາແຕ່ໜ່ວຍຫລືນ
ມັນກໍ່ທໍ່ ຊອກແຊກໄວ້   ທາງພົ້ນປີດຫາ
    + ແລ້ວເລົ້າ ປີດກວດແພ້ວ   ຂ່ວງຂອດໃນກົກ
ແມ່ນວ່າ ວຽນໄປມາ   ຮອດບໍ່ເຫັນດາຍແທ້
ຕັ້ງບໍ່ເຫັນ ໝາກເຜັດແທ້   ໃນດົນຈັກໜ່ວຍ
ແມ່ນວ່າ ລົມພັດຕອງ   ກໍ່ດາຍແລ້ວບໍ່ຫລືນລີງ
    + ເຫັນແຕ່ ອັນໜ່ວຍຈີບຢູ່ຕົ້ນ   ເຕັມງ່າກອງກັນ
ຕັ້ງວ່າ · ມີດົກໜາ   ບໍ່ຫລືນລົງໄກຕົ້ນ
ຊຽງກໍ່ເລີຍ ບໍ່ໄດ້ເອົາເມືອໃຫ້   ຖວາຍພະຍາຈັກໜ່ວຍ
ອີຫລີແລ້ວ

ເຫລືອທີ່ ອີດອ່ອນຮ້າຍ   ຫາໄດ້ກໍ່ບໍ່ເຫັນ ແທ້ດາຍ
    + ກໍ່ຫາກ ອີດເມື່ອແລ້ວ   ຊຽງນັ່ງຈື່ມເຊົາແຄນ
ໝາກເຜັດມັນມີຫລາຍ   ບໍ່ຫລືນລີງໃຫ້ເກັບໄດ້
ຕັ້ງຫາກ ເຫລືອແຮງແທ້   ມາບໍ່ເຫັນຈັກໜ່ວຍ
ເຫັນແຕ່ໃບ ບໍ່ແພ້   ເຫລືອຮ້າຍບໍ່ຫລືນລີງ ເຈົ້າເອີຍ
    + ເມື່ອຈັກ ປິດເອົາອັນຕິດຢູ່ຕົ້ນ   ພັດບໍ່ຖືກຄວາມພະຍາ
ບອກໃຫ້ ໄປເກັບເອົາໝາກເຜັດ   ໃຫ້ເພີ່ນກິນກັບສົ້ມ

ກູຄ່ອຍ ນອນອິງເນີ້ງ	ຄອງຄອຍຖ້າໃຫ້ຫລື່ນ
ຖິວຫວອດໆຢູ່ຖ້າ	ນອນເຫົ້ງຢູ່ດົນ ແທ້ແລ້ວ
+ ຄອຍຖ້າລົມພັດຟາດຕ້ອງ	ຫມາກເຜັດຫລື່ນຕົກລົງ
ກໍ່ຫາກ ເນີນນານເຖີງ	ໂລດບໍ່ເກັບເອົາໄດ້
ເມື່ອນັ້ນ ພະຍາເຫວີຍເຂົ້າ	ຄອງຫາຫມາກເຜັດຢູ່
ອຶດນັ່ງ ຖ້າທ່ານເຈົ້າ	ຊຽງຫມັ້ນຽງກໍ່ບໍ່ເຫັນ ແທ້ດາຍ
+ ພະຍາ ກໍ່ເລີຍຈື່ມໃຫ້	ທັງຄຽດຟຸມຟາຍ
ຈັກວ່າ ມັນໄປທຳການໃດ	ຢູ່ເທີງເປັນກະດີ້
ຮ້ອຍວ່າ ມີໄພຮ້າຍ	ອັນຕະລາຍບັງບຽດ ບໍ່ຫ່າແລ້ວ
ຊຽງຈື່ງ ໄປມິດຈ້ອຍ	ປານນີ້ກໍ່ບໍ່ມາ
+ ແຕ່ນັ້ນ ໄທເດັກນ້ອຍ	ເຮວຮີບໄປເປືອງ
ເຮວພະລັນເຖີງ	ຮອດໂຕຊຽງຫມັ້ນຽງ
ມັນກໍ່ ຍັງນອນເຫົ້ງ	ຖິວດັງຫວອດໆ
ແຕ່ນັ້ນ ໄທເດັກນ້ອຍ	ຄົນໃຊ້ມາບຊຽງ
+ ຍັງວ່າ ພະບາດໃຫ້	ຊຽງທ່ຽວເກັບເມືອ ວ່າດາຍ
ສັງວ່າ ມານອນຖິວ	ຢູ່ດາຍອີງເຫົ້ງ
ເພິ່ນຫາກ ຈຳຊຽງໃຫ້	ມານອນຖິວຢູ່ ຈີງລີ
ຊຽງຫາກ ຮ່າວເຮັດດັ່ງນີ້	ເມືອຫນ້າບໍ່ດີ ແທ້ດາຍ
+ ເມື່ອນັ້ນ ຊຽງຕອບຕ້ານ	ຮັບພາກຄົນໃນ
ພະກໍ່ຫາກ ຈຳມາເກັບຫມາກເຜັດ	ຂ້ອຍຫາກຫາບໍ່ທັນໄດ້
ຕັ້ງຫາກ ເຫລືອແຮງຂ້ອຍ	ວຽນຫາຫລາຍເທື່ອ ເລີງແລ້ວ
ສຸດທີ້ຂ້ອຍ ຫາກຄົວດເຂ່ຍໄວ່	ທາງພົ້ນກໍ່ບໍ່ເຫັນ ເຈົ້າເອີຍ

+ ອັນວ່າໝາກເຜັດກໍ່ເປັນບໍ່ແພ້ແລ້ວ   ພໍວ່າຕາຫັກ ພຸ້ນແລ້ວ

ສັງເລົ່າ ມາແຂວງອັດ   ບໍ່ຫລື່ນລີ້ງມາພົ້ນ

ແຂວງວ່າ ປິດເອົາແທ້   ຊິຫັນຖວາຍສາມເທື່ອ
ພຸ້ນແລ້ວ

ອັນນີ້ ກໍ່ຫາກບອກໃຫ້ເກັບຫ່ຽວແທ້   ຄວາມເຈົ້າສັ່ງເຣົາ ທ່ານເອີຍ

+ ເມື່ອວ່າ ຂ້ອຍຈັກບາຍປິດແທ້   ພະຊິໂກດໂກທາ ຫັ້ນແລ້ວ

ຢ້ານທໍ່ ມີຄວາມຜິດ   ບໍ່ຖືກໃຈພະຍາເຈົ້າ

ເທື່ອນີ້ ລາຊາເຈົ້າ   ຟຸນຟາຍກົ້ວໂກດ
ກໍ່ຍອມແລ້ວ

ເຫດວ່າ ຂ້ອຍຫາກມານອນຢູ່ຖ້າ   ຖືວລ້າຊອກບໍ່ເຫັນ ເຈົ້າເອີຍ

+ ຄັນວ່າ ລືມຜັດຕ້ອງ   ໝາກເຜັດຫລື່ນລີງດິນ
ເມື່ອໃດ

ຂ້ອຍກໍ່ຈັກ ເກັບໄປຖວາຍ   ແດ້ອົງພະຍາເຈົ້າ

ແຕ່ນັ້ນ ຫູຕາໃຊ້   ໄດ້ຍິນຄຳຊຽງກ່າວ

ມັນກໍ່ ປິດເອົາໝາກເຜັດພິກໄດ້   ພໍແລ້ວເລົ່າເມືອ

+ ເຖິງແຫ່ງຫ້ອງ   ພາສາດທໍຄຳ

ມັນກໍ່ ນຳໄປຖວາຍ   ໃຫ້ພະຍາກິນແກ້ມ

ແຕ່ນັ້ນ ພະຍາຫລວງເຈົ້າ   ເຫວີຍພາແລ້ວຢ່ຳ

ເມື່ອນັ້ນ ຄືນຂ້າໃຊ້   ກໍ່ເລີຍໄຫວ້ພໍ່ພະຍາ

+ ບັດນີ້ ຂ້າໄຫວ້ເຈົ້າ   ຢັ້ງຂະໜອ່ມເໜືອຫົວ

ອັນວ່າ ຊຽງໝ້ຽງກໍ່ຫາກຍັງນອນຖີວ   ໄປ່ມາປານນີ້

ມັນຫາກຖ້າໃຫ້ລືມພານຕ້ອງ   ສາຂາໝາກພິກຫລື່ນ ວ່າດາຍ

ຄັນວ່າມັນຫາກເກັບໄດ້ແລ້ວ　　ຊຽງໝ້ຽງຈຶ່ງຊິມາ ພະເອີຍ
+ ແຕນັ້ນ ພະບາດເຈົ້າ　　ຮູ້ສຶກວ່າລືມຊຽງ
ຈຸດອ່ອນ ມີໃນຄວາມ　　ວ່າໄປຈິງແທ້
ພະກໍ່ ເລີຍຫົວແທ້　　ລືມຊຽງເວົ້າບໍ່ຖືກ
ຊຽງກໍ່ຈົບ ເອົາຄວາມເວົ້າບໍ່ແຈ້ງ　　ມາປັ້ນໃສ່ເຮົາ ຫັ້ນແລ້ວ
+ ແຕນັ້ນ ຈິນຄ່ຳຄ້ອຍ　　ລັບຫລ່ຽມເຂົາສະເໝັນ ພຸ້ນເຢີ
ຊຽງເລົ່າ ເມືອໂຮງຄຳ　　ຂາບທູນພະຍາເຈົ້າ
ເຫລືອທີ່ ຂ້າຫາກຮຸນແຮງຖາ　　ລືມຕີນມາບໍ່ຫລື່ນ ພະເອີຍ
ຕັ້ງຫາກ ບໍ່ໄດ້ເກັບດັ້ງ　　ຖວາຍເຈົ້າຢູ່ຫົວ ແທ້ນາ
+ ແມ່ນວ່າ ຈັກກັ້ວໂກດຂ້າ　　ກໍ່ແມ່ນສ່ວນຍອມຕາຍ
ແທ້ແລ້ວ
ຫມາກເຜັດມັນບໍ່ຫລື່ນຕົກລົງດິນ　　ຈິນຄ່ຳມາປານນີ້
ຂ້າກໍ່ບໍ່ ທັນເກັບໄດ້　　ເອົາມາຈັກຫນ່ວຍ
ຫາຊອກ ເກັບບໍ່ໄດ້　　ຢູ່ດິນນັ້ນບໍ່ມີ ແທ້ນາ
+ ແຕນັ້ນ ພະບາດເຈົ້າ　　ຄຽດເຄື່ອງກໍ່ເລີຍຫົວ
ເຈົ້າກໍ່ ເອົາຄວາມລົມ　　ອື່ນມາຕັ້ງໄວ້
ເມື່ອຈັກ ຈຳນຳເວົ້າ　　ກໍ່ກົວຊຽງຊິຜິດຄ່າ ດັ່ງນັ້ນ
ຢ້ານແຕ່ ຝູງໄພ່ນ້ອຍ　　ຊຸນທ້າວບໍ່ຢຳ ຫັ້ນແລ້ວ

22– ຊຽງໝ້ຽງຕົວະພະຍາລົງໝອງ

+ ບັດນີ້ ຈັກກ່າວເຖິງ ພະບາດໄທ້ ຕົນພືພະຍາເມືອງ ກ່ອນແລ້ວ

ຄຶດຄຽດ ຄຸງໃນໃຈ	ໄປດີປານນີ້
ຍ້ອນວ່າ ຊຽງມັນໄດ້	ຫລາຍປະການຫລີບລ່ຽມ
ເຮັດໃຫ້ ພະບາດເຈົ້າ	ຟຸນແຄ້ນຄຽດບໍ່ລືມ
+ ບັດນີ້ ພະຈັກຄິດເກື້ອຍແກ້	ລອງເບີງພະຫຍາຊຽງ ກ່ອນແລ້ວ
ວ່າຈັກ ມີໄຫວພິບ	ສ່ຳໃດຈິງແທ້
ເມື່ອນັ້ນ ພະກໍ່ຈຳຄືນໃຊ້	ຊາວສະຫນົມພວກຫມູ່
ວ່າຈັກ ໄປທ່ຽວຫລິ້ນ	ສວນກວ້າງໃຫ້ສ່ວາງໃຈ ກ່ອນແລ້ວ
+ ສູຈຶ່ງ ຮີບຟັງຟ້າວ	ຕົກແຕ່ງດາດີ ທ່ຽວເຫັ້ນ
ແລ້ວ ຈຶ່ງ ແຍງອຸທິຍານ	ບ່ອນເປັນສວນກວ້າງ
ຍາມນັ້ນ ຊາວວັງພ້ອມ	ພະລັນເປືອງປຸນແລ່ນ
ບໍລະບວນ ຮີບຫ້າງ	ຂອງແລ້ວຊູອັນ
+ ເຖິງເມື່ອ ຍາມຮອດແລ້ວ	ຂະບວນແຫ່ເດີນໄປ
ແຍງໄພຫນາ	ປ່າດົງດອນໄມ້
ຍົນໆຍ້າຍ	ຂະບວນເດີນດັ້ນລ່ວງ
ອັນວ່າ ພະບາດເຈົ້າ	ທົງຊ້າງເປືອກງາມ ແທ້ແລ້ວ
+ ຫລຽວເບິ່ງ ບາບໆຍ້າຍ	ຂະບວນແຫ່ລາຊາ
ເດີນໄພຫນາ	ທ່ຽວຊົມສວນກວ້າງ
ທັງປວງຂ້າ	ເສນາແຫນແຫ່
ແອອິ່ງເອົ້າ	ຄືນເຄົ້າຄົ່ງທາງ
+ ອັນວ່າ ຊຽງຫມ້ຽງນັ້ນ	ແລ່ນຕອດຢອດນຳມາ

ບໍ່ຈື່ຈຳ ຄຳອິນ	ພີ່ພະຍາຄາວນັ້ນ
ພໍ ເມື່ອໄປເຖິງແລ້ວ	ສວນຫລວງກາງປ່າ
ພະຍາ ຫົງຂີ່ຊ້າງ	ຊົມຫລິ້ນມ່ວນໃຈ
+ ຍາມເມື່ອ ຊົມຈົນໃກ້	ສະໃຫ່ຍ ວັງເລິກ
ພະອົງ ໄຂວາຈາ	ຕໍ່ຊຽງພໍຮູ້
ວ່າໃຫ້ ລອງດູຫ້ອນ	ຊຽງເອີຍວ່າໂຕເກັ່ງ
	ຈິງນັ້ນ
ມີພະຫຍາ ລື່ນລົ້ນ	ຄົນຮູ້ທົ່ວແດນ
+ ຄັນຊຽງ ດີຂະໜາດແທ້	ລອງຫລອກເຮົາດູ
ກູຢາກ ລອງເຊີງມຶງ	ວ່າຊິພຽງໃດແທ້
ລອງຕົວະໃຫ້	ກູລົງໜອງໃຫ່ຍ ດູແມ
ຄັນວ່າ ດີຂະໜາດແທ້	ລອງຫ້ອນຢາກເຫັນ
+ ແຕ່ນັ້ນ ຊຽງຕອບຕານ	ຂານຕໍ່ພະລາຊາ
ໃພວ່າ ຊຽງຕົວະເປັນ	ດັ່ງຄືຄຳເວົ້າ
ຈະໃຫ້ ຕົວະລົງນັ້ນ	ຊຽງບໍ່ເຄີຍຈັກເທື່ອ
	ພະຍາເອີຍ
ຄັນວ່າລົງ ແລ້ວຕົວະໃຫ້ຂຶ້ນ	ອາດຈະ ໄດ້ດັ່ງໝາຍ
+ ແຕ່ນັ້ນ ພະຍາດເຈົ້າ	ໄດ້ຟັງພາກຊຽງຈາ
ຄິດບໍ່ເຖິງ ປັນຍາ	ທີ່ຊຽງລວງລໍ້
ພະຈຶ່ງ ຂໍລອງຫລິ້ນ	ພະຫຍາຊຽງໃຫ້ມັນສ່ວາງ
	ກໍ່ໃຈແລ້ວ
ພະກໍ່ ລົງຈາກຊ້າງ	ໄວຟ້າວກ່າວຖະແຫລງ

+ ພະອົງ ລົງສູ່ນ້ຳ　　ສະໃຫ່ຍກາງຫນອງ
ແລ້ວຈຶ່ງ ຫລຽວມານອງ　　ກ່າວຈາຊຽງຫມ້ຽງ
ບັດນີ້ ກູກໍລົງມາແລ້ວ　　ກາງຫນອງລອງເບິ່ງ ຊຽງເອີຍ
ໃຫ້ມຶງ ຕົວະໃຫ້ອື້ນ　　ລອງທ້ອນວ່າດີ

+ ແຕ່ນັ້ນ ຊຽງຕອບຖ້ອຍ　　ທູນບາດລາຊາ
ຈັກວ່າ ດີຫລືໃດ　　ເບິ່ງເອົາກໍພໍຮູ້
ຊຽງຫາກ ຕົວະລົງແລ້ວ　　ຈົນເຖິງກາງສະໃຫ່ຍ
ພະອົງ ຈັກອື້ນບໍ່ອື້ນ　　ກໍສຸດແລ້ວແຕ່ໃຈ ພະເອີຍ

+ ເມື່ອນັ້ນ ພະບາດໄທ້　　ຄຶດຮ່ຳໃນໃຈ
ໂອນໍ ກູມາເສຍລາຍເຊີງ　　ເພາະມຶງຄາວນີ້
ມຶງຕົວະກູ ລົງແລ້ວ　　ພັດແວໄປລາຍຕ່າງ
　　ບັກວອນເອີຍ
ມຶກວ່າ ຈົງດັ່ງຂໍ້　　ມຶງເອົາກໍຈຶ່ງລົງ ດອກນາ

+ ມຶງວ່າເຄີຍ ຕົວະໃຫ້ອື້ນ　　ສັງບໍ່ເຮັດຕາມຄວາມ
　　ບັກຊຽງເອີຍ
ພໍກູລົງ ກາງຫນອງ　　ພັດແວ່ງອນ ລວງລ້ຽວ
ຍັງເວລາ ທາງຫນ້າ　　ມຶງລະວັງຈົ່ງຄອຍເບິ່ງ
ກູຊິ ກັບຕ່າວປິ້ນ　　ໃຫ້ມຶງຮູ້ຕໍ່ໄປ.

23– ຊຽງໝ້ຽງບັບແມ່ພະທຍາ

\+ ຄັນວ່າຫລາຍຂວບນັ້ນ ພະຍາໂຈດຖາມຊຽງ

ມຶງສັງ ມີຄວາມຄິດ ວ່ອງໄວດີແທ້

ຖາມເລື່ອງໃດ ມຶງກໍ່ໄດ້ ແປງໄປໄດ້ປຽບ

ມຶງນີ້ ສັງມາດີເປັນກະດັ້ ພະທຍາລຳລື່ນຄືນ ແທ້ນໍ

\+ ຫລືວ່າ ພະທຍາມຶງຫາກເກີດແຕ່ນ້ອຍ ເປັນແມ່ບົ້ນມາ ນັ້ນລື

ຊຽງກໍ່ ຈຶ່ງໄຂວາຈາ ຕໍ່ກູຄຳພຽນ

ເມື່ອນັ້ນ ຊຽງໝ້ຽງເລີຍຣຽນໄຫວ້ ລາຊາກັບຫລອກ ລວງນັ້ນ

ອັນວ່າ ແມ່ພະທຍາຂ້ານ້ອຍ ໃນທ້ອງກໍ່ບໍ່ຫລາຍ ພະເອີຍ

\+ ທີ່ວ່າ ມັນຍັງເນົາຢູ່ບົ້ງ ອັດແຈບຢູ່ໃນເຮືອນ ພະເອີຍ

ຂ້ານ້ອຍ ເອົາພະທຍາມາ ແຕ່ງປຸນແປງລຽງ

ແຕ່ນັ້ນ ລາຊາຕ້ານ ຈາຊຽງໂດຍຮີບ

ມຶງໄປເອົາມາເບິ່ງຖ້ອມ ກູນີ້ກໍ່ຢາກເຫັນ ແທ້ດາຍ

\+ ກູຈັກ ບອກທ້ອນທ້າວ ພວກຫມູ່ເສນາ

ແລ້ວຈຶ່ງ ເອົາປຸນປັນ ແບ່ງກັນໄປລຽງ

ໃຫ້ມັນດີແຂງກ້າ ລືຊຽງໝົດທຸກຫມູ່

ມຶງຢ່າຈ້າ ເອົາມາພີ້ເບິ່ງແຍງ ນັ້ນເນີ

\+ ເມື່ອນັ້ນ ຊຽງກ່າວຕ້ານ ຂານຕອບລາຊາ

ຊາດທີ່ ຂອງແພງໃຜ ບໍ່ທ້ອນປັນກັນໄດ້

ນອກຈາກ ເໜືອຫົວເຈົ້າ ບໍ່ມີປັນໃຫ້ຜູ້ອື່ນ ໄດ້ແລ້ວ

ອັນນີ້ ຕ້ອງວ່າຂືນບໍ່ໄດ້ ຊິປັ່ນໃຫ້ພີ່ພະຍາ ດອກນາ
+ ຂ້າກໍ່ຈັກ ຖວາຍພະບາດເຈົ້າ ຕີນພີ່ເໜືອຫົວ ຈິງແລ້ວ
ພໍໃຫ້ ເອົາໄປແປງ ປີ່ນສະໜອງໃຫ້ໃສແຈ້ງ
ຄ້ອມວ່າ ຊຽງຈາແລ້ວ ທູນລາພູວະນາດ
ມັນກໍ່ເລົ່າ ກັບສູ່ຫ້ອງ ເຮືອນຢ້າວນັ່ງນອນ ທັ້ນແລ້ວ
+ ຊຽງຈຶ່ງ ຄິດສະຫລາດຮູ້ ເອົາຕໍ່ເປັນພະຫຍາ ແທ້ແລ້ວ
ມັນກໍ່ຈຶ່ງ ເດີນສະແຫວງຫາ ອູ່ວັນເລີຍໄດ້
ຊຽງກໍ່ຈຶ່ງ ແປງໂກນບັ້ງ ເອົາມາຂັງໃສ່
ຫົວແມມົ້ມ ແກມເຜົ້າຕໍ່ແຕນ
+ ມັນກໍ່ ໄດ້ມາກລົ້ນ ລ້ຳຍິ່ງອະນັນຕັງ ແທ້ດາຍ
ຊຽງກໍ່ຫາກ ຫຽວໄປເອົາ ເຖິງຫ້າວັນເລີຍໄດ້
ຄັນວ່າ ຊຽງຫາໄດ້ ພໍໃຈນອນຢູ່
ບໍ່ໄດ້ ຄິດເດືອດຮ້ອນ ສັງແທ່ທໍ່ໄຍ
+ ເມື່ອນັ້ນ ພະບາດເຈົ້າ ສະຖິດຢູ່ຄອງຊຽງ ທັ້ນແລ້ວ
ຄອງໃຫ້ ຊຽງເອົາ ແມ່ພະຫຍາມາກ້າ
ພະກໍ່ ມີອາດຍາໃຫ້ ສາວສະໜົມເປັນໝູ່
ໄປເອົາ ແມ່ພະຫຍາເກົ້າກ້າ ຊຽງໜ້ຽງດ່ວນມາ ທ່ຽວເຫັ້ນ
+ ໃຫ້ວ່າ ກູບອກໃຫ້ ມາເອົາແທ້ແມ່ພະຫຍາ
ເອົານຳ ກະນິດຖາ ຜູ້ຊື້ຕົວຊຽງໜ້ຽງ
ໃຫ້ວ່າ ກູຄ້ອງຖ້າ ຫາມັນໄດ້ສາມສີ່ ຄືນແລ້ວ
ກໍ່ບໍ່ ເຫັນມາຂາບໄຫວ້ ທູນໄທ້ແຫ່ງກູ ນັ້ນດາຍ
+ ເມື່ອນັ້ນ ສາວສະໜົມໄດ້ ຍິນຄຳບອກຂອງພະຍາ

ເອົາກໍ່ ແຊວງຂໍ　　　　ຊູຄົນຈົ່ງແທ້
ຂໍແກ່ ເໜືອຫົວເຈົ້າ　　　　ຈົ່ງປັນຝູງຂ້ານ້ອຍແດ່
ຈົ່ງເທີ້ນ
ຝູງຂ້າ ຈັກຕັ້ງຕໍ່ລ້ຽງ　　　　ຖະໜອມໄວ້ໃຫ້ດີ ແທ້ແລ້ວ
+ ແຕ່ນັ້ນ ພະບາດຕ້ານ　　　　ບອກໝູ່ສາວສະໜົມ
ອັນວ່າ ແມ່ຕົວພະຫຍາ　　　　ຢູ່ນຳຊຽງໝັ້ນຽງ
ບັດນີ້ ສູ່ຈົ່ງເອົາກັນພ້ອມ　　　　ໄປມວນໝົດໝູ່
ຂໍເອົາແມ່ພະຫຍາ ດອມທ່ານເຈົ້າ　　　　ຊຽງໝັ້ນຽງຊູຄົນ ຫັ້ນທ້ອນ
+ ຕາມແຕ່ ມັນຫາກອື່ດູຮັກແທ້　　　　ເອົາແບ່ງປັນກັນ
ກູກໍ່ເອົາແຕ່ຊຽງເປັນ　　　　ຊິແບ່ງປັນຄົນລະນ້ອຍ
ເມື່ອນັ້ນ ສາວສະໜົມຟ້າວ　　　　ຍິນດີຊົມຊື່ນ
ເອົາກໍ່ເລົ່າ ຕົກແຕ່ງທ້າງ　　　　ດາເນື້ອຮີບໄປ
+ ຍາບໆຍ້າຍ　　　　ເຕັ້ນໄຕ່ຕາມທາງ
ເຖິງເຮືອນຊຽງ　　　　ນັ່ງເປືອງຖາມຖອຍ
ບັດນີ້ ຈອມຫົວໃຈ　　　　ຕູມາເອົາແມ່ ພະຫຍາແລ້ວ
ຊຽງຢ່າໄດ້ຢູ່ຊ້າ　　　　ເອົາໃຫ້ແກ່ຕູ ນີ້ເທີ້ນ
+ ກູກໍ່ ຈັກເອົາເມືອ ຖວາຍມອບໃຫ້ ຕົນພໍ່ພະຍາຫລວງ
ເພີ່ນຫາກ ຄອງຄອຍຫາ　　　　ພ່ຳນານເປັນປີ້ງ
ຄອງເອົາ ແມ່ພະຫຍາແທ້　　　　ດອມຊຽງສະເໜີສິ້ງ
ພະຈື່ງ ບົນບອກໃຫ້　　　　ພວກຕູຄັ້ນດ່ວນມາ ນີ້ແລ້ວ
+ ບັດນີ້ ຕູຝູງຂ້າຂໍພີ່ເຈົ້າ　　　　ຈົ່ງເອົາໃຫ້ຄົນຕົວ ແດ່ທ້ອນ
ຕູກໍ່ຈັກ ກະທຳຄືຊຽງ　　　　ລ້ຽງໃສ່ລົ້ງໃນບັ້ງ

ແຕ່ນັ້ນ ຊຽງຈາຕ້ານ ນຳສະໜົມຂານຕອບ
ຂ້ອຍບໍ່ມີຫລາຍດອກເຈົ້າ ຈະປັນໃຫ້ຜູ້ລະຕົວ
+ ແຕ່ນັ້ນ ຊຽງກໍ່ເອົາບັ້ງໄມ້ ແມ່ພະຫຍາຢູ່ມາດູ
ວາງຢູ່ ໃນແຈເຮືອນ ແມ່ນຕໍ່ແຕນໂຕກ້າ
ເຂົາກໍ່ເລົ່າ ແບນີ້ເຂົ້າ ຫລາຍຄົນຊິສ່ວາ
ເພື່ອວ່າ ເຂົາຢາກໄດ້ ພະຫຍາກ້າແຫ່ງຊຽງ
+ ຊູຄົນ ຊູ່ຫຍັບເຂົ້າໃກ້ ຂໍເບິ່ງນຳຊຽງ
ແມ່ນວ່າ ຊຽງຊິວາຈາຂານ ກໍບໍ່ຟັງພໍ່ນ້ອຍ
ວ່າຊຽງເອີຍ ຄັນວ່າມັນຫາກຍັງຫລາຍແທ້ ຊ້ຳປັນກູອີກກ່ອນ
ກູກໍ່ຍັງ ຢາກໃຫ້ມັນແກ່ກ້າ ພະຫຍາລ້ຳລື່ນຊຽງ ນັ້ນດາຍ
+ ແຕ່ນັ້ນ ຊຽງກໍ່ຄຶດຄຽດພຸ້ນພີ້ ກອຍກ່າວເລີຍຈາ
ວ່າດູລາ ນາງສະໜົມ ຢ່າໂລພາແທ້
ອັນວ່າ ແມ່ພະຫຍາຂ້ອຍນີ້ ຂອງແພງມີຄ່າ ເຈົ້າເອີຍ
ໃຫ້ສູເອົາ ແຕ່ພໍ່ເລັກນ້ອຍ ເປັນເຊື້ອຜູ້ລະໂຕ ກ່ອນທ້ອນ
+ ໃຫ້ຄ່ອຍ ພຽນພ້ຳລຽງ ມັນຫາກແພ່ຫລວງຫລາຍ

ດອກນາ

ພູດຂອງພະຍາ ເຮົາຈະພຽນເອົາ ດ່ວນໄປຖວາຍເຈົ້າ
ຂ້ອຍບໍ່ໃຫ້ ເປືອງແຮງເຈົ້າ ສາວສະໜົມຫມົດຫມູ່ ດອກນາ
ຄັນວ່າ ສູຈັກ ເອົາແມ່ພະຫຍາຫ່ຽງແທ້ ຈົ່ງແບນີ້ຢ່ອງມາ ທ່ຽວເທີ້ນ
+ ຂ້ອຍກໍ່ຈັກ ປັນແບ່ງໃຫ້ ແລ້ວຮີບຕ່າວຄືນເມືອ
ຫລອນວ່າ ເໜືອຫົວຄອງ ເພິ່ນຊິໂກທ່າຮ້າຍ
ເພິ່ນຊິວ່າ ສາວສະໜົມມາເທັນຊູ້ ໂລດເນົານານຫລີ້ນຢູ່

ສາວສະໜົມ ຢາກໄດ້ແມ່ພະຫຍາຫ່ຽວແຫ້ ຈື່ງຊໍຊ້ອງຍື່ນມື

+ ຊຽງກໍ່ຈື່ງ ໄຂປາກບັ້ງ ພະຫຍາອົ້ງອອກມາ

ມັນກໍ່ເລົ່າ ບິນໄປອົບ ຕອດຊູ້ລົນບໍ່ມີເວັ້ນ

ອົບຕອດ ໄປທາງໜ້າ ຕົວຄົງໜົດທຸກບ່ອນ

ສາວສະໜົມດົ່ນດຸ້ນ ເຣຣ້ອງຢ່າວຍົມ

+ ເຂົາເລີຍເລົ່າ ຈົດແຈດຣ້ອງ ສົນສ່ວານເຕັມເຮືອນ

ລາງພ່ອງ ຊະໂຍງຊະເຍງໂຕນ ເກືອກນອນລົງກົ້ງ

ລາງພ່ອງ ປິບປ່ວງຟ້າວ ໂຕນເຮືອນຮີບແລ່ນ

ອັນວ່າ ລົນອົ້ງຈົ້ນ ຄາຄ້າງປາກປະຕູ

+ ລາງພ່ອງ ສະຫວາກເວີກຟ້າວ ຫົວເລົ່າຕຳກັນ

ລາງພ່ອງ ຊົນຕຳຝາ ກະໂດດລົງທາງພື້ນ

ລາງພ່ອງ ເຊຊວນລົ້ມ ນອນຫງາຍສະເວີກວາກ

ລາງພ່ອງລົ້ມ ລົງແລ້ວພັດຕ່າວຢືນ

+ ລາງພ່ອງ ແຈຄຸຣ້ອງ ວ່າຂ້ອຍຊິຕາຍໄປ ມື້ນີ້ແລ້ວ

ລາງພ່ອງ ປິບໄປເໜືອ ລາງພ່ອງລົງທາງໃຕ້ ກໍ່ມີ

ລາງພ່ອງ ເມືອທາງຊ້າຍ ທາງຂວາສົນສ່ວານ

ລາງພ່ອງ ຊົນຝາເຮືອນ ທ່ານທ້າວ ລົງແລ້ວພັດແລ່ນໄປ

+ ອັນວ່າ ແມ່ພະຫຍາກໍ່ບິນເວື່ນວຸ້ນ ມັນທົ່ວຫົງເຮືອນ

ມັນກໍ່ ບິນວົນວຽນ ໄລ່ຕອດລົນທັງຄ້າຍ

ມັນກໍ່ ບິນໄປເຂົ້າ ໃນເຮືອນໜົດທຸກບ່ອນ

ລາງພ່ອງ ໂກກຸຣ້ອງ ທັງໄຫ້ສະນັ່ນເນືອງ

+ ພໍ່ແມ່ເອີຍ ຂ້ອຍຊິຕາຍຈາກເຈົ້າ ນໍລະມົ່ງນອນໜົດ ມື້ນີ້ແລ້ວ

ລາງພ່ອງ ປະສະໄບພິນ　　ປ່ອຍໄປທົ່ງຟາວ
ລາງພ່ອງ ປະສົ້ນເປືອຍໂຕແລ້ວ　　ເຮືອພະລັນໂຕນແລ່ນ
ອັນວ່າ ແມ່ພະຫຍາແບບນີ້　　ສົງມາຮ້າຍຕໍ່ຄົນ ແທ້ນໍ
+ ຕັ້ງວ່າ ບໍ່ຫ່ອນຮູ້　　ພະຫຍານີ້ພອກຫລືອ
ແທ້ນໍ

ລາງພ່ອງ ມາຍມອຍພົມ　　ຈະບໍ່ເປັນຄຳເກົ້າ
ລາງພ່ອງ ນອນລົງພື້ນ　　ດິນດຳກິ້ງເກືອກ
ລາງພ່ອງ ອອງເຕົ່າປີ້ນ　　ລົມຕ້ອງແດດເຜົາ ກໍ່ມີ
+ ຕັ້ງຫາກ ເປັນຫມ້າຫມ່າຍແທ້　　ອາຍຕໍ່ປະຊາຊົນ ແທ້ດາຍ
ຕັ້ງຫາກ ເສຍຂອງແພງ　　ອີແມ່ ແປງປັ້ນໃຫ້
ລາງພ່ອງ ຈູມຈູຫນ້າ　　ຟາຍນ້ຳຕາທົ່ງແລ່ນ ໄປນັ້ນ
ຕັ້ງແມ່ນ ມາພອກພື້ນ　　ພາງຮ້າຍເພື່ອພະຫຍາ
ເຈົ້າເອີຍ

+ ແຕ່ນັ້ນ ຊຽງຫມ້ຽງມັນກໍ່ອຶດໆ ໄຫ້　　ຄາງຈົ່ມຢູ່ໃນເຮືອນ
ຈັກແມ່ນ ແມ່ພະຫຍາຫຍັງ　　ໂຫດເລວຊາມຮ້າຍ
ຊຽງກໍ່ ຍົມມະນາໄຫ້　　ເຈັບໃຈປ່ອຍດ່າ
ກູເອົາມາຫລໍ່ລ້ຽງ　　ພັດມາຄົ້ນຕອດກູ ນີ້ເດ
+ ຕັ້ງຫາກ ເຮັດໃຫ້ເສຍຊື່ແທ້　　ເອົາຊິເລົ່າຂ້ອນກູ ແທ້ແລ້ວ
ເຮັດໃຫ້ ກູເສຍໃຈ　　ຕື່ມທັງເສຍຫນ້າ
ແຂງວ່າ ຍັງຢູ່ເນົາໃນບັ້ງ　　ບໍ່ເປັນສົງກໍ່ດີຢູ່ ຈິງນໍ
ກໍ່ຫາກ ມາໄດ້ຖືກຖອດໄວ້　　ໄຂໃຫ້ແກ່ເອົາ ດັ່ງນີ້
+ ກູຄິດວ່າ ຈະໃຫ້ຂົບຕອດແທ້　　ແຕ່ສະຫນົມຫນຸ່ມທັງຫລາຍ

ມັນຊ້ຳ ພັດຂຶບຄືນທັງຫລາຍ ຕະຫລອດກູເສຍຊ້ຳ
ຕັ້ງຫາກເສຍແຮງ ກູເດີນດັ້ນ ໄປຫາເອົາມາກໍ່ແສນຍາກ
ແລນາ

ຢຽວວ່າ ມັນຊິຂຶບແຕ່ເຂົາຫມູນັ້ນ ພັດມາກັຽວຕອດໂຕ ນີ້ເດ
+ ຕົວວ່າ ມັນຖ່ອຍແທ້ ບໍ່ຮູ້ຮອດບຸນຄຸນ ແທ້ນໍ
ອັນວ່າ ເຜີ້ງ ແລະ ແມວຕໍ່ແຕນ ຈົ່ງແມ່ນແມງແນວຮ້າຍ
ຄັນວ່າ ກູຫາກເຫັນຮັງສູແທ້ ໃນດົງຈັບຢູ່
ກູຈັກ ເອົາໄຟຈູດຊ້ຳ ໃຫ້ຕາຍມ້ຽນຊູຕົວ ນັ້ນແລ້ວ
+ ເປັນຫະມາຈົ່ງ ຍົງແທ້ ທັງຕໍ່ທັງແຕນ ແທ້ແລ້ວ
ມັນແມ່ນ ສັດເລວຊາມ ຍອດຕົວພາງຮ້າຍ
ອັນວ່າ ຕໍ່ ແລະເຜີ້ງມີ້ນ ຊົງຄືນດັ້ນຕອດ ສືນນີ້
ຊຽວກໍ່ ຄາງອື້ງ ເຫລືອໃຈແທ້ຊ່າງເປັນ
ແທ້ນໍ

+ ແຕ່ນັ້ນ ສາວສະຫນົມແລ່ນໄຫ້ ສຽງສະນັ່ນມັນເມືອງ
ເຂົາກໍ່ ກັບຄືນເມືອງ ຮອດເຮືອນຄາງຮ້ອງ
ແຕ່ນັ້ນ ທັງຫລາຍພ້ອມ ພາກັນຄາງເຈັບປວດ
ທັງເລົ່າ ອຶດຍາກເຍື້ອນ ເມືອໄຫວ້ ພໍ່ພະຍາ
+ ເຂົາກໍ່ ປະນົມນົບໄຫວ້ ຖວາຍບາດເຂວງຊູລີ
ພວກຂ້າ ຂໍປະນົມກອນ ກາບພະອົງຈາຕານ
ພະກໍ່ຫາກ ຈຳຟູງຂ້າ ທັງຫລາຍໄປເອົາແມ່
ພະຫຍານັ້ນ

ດອນທີ່ ຊຽງຫມ້ຽງພຸ້ນ ບໍ່ມີໄດ້ດັ່ງໃຈ ພະເອີຍ

+ ອັນວ່າແມ່ພະຫຍາໄລ້ອົບພວກຂ້າ ດັ່ງຕອດຈິນຈັບ ແທ້ແລ້ວ
ຄັນວ່າ ບຸນພະບໍ່ກຸມກວມເອົາ ແມ່ນຊິຕາຍຈິງແທ້
ເມື່ອນັ້ນ ພະກໍ່ຫລຽວເຫັນຫນ້າ ສາວສະຫນົມໂສມຕ່າງ
ຊູຄົນນັ້ນ

ພະເລີຍ ທົວຍຸ້ມໆ ຈາຕ້ານກ່າວຖາມ
+ ອັນວ່າ ຫນ້າສູເຈົ້າເປັນສັງແທ້ ສັງມາເຫລ່ອບິດເບືອນ
ສົນນີ້

ຮູ້ວ່າ ເປັນປະຄົງ ພະຍາດບຽນໃນເນື້ອ ນີ້ເດ
ແຕ່ນັ້ນເຂົາບໍ່ມີຂານຖ້ອຍ ຖວາຍພະຍາທູນບອກ
ຊູຄົນ ຊູ່ຫລຽວເບິ່ງຫນ້າ ກັນແລ້ວກໍ່ເລົ່າທົວ ແທ້ດາຍ
+ ລາງພ່ອງ ມູ້ລູ້ຫນ້າ ຕາຕີ່ທັງສອງ ກໍ່ມີ
ເຫມືອນດັ່ງ ຕາຫມູພາຍ ທອກຫລວງນອນມູ້ງ
ລາງພ່ອງ ບິດເບືອນຫນ້າ ພະນຽງໄຖສະເຫມີພາບ
ເຫມືອນຫລຽວຫລັງ ເບິ່ງຫນ້າ ໂສມຮ້າຍບໍ່ງາມ ແທ້ແລ້ວ
+ ລາງພ່ອງ ແກ້ມຕື່ມໂຕ້ນ ສວດອອກປານຜີ ກໍ່ມີ
ເຫມືອນດັ່ງ ຄົນສາມຊາວ ຈູບເອົາອົມນ້ຳ
ລາງຄົນ ຮີມສີບບ່ຽວ ຕາເບືອນບິດເຫລ່ອ ກໍ່ມີ
ຕັ້ງຫາກ ເປັນເຂ້ວເຫວົ້ ໂສມຮ້າຍກ່ວາຊູຄົນ.
ແທ້ດາຍ

+ ເມື່ອນັ້ນ ສາວສະຫນົມກ່າວຕ້ານ ຂານຕອບພະຍາເມືອງ
ຝູງຂ້າ ມາກຸມອົດ ເບິ່ງກັນບໍ່ມີໄດ້
ອັນວ່າ ທັງຫລາຍຂ້າ ບໍ່ໄດ້ເປັນຜົວອື່ນ ອີສັງມາ

ຕັ້ງວ່າ ແມ່ພະຫຍາຂີ້ຮ້າຍ
ບັກຊຽງຫມ້ຽງຕອດຕອມ
ພະເອີຍ

+ ມັນຫາກ ກຸມອົບຝູງຂ້າ
ຫມົດຫມູ່ທັ້ງຫລາຍ ແທ້ມາ
ພໍວ່າ ຫາກບໍ່ທັນໂຕນຫນີ
ກໍ່ສ່ວນຕາຍຈິງແທ້
ອັນວ່າ ມັນກະທຳກຳຂ້າ
ຝູງສະຫນົມຫລາຍເທື້ອ
ເລີງແລ້ວ

ຝູງຂ້າ ບໍ່ອາດຈັກອົດຢາກເຍື້ອນ
ດອມໄດ້ແຫ່ງມັນ ພະເອີຍ
+ ຂໍໃຫ້ ພະບາດເຈົ້າ
ເອົາໄປໂຜດດັບຂັນ
ເສຍທ້ອນ

ຊຽງນີ້ ມາຮາວີ
ລື່ນປະມານຈິງແທ້
ເມື່ອນັ້ນ ລາຊາຕ້ານ
ຈາສະຫນົມຂານຕອບ
ສູ່ກໍ່ຫາກ ເອົາກັນໄປລ້າງ
ບໍ່ແຍງຜ້າຍເບິ່ງດີ
ແທ້ແລ້ວ

+ ຮູ້ວ່າ ແມ່ພະຫຍາໂຫດຮ້າຍ
ສັ່ງບໍ່ເບິ່ງບາຍດູ ນັ້ນເດ
ສູຫາກ ບໍ່ເອົາບັ້ງແມ່ພະຫຍາໄຂ
ເບິ່ງດູທີລະນ້ອຍ
ແຕ່ນັ້ນ ຝູງຫມູ່ສາວສະຫນົມຟ້າວ
ປະນົມກອນຕ້ານຕອບ
ຊຽງຫາກບາຍ ເອົາມາໄຂປ່ອຍໃຫ້
ໃສ່ມື້ຂາຊູ້ຄົນ ພະເອີຍ
+ ອັນວ່າ ແມ່ພະຫຍາມັນໄວ້
ບັ້ງໄມ້ໃຜ່ໂກນເລິກ ພະເອີຍ
ຊຽງກໍ່ບໍ່ວາງ ໃຫ້ໃຜເຫັນ
ໄມ້ໃຜໂກນລຳນັ້ນ
ບາດວ່າ ຊຽງໄຂບັ້ງ
ແມ່ພະຫຍາຕູມແຕກ ມານັ້ນ
ຝູງຂ້າກໍ່ຫລຽວເຫັນແຕ່ພໍ່ມັບມູ້ມັບມ້າຍ
ຊິຄິເຜີ້ງຕໍ່ແຕນ ພະເອີຍ
+ ແມ່ພະຫຍາ ຕັ້ງຫາກຫລາຍສໍ່າແທ້ ນ້ອຍໃຫ່ຍປົນກັນ ພະເອີຍ

ລາງພ່ອງ ແດງລາຍເຫລືອງ　　ຮ່າງໂຕເປັນປ້ອງ
ແຕ່ນັ້ນ ລາຊາເຈົ້າ　　ຖາມຫາຝູງແມ່ ພະຫຍານັ້ນ
ອັນວ່າ ມັນຫາກມີຕ່າງເຊື້ອ　　ໃຫ້ສູເຈົ້າບອກມາ ແທ້ເນີ
+ ໃຫ້ມັນ ໜີດຊູ່ເຊື້ອ　　ຊັ້ນຊື່ແນວເຂົາ ແທ້ດາຍ
ຢ່າໃຫ້ ມັນຫລົງຫລໍ　　ບອກມາຍາຊ້າ
ແຕ່ນັ້ນ ສາວສະໜົມຟ້າວ　　ຂານຄຳໂດຍອາດ
ຕາມແຕ່ ຝູງຂ້ານ້ອຍຍັງຈື່ໄດ້　　ທີ່ໃດນັ້ນຊິບອກມວນ
　　ພະເອີຍ
+ ອັນວ່າ ແມ່ພະຫຍາເຫລື່ານັ້ນ　　ກົ້ນກ່ານລາຍໆ ກໍມີ
ມັນແຮ່ງ ບິນມາຂົບ　　ຂາດໄປທັງຊື້ນ
ອັນວ່າ ແມ່ພະຫຍາລາງໂຕນັ້ນ　　ເຫລືອງແດງຄ່ອງແຄ່ງ
　　ກໍມີ
ເຂົາແຮ່ງ ຂົບພຸ້ນພີ້　　ຫຽວຄັ້ນຊູ້ຄົນ ພະເອີຍ
+ ແມ່ພະຫຍາ ແນວໜຶ່ງນັ້ນ　　ຄືຮູບແມງວັນ ນີ້ແລ້ວ
ມັນແຮ່ງ ດົມນຳຂົບ　　ບໍ່ຢາກໜີດູຊ້າ
ອັນວ່າ ແມ່ພະຫຍາແນວໜຶ່ງນັ້ນ　　ຍັງດູນ້ອຍເຫລືອງດຳພໍ
　　ສະໜ່ອຍ
ມັນນັ້ນ ຍັງບໍ່ຮ້າຍ　　ພໍເປື້ອງປ່າຍເສຍ ພະເອີຍ
+ ແມ່ພະຫຍາ ແນວໜຶ່ງນັ້ນ　　ແດງແຕ່ພໍປະມານ
ຝູງນັ້ນ ບິນນຳຂົບ　　ຕອດແຮງແສນຮ້າຍ
ອັນວ່າ ແມ່ພະຫຍາແນວໜຶ່ງນັ້ນ　　ກາງໂຕປ້ອງກິ່ວ
ເຂົານັ້ນ ບິນມາແປະຕອດກົ້ນ　　ເຊັ້ລົ້ມຢູ່ບໍ່ເປັນ

+ ແມ່ພະຫຍາ ມີມາກແທ້ ປີນຢູ່ຫລາຍຊະນິດ
ແມ່ພະຫຍາ ທັງຫລາຍ ແມ່ນມີແນວນັ້ນ
ບໍ່ກືວ ສໍລະຍານເຈົ້າ ຫລິງເຫັນໃຫ້ຄຶດຮ່ຳ ດູທ້ອນ
ຄັນວ່າ ແມ່ພະຫຍາເລິງທໍ່ນີ້ ມັນຕັ້ງຢາກໃຫ້ຕາຍ ດອກນາ
+ ນັບແຕ່ນັ້ນຕອດດັ້ນ ຫລາຍເທື່ອລຽນກັນ
ຂໍແກ່ ລາຊາພະ ຢ່າເອົາມາລ້ຽງ ນັ້ນທ້ອນ
ມັນຈະ ເປັນການຮ້າຍ ຮາວີຮອດພະບາດ
ເທື່ອນີ້ ຕັ້ງວ່າເຫລືອແຮງເຮັ້ງແທ້ ພໍມ້ອຍສະແຫມ່ງຕາຍ
ພະເອີຍ

+ ຕັ້ງຫາກ ເປັນທີ່ເຫລືອໃຈຍິ່ງແທ້ ເຈັບປວດເຫລືອທົນ
ແທ້ແລ້ວ

ແມ່ພະຫຍາ ມັນສັ່ງມາເຮັດ ກໍ່ກຳກະທຳຮ້າຍ ດັ່ງນີ້
ອັນວ່າ ຝູງຢູ່ໃນເຮືອນນັ້ນ ມັນບິນດັ້ນຕອດ ພະເອີຍ
ມັນກໍ່ຫາກ ເປັນທີ່ເຫລືອກຳລັງມາກແທ້ ຝູງຂ້າແລ່ນບໍ່ທັນ ໄດ້ແລ້ວ
+ ພິວ່າ ມັນບໍ່ຈຽມພວກຂ້ານີ້ ກໍ່ຄວນຈຽມບາດລາຊາ
ແດ່ແມ

ຍັງວ່າ ເປັນຄົນໃນ ຢູ່ນຳພະຍາເຈົ້າ
ນັບແຕ່ ໄດ້ມາເປັນຂ້ອຍ ເຫນືອຫົວກໍ່ຫລາຍຂວບ
ປີແລ້ວ

ພະກໍ່ຫາກ ຍັງຍ່ອມລ້ຽງ ບໍ່ຕີຂ້າດັ່ງມັນ ແທ້ດາຍ
+ ອັນນີ້ ທຽມດັ່ງໄຟລັກໄຫມ້ ໄມ້ໃຫ່ຍກອງຟືນ ນັ້ນແລ້ວ
ມັນຫາກ ຮົ້ງແສງ ແສບຕີນຕົວຮ້ອນ

ເມື່ອນັ້ນ ທະວາດີທ້າວ	ຂານສະໜົມສາວໜຸ່ມ
ມັນຫາກເປັນ ດັ່ງສູວ່າແທ້	ກູຊິຂ້ານອດຊີວັງ ແທ້ດາຍ
+ ເຈົ້າກໍ່ເລົ່າ ຟັງພາກຖ້ອຍ	ຄວາມສືບສໍ່ສາວສະໜົມ
ເລີຍເລົ່າ ລືມຄວາມພະ	ພໍ່ພະຍາສອນໄວ້
ບັດນີ້ ກູຈັກທັນໃຫ້ມັນມາເຝົ້າ	ຊິຟັນເສຍກັບບ່ອນ ຈັງແລ້ວ
ກູກໍ່ຈັກເອົາ ໃຫ້ມັນດັບບາດນີ້	ຊິຕາຍຊ້າຊາກຄາວ ແທ້ດາຍ
+ ແຕ່ນັ້ນ ສາວສະໜົມພ່ຳພ້ອມ	ກອຍກ່າວຄວາມດຽວ ທັ້ນແລ້ວ
ຄັນພະ ປົງພະຊົນມັນ	ກໍ່ແມ່ນສິມຈິງແທ້
ຕັ້ງຫາກ ສິນພໍ້ຂາ	ຟັນເສຍໃຫ້ມັນສວ່າງ ຄວນແລ້ວ
ບໍ່ໃຊ່ວ່າ ຈັກໃຫ້ມັນຂົ່ມຂີ່ແພ້	ພະຍາເຈົ້າບໍ່ໃຊ່ຄົນ ນັ້ນລື
+ ຄ້ອນວ່າ ເຂົາກ່າວແລ້ວ	ລາຈາກພູທອນ
ເຂົາກໍ່ ເມືອທໍປາງ	ນັ່ງນອນຄາງໄຫ້
ເມື່ອນັ້ນ ພະກະສັດໄຫ້	ທະວາດີອົງອາດ
ເຈົ້າກໍ່ ຄຶດໂກດແຄ້ນ	ຂົມໃຫ້ແກ່ຊຽງ ມາກແລ້ວ
+ ພະກໍ່ ບົນບອກໃຫ້	ຂ້າມະຫາດພາຍໃນ
ສູຈົ່ງໄປທັນຊຽງ	ຣີບມາດຽວນີ້
ແຕ່ນັ້ນ ເຂົາຟູງຂ້າ	ໂດຍຄຳເລີຍແລ່ນ
ຮອດທີ່ ຊຽງໝັ້ນຽງແລ້ວ	ຈາຕ້ານບອກມັນ
+ ບັດນີ້ ພະບອກໃຫ້	ຊຽງຣີບເມືອໄວ ແທ້ດາຍ
ໃຫ້ຣີບ ເມືອນຳຕູ	ຢ່າຢູ່ເນີນນານຊ້າ
ແຕ່ນັ້ນ ຊຽງຈາຕ້ານ	ທວງຖາມຫາເຫດ

ຈັກວ່າ ເປັນປະການໃດທ່ຽວແທ້ ໃຫ້ສູເຈົ້າບອກມາ ແດ່ທ້ອນ

+ ບໍ່ຮ່າງວ່າ ຕົນຕົວຂ້ອຍ ຄົນດີພິດອາດ ຍາລີ

ຂໍແກ່ ເຈົ້າພີ່ນ້ອງ ຄົນໃຊ້ບອກຮຽມ ແດ່ທ້ອນ

+ ແຕ່ນັ້ນ ເຂົາຕອບຖ້ອຍ ບົນບອກຕາມຄໍາ

ອັນວ່າ ສາວສະໜົມທູນລາຊາ ວ່າຊຽງພາງານແທ້

ພອຍວ່າ ເອົາແມ່ພະຫຍາຮ້າຍ ຂົບເຂົາໝົດໝູ່ ຈິງດາຍ

ຕັ້ງສະແນ່ງ ມຸດມອດມ້ຽນ ຕາຍສ້ຽງຊູ້ຄົນ ວ່າດາຍ

+ ແຕ່ນັ້ນ ຊຽງຕອບຖ້ອຍ ຮັບພາກຝູງເຂົາ

ຂ້ອຍບໍ່ໄດ້ ພາງານເຂົາ ໝູ່ສາວສະໜົມແທ້

ເຂົາຢາກເຫັນ ແມ່ພະຫຍາແທ້ ຈໍາເຮົາປຸນປ່ອຍ

ເຫດວ່າ ເຂົາຢາກໄດ້ ປັນໃຫ້ແກ່ກັນ ແທ້ດາຍ

+ ແຕ່ນັ້ນ ຝູງມະຫາດເລັກຕ້ານ ໃຫ້ຊຽງຮີບເດີນໄປ ທ່ຽວເທີ້ນ

ຈຶ່ງຮີບ ເດີນເມືອໄວ ກາບທູນພະຍາເຈົ້າ

ຄັ້ນຫາກວ່າບໍ່ເປັນການແທ້ ຈຶ່ງຊຸມຫາຕາໃໝ່ ຊຽງເອີຍ

ຊາດທີ່ ປາຢູ່ນໍ້າ ກໍ່ຄອນເວັ້ນຫລີກແຫ ດອກນາ

+ ຕູຂໍ ອາລາທະນາຕໍ່ເຈົ້າ ຊຽງຮີບເດີນເມືອ ກ່ອນທ້ອນ

ຫລອນວ່າ ພະລາຊາຄອງ ຢູ່ທາງພາຍພຸ້ນ

ເມື່ອນັ້ນ ຊຽງກໍ່ອາຈາຕ້ານ ຂານຄໍາຮັບປາກ

ຂ້ອຍບໍ່ຂືນ ພະພີ່ເຈົ້າ ຊິເດີນດັ້ນດ່ວນເມືອ ນີ້ແລ້ວ

+ ຫາກໄດ້ ເປັນນ້ອງແກ່ນແກ້ວ ພະຍາໃຫ່ຍທະວາດີ ແທ້ດາຍ

ຂ້ອຍບໍ່ມີ ຄໍາຂືນ ຊິຄ່ອຍເດີນຕາມເລື່ອງ

ຊຽງກໍ່ຈຶ່ງ ບາຍເອົາຜ້າ ພືນດີມານຸ່ງ

ແລ້ວເລົາ ສຸບສອດເສື້ອ   ແພລ້ວຄາດຄຽນ
+ ຕັ້ງຫາກ ປ່ອຍລ້ອຍໜ້າ   ຍົວລະຍາດລົງເຮືອນ
ໄປພະລັນເປືອງ   ພ່ຳດອມຄົນໃຊ້
ຄັນວ່າ ພໍປະມານໄດ້   ຊຽງເຖິງພາສາດ
ມັນຈຶ່ງ ຂຶ້ນຂາບໄຫວ້   ປະນົມນິ້ວຄ່ອຍຖະແຫລງ
+ ຂ້າຂໍ ທານໂທດທ້ອນ   ຢັ້ງຂະໜ່ອມເໜືອຫົວ
ຂ້ອຍເອີຍ

ຂ້າກໍ່ຫາກ ໂດຍຄຳພະຍາ   ທ່ຽວພະລັນມາແລ້ວ
ເມືອນັ້ນ ທະວາດີທ້າວ   ໂກທາຄຽດຢູ່
ກໍ່ເລົາ ອອກປາກຕ້ານ   ຂານຖ້ອຍຕອບຊຽງ
+ ແຕນັ້ນ ຊຽງກໍ່ເລົາພາກພື້ນ   ຕາມເລືອງເປັນມາ
ມັນກໍ່ເລົາ ທຸກອັນ   ແຕ່ເດີມດາເຄົ້າ
ຂ້າກໍ່ວ່າ ຢາກເອົາມາໃຫ້   ແມ່ພະຫຍາຖວາຍບາດ
ຈິງນາ

ບັດນີ້ ພອຍເລົາເປັນເຫດຮ້າຍ   ເສຍສ້ຽງແມ່ພະຫຍາ
ເຈົ້າເອີຍ

+ ຕັ້ງຫາກ ກ້າຂະໜາດແທ້   ພະຫຍາແມ່ບິນເປັນ
ອັນວ່າ ສາວສະໜົມໄປ   ຍາດໄຂຍັງບັ້ງ
ແມ່ພະຫຍາຝູງນັ້ນ   ເລີຍບິນແຕກສ່ວານ ຈິງແລ້ວ
ຕັ້ງບໍ່ຍັງ ຄ້າງຢູ່ບັ້ງ   ເສຍສ້ຽງຊູຕົ້ວ ພະເອີຍ
+ ເອົາກໍ່ ຂົບດຽດດັ້ນ   ໜົດໝູ່ສາວສະໜົມ
ຫົວເລົາ ຂົບຕົວຊຽງ   ຜູ້ພາກພຽນເອົາລ້ຽງ

ແຕ່ນັ້ນ ທະວາດີທ້າວ　　ຟັງຄຳຊຽງກ່າວ

ພະກໍ່ເລີຍ ຖອດບາດວ້າວ　　ກຳໄວ້ວ່າຊິຟັນ

\+ ກູກໍ່ຈັກເອົາໃຫ້ມັນມຸດມອດມ້ຽນ　　ລົດຊົ່ວປາງດຽວ ນີ້ແລ້ວ

ຕາງໃຫ້ ລືຊາຕົກ　　ຕ່າງເມືອງແດນດ້າວ

ເພື່ອວ່າ ໂກຫາກ້າ　　ຟັງຄຳສະຫນົມສໍ່

ແລ້ວເລົ່າ ໃຈວູ່ຮ້ອນ　　ຄາວນ້ອຍຫນຶ່ງຫາຍ ແທ້ດາຍ

\+ ແຕ່ນັ້ນ ພະບາດເຈົ້າ　　ຄະນຶງຮື່ມເພິງດູ

ຄຶດເມື່ອ ບິດາສອນ　　ສັ່ງເຮົາປາງນັ້ນ

ວ່າໃຫ້ ກູພຽນລ້ຽງ　　ຍັງຊຽງພອງຫມົດຄາບ ຈຶ່ງມາ

ຢ່າໄດ້ ທຳໂທດຮ້າຍ　　ພໍ່ຂາຂາດຊີວັງ ວ່າດາຍ

\+ ແມ່ນວ່າ ຊຽງທຳຜິດຫ່ຽງແທ້　　ໃຫ້ພາຍໂພດເອົາມັນ ວ່ານາ

ເພາະວ່າ ບິດາເອົາ　　ຄູ່ກັນມ່າລ້ຽງ

ພະກໍ່ ຍັງສອນໄວ້　　ຈາໄປຫມົດທຸກເບື່ອງ

ບໍ່ໃຊ່ວ່າ ຈັກໃຫ້ຟັນມອດມ້ຽນ　　ບໍ່ຄວນລ້ຳລ່ວງກາຍ ແທ້ແລ້ວ

\+ ເກັງທໍ່ ເສຍສັດພະກ່າວໄວ້　　ພຽນສັ່ງສອນເຮົາ ນີ້ນັ້ນ

ຍ້ານທໍ່ ກາຍຄຳພະ　　ຊິເກີດການຮົນຮ້ອນ

ເຈົ້າເລີຍ ພິຈານແລ້ວ　　ຫາຍຄຳຄຶດຄຽດ

ກໍ່ຈຶ່ງ ປະດາບວ້າວ　　ວາງໄວ້ບໍ່ບາຍ ແທ້ດາຍ

\+ ບອກໃຫ້ ຊຽງຮີບພ້າວ　　ກັບຕ່າວເມືອເຮືອນ

ທຸກໂທດທັນ ທັງມວນ　　ແມ່ນປ່ອຍເວນວາງໄວ້

ຊຽງຫມ້ຽງເມືອ ເຮືອນແລ້ວ　　ເລີຍນອນນິດທະເນີ້ງ

ບໍ່ໄດ້ຄຶດຢ່ອນຢ້ານ　　ມານຮ້າຍສິ່ງໃດ ເຈົ້າເຮີຍ

24– ພະຍາບໍ່ຢາກເຫັນໜ້າຊຽງໝ້ຽງ

+ ເມື່ອນັ້ນ ພະບາດທ້າວ   ຄຽດຄ້ຽວບໍ່ມີລືມ ໄດ້ແລ້ວ

ຄິດໜ່າຍ ຊັງຕົວຊຽງ   ບໍ່ຢາກຫອນເຫັນໜ້າ

ຄິດຢູ່ ໃນໃຈຮ້າຍ   ກໍ່ວາຈາເວົ້າອອກ

ບັດນີ້ ມຶງຢ່າໄດ້ມາຂາບໄຫວ້   ທູນໄທ້ແທ່ງກູ ເທາະເນີ

+ ກູບໍ່ ຢາກປາກເວົ້າ   ຂານຕໍ່ຕົວມຶງ ແທ້ແລ້ວ

ມຶງຢ່າ ມາຣາວີ   ເຕີ່ມຄວາມໃຈຮ້າຍ

ກູຄິດເຫັນ ມຶງແລ້ວ   ລະອາໃຈແໜງໜ່າຍ

ເມື່ອໃດ ຟ້າຂາດຂອ້າ   ດິນປີ້ນກໍ່ຈື່ງມາ ແທ້ເນີ

+ ອັນໜຶ່ງ ມຶງຢ່າໄດ້ລ່ວງເຂົ້າ   ຄຸ້ມຂ່ວງລາຊະວັງ ນັ້ນເນີ

ຄັນວ່າ ມຶງຫາກຍັງດົນຄວາມ   ສ່ວນຊິຕາຍມໍລະມ້ຽນ

ກູກໍ່ຈັກ ຈຳເອົາໃຫ້   ເອົາໜັງແປງພູກ ເສຍແລ້ວ

ຈື່ງຈັກ ຈັບດາບງ້າວ   ຟັນຂ້າຂາດຄໍ ແທ້ແລ້ວ

+ ແຕ່ນັ້ນ ຊຽງກໍ່ຈື່ງກົ້ມກາບໄຫວ້   ທູນບາດລາລົງ.

ຊຽງກໍ່ ທູນລາຊາ   ສັ່ງຄວາມສຸດທ້າຍ

ໂອນໍ ເໜືອຫົວເຈົ້າ   ລາຊາກົ້ວໂກດ ຈິ່ງແລ້ວ

ຖືວ່າ ກູນີ້ເປັນຂ້ອຍຊຸ້ນ   ສະເໜີດ້ານໄຟພົ້ນ ແລນໍ

+ ຂ້າກໍ່ຈະບໍ່ໄດ້ ເຫັນໜ້າເຈົ້າ   ພະຍາພື່ເທິງນານ ແທ້ແລ້ວ

ເພາະວ່າ ລາຊາຄິດ   ໂກດແຄນຈົນຮ້ອນ

ຂ້າກໍ່ຫາກຄິດ ຄະນຶງເຖິງເຈົ້າ   ຈອມຫົວຢັ້ງຂະໜ່ອມ

ມາກແລ້ວ

ບໍ່ຊ່າຈັກຊິແທ້ງ ຄໍຕາຍມອດມ້ຽນ	ເສຍຊ້ຳສິ່ງເວນ ແທ້ດາຍ
+ ບັດນີ້ ກູຈັກອົດກ່ອນທ້ອນ	ຢູ່ຕາມບາບບຸນໂຕ ຫັ້ນແລ້ວ
ໂຕຫາກ ທຳຄວາມຜິດ	ຊິຈ່ອງເວນບໍ່ມີແລ້ວ
ຄ້ອນວ່າ ຊຽງຖະແຫລງແລ້ວ	ລົງຫນີເຮອຮີບ
ເລີຍເລົ່າ ເຕີປາກງ້າ	ອິນໄວ້ຄຽດເລີງ
+ ແມ່ນວ່າ ພະບາດເຈົ້າ	ຄຽດຫນ່າຍຊິງຊັງ ກໍ່ຕາມ ທ້ອນ
ກູຊິ ອົດທົນເອົາ	ຫາກຊິມີຍາມແກ້
ແຕນັ້ນ ຊຽງກໍ່ເລົ່າເມືອເຖິງຫ້ອງ	ເຮືອນຕົນລີ້ຢູ່
ບໍ່ໄດ້ ຄິດເດືອດຮ້ອນ	ສິ່ງແທ້ເຍື່ອງໃດ
+ ອັນວ່າ ຮຸ່ງຄ່ຳເຊົ້າ	ກໍ່ທຳວຽກການເຮືອນ
ສິ່ງໃດ ດູບໍ່ດີ	ຄ່ອຍຖະຫນອມພຽນສ້າງ
ຄັນວ່າ ເຖິງເມື່ອຄືນນານໄດ້	ເຈັດວັນມາຮອດ
ກໍ່ຫາກ ເປັນເຫດນີ້	ພະຍາເຈົ້າລຽບວຽງ ແທ້ດາຍ
+ ຕັ້ງຫາກ ເປັນແຕ່ຈາຣີດແທ້	ມາແຕ່ບູຮານ
ພະກໍ່ ສະເດັດທົງຄຳສານ	ລຽບເມືອງວຽນລ້ອມ
ເມື່ອນັ້ນ ທະວາດີທ້າວ	ລາຊາຍົວລະຍາດ
ພະກໍ່ເລົ່າ ຂຶ້ນຂີ່ຊາງ	ເດີນຍ້າຍອອກໄປ
+ ອັນວ່າ ຄົນຫລາຍມາກຫນ້າ	ອ້ອມຮອບທາງຫລັງ
ມີຖືເອົາ ດວງແສງ	ຫອກຕາວທັງວ້າວ
ແລ້ວກໍ່ ແຊວງຍ້າຍ	ເດີນໄປແຫນແຫ່
ອ້ອມພະບາດເຈົ້າ	ເດີນດັ້ນລຽບເມືອງ

+ ແຕນັ້ນ ຊຽງຫມ້ຽງໄດ້ ຍິນຂ່າວພະຍາມາ
ມັນຈຶ່ງ ແຍງຫົນທາງ ນອກວຽງຕົນຫນ້າ
ຊຽງກໍ່ຈຶ່ງ ຊຸດຊູນແລ້ວ ເອົາຫົວຝັງຢູ່
ເລີຍເລົ່າ ເປືອຍປີນກົ້ນ ເມືອຟ້າເວີກເວີງ
+ ຕັ້ງທາກ ປູດຈູດກົ້ນ ປະປ່ອຍເປືອຍຫມົດ
ບໍ່ຫົ່ມ ອາພອນປະ ເປີດແປນຫົວກົ້ນ
ຫລຽວເບິ່ງ ທຳມັນປີ້ນ ເມືອເທິງຕາບຊາບ
ກັບທັງ ໂຄຍກໍ່ປີ້ນ ເມືອຟ້າໂວກໂວ
+ ຝູງຫມູ້ຄົນ ເມືອເຫນືອລ່ອງໃຕ້ ກໍ່ຫລຽວເບິ່ງເຫັນມັນ
ຈັກແມ່ນສັງ ບອກຫລີງແລມັນ ຊົ່ວເລວຊາມຮ້າຍ
ອັນວ່າ ຝູງຫມູ່ສາວຮາມຮາງ ຫົວຊົນຊິສ່ວາ
ສັງມາ ເປັນແອ້ນແຫລ້ນ ໂຄຍແບ້ນຊື່ຊັ້ນ ດັ່ງນັ້ນ
+ ຕັ້ງທາກ ຂີ້ຫລີ້ແຫ້ ບໍ່ຢາກລ່ຳແລເຫັນ ແຫ້ແລ້ວ
ເອົາກໍ່ເລົ່າ ແຊວງຫົວ ເປີບໃຈຊຶ້ມສະອື້ນ
ລາງຄົນ ຢອງງເອົ້າ ບາຍເອົາໄມ້ເຂ່ຍ ກໍ່ມີ
ຊຽງເລົ່າ ນາບດ່າແຫ້ ສຽງຮ້າຍແກ່ເອົາ ຫັ້ນແລ້ວ
+ ແຕນັ້ນ ທົນງຟື້ນ ພະຍາລ່ວງມາເຖິງ
ເຈົ້າກໍ່ ຫລຽວໄປມາ ເຫັນບັກຊຽງເປືອຍກົ້ນ
ເມື່ອນັ້ນ ພະຍາກໍ່ຈຶ່ງຖາມດູແຫ້ ດອມເອົາຂ້າມະຫາດ
ອັນວ່າ ຜ່ານຫນ້ານັ້ນ ພາຍພຸ້ນແມ່ນອີສັງ ນັ້ນເດ
+ ຈັກວ່າຄົນດີ ຄືບໍ່ແມ່ນແຫ້ ຫລືຫາກວ່າຄົນຕາຍ ນັ້ນເດ
ຫລືວ່າ ຄົນຕາຍເອົາ ບໍ່ຊ່າງເອົາຝັງມ້ຽນ

ສ້ວງມາ ເປັນໂກ້ວໂຈ້ວ ໂຈນໂຈຕັ້ວຢູ່
ໃນຫົນທາງ ເບື້ອງຫນ້າ ທາງຊິດັ້ນຜ່ານໄປ
+ ແຕ່ນັ້ນ ຝູງຫມູ່ຊົນເຊັ່ງຊັ້ນ ທູນອາດພະຍາເມືອງ
ມັນແມ່ນ ຊຽງຫມັ້ນຮຽງເອົາຫົວສຸບ ເປີດແປນເປືອຍກົ້ນ
ເພື່ອວ່າ ພະຍາບໍ່ຢາກມາເຫັນຫນ້າ ຕົວຊຽງຈັກເທື່ອ
ບັດນີ້ ມັນກໍ່ຫາກຊຸກເຊື່ອງຫນ້າ ແປນກົ້ນໃຫ້ເບິ່ງເຫັນ ພະເອີຍ
+ ແຕ່ນັ້ນ ເຈົ້າກໍ່ຕົກຂະມະຫນ້າ ລືມເພດພະຍາຫລວງ
ອັນວ່າ ບຸນເຮືອງພະ ຄຽດເລີງບໍ່ມີແລ້ວ
ກໍ່ຈຶ່ງໃຫ້ເອົາ ອວ່າຍຫນ້າຊ້າງ ຄືນຫລັງກັບຕ່າວ
ພະຍາບໍ່ຢາກ ໄປເບິ່ງກົ້ນ ຊຽງຫມັ້ນຮຽງຊິບາດຕາ
+ ເພື່ອວ່າ ຊຽງແຕ່ງຫ້າງ ແກ້ຕອບພະຍາຫລວງ ຫັ້ນແລ້ວ
ພະເລີຍ ຄືນຫນີເມືອ ບໍ່ກາຍໄປຫນ້າ
ພະກໍ່ ພາພົບລ້ານ ຄືນເມືອເສຍໃຫ້ສ່ວາງ
ຕັ້ງວ່າ ເປັນທີ່ສັງເວດກົ້ນ ມັນນັ້ນຊູ່ອັ້ນ ແຫ້ດາຍ
+ ຕັ້ງຫາກ ປ່າງວ່າງກົ້ນ ຄືສິ່ງຄົນຕາຍ ຫັ້ນແລ້ວ
ອັນວ່າ ຝູງຫມູ່ແມງວັນຂຽວ ຊິເຂົ້າຕອມພີພື້ນ
ຄັນວ່າ ພະຍາອ່ວາຍຫນ້າຊ້າງ ໂຮງຄຳຄືນຄອບ ໄປນັ້ນ
ຊຽງກໍ່ເລົ້າ ຄືນສູ້ຫອງ ເຮືອນຢ້າວດັ້ງດຽວ ນັ້ນແລ້ວ
+ ແຕ່ນັ້ນ ຄືນໆກ້ອງ ຟ້າຮ່ວນລົມພານ ພຸ້ນເຢີ
ພໍເມື່ອ ເຖິງດິຖີ ປີໃຫມ່ມາແຖມເຂົ້າ
ພໍເມື່ອ ເຖິງລະດູແລ້ວ ເດືອນເຈັດເຂົ້າລ່ວງ ມາແລ້ວ
ດິແຕ່ ຝົນຕົກລົງຢ່າວຍ້ອຍ ຮຳພື້ນແຜ່ນດິນ

+ ອັນວ່າ ຝູງໄພ່ນ້ອຍ　　ພວກໝູ່ຊາວນາ
ເຂົາກໍ່ ພາກັນຕົກ　　ແຕ່ງປຸນປອງຫ້າງ
ແລ້ວເລົ່າ ເອົາໄຖຟື້ນ　　ພວນດິນປົ້ນຕ່າວ
ເພື່ອຊິ ໄຖຄາດຄົ້ນ　　ນາແລ້ວເລົ່າດຳ
+ ແຕ່ນັ້ນ ຊຽງຫມັ້ນຮຽງຢ້ຽມ　　ເມືອທົ່ງເລີຍເຫັນ
ຝູງຫມູ່ ລົມໄຖນາ　　ຫມູ່ຂໍ້ດິນເອົາປົ້ນ
ບັດນີ້ ຄວນທີ່ກູໄປໄຫວ້　　ຈອມເມືອງຕົນພີ້ ຈິງແລ້ວ
ເທດວ່າ ແຜ່ນດິນມັນຫາກປົ້ນ　　ເສຍແທ້ຊູ່ພາຍ ແລ້ວເດ
+ ແຕ່ນັ້ນ ຊຽງຮິບເມືອກາບເທົ້າ ທູນບາດລາຊາ
ເຂົ້າສູ່ ໃນໂຮງຫລວງ　　ກາບປະນົມກອນເວົ້າ
ແຕ່ນັ້ນ ທະວາດີທ້າວ　　ເຫັນຊຽງກົ້ມຂາບ ລົງນັ້ນ
ເຈົ້າກໍ່ເລີຍ ມີອາດທ້ວງ　　ພໍສະດຸ້ງຕື່ນຕົວ
+ ວ່າບັດນີ້ ບັກຂີ້ຮ້າຍ　　ມາເທດສັ້ນໃດ
ມຶງກໍ່ມາຮາວີ　　ລື້ນຄວາມກູແທ້
ກູກໍ່ ວາຈາເວົ້າ　　ນຳມຶງບໍ່ຈຳຈື້ ຈິງນໍ
ເມື່ອໃດ ດິນຫາກປົ້ນ　　ຈິງມາເຝົ້າແຫ່ງກູ
+ ບັດນີ້ ດິນບໍ່ທັນປ່ຽນປົ້ນ　　ມຶງສົ້ງຟ້າວຮີບມາ ນີ້ເດ
ມຶງນີ້ ພາໂລເຮັດ　　ແຕ່ແນວອັນຮ້າຍ
ບັດນີ້ ໂທເລຮ້າຍ　　ໂຕມຶງຈັກເປັນໂທດ
ເສຍແລ້ວ
ເທດວ່າ ມຶງລ່ວງເຂົ້າ　　ກາຍຄຸ້ມຮອດກູ ແທ້ດາຍ
+ ແຕ່ນັ້ນ ຊຽງຕອບຖ້ອຍ　　ຮັບພາກພູບານ

ແມ່ນວ່າ ທໍລະນີຫລວງ ແຫ່ງພະຍາກໍດາປີ້ນ
ຂ້າຈຶ່ງ ມາທູນໄຫວ້ ຈອມຫົວບຸນມາກ ຈຶ່ງແລ້ວ
ຜີບໍ່ມີ ດັ່ງນັ້ນ ກໍ່ລອງຢ້ຽມເບິ່ງດູ ຫັ້ນທ້ອນ
+ ອັນວ່າ ພາຍນອກຄຸ້ມ ຂົງເຂດທະວາດີ ທີ່ພຸ້ນ
ມັນກໍ່ຫາກ ເປັນແຕ່ບຸບເຜມາ ຮອດຍາມເຄີຍປີ້ນ
ເມື່ອນັ້ນ ທະວາດີ້ທາວ ຈຳເອົາຂ້າມະຫາດ
ບັດນີ້ ສູຈົ່ງໄປເບິ່ງທ້ອນ ພາຍພຸ້ນນອກວຽງ
+ ຄັນວ່າ ໄປເຫັນດິນປ່ຽນປີ້ນ ເອົາລຸ່ມເປັນເທິງ
ແມ່ນດັ່ງ ຊຽງວາຈາ . ຢູ່ໃນດຽວນີ້
ໃຫ້ສູ ກັບມາເວົ້າ ຄວາມຈິງໃຫ້ກູເບິ່ງ
ຄັນວ່າ ເປັນດັ່ງນັ້ນ ຈົ່ງແທ້ໃຫ້ວ່າມາ ທ່ຽວເທີ້ນ
+ ແຕ່ນັ້ນ ມະຫາດເລັກໄດ້ ຮັບພາກພະຍາຫລວງ
ເຂົາກໍ່ ເຣວພະລັນໄປ ນອກວຽງພາຍພຸ້ນ
ໄປເຫັນ ດິນນາປີ້ນ ປີກວງອຳເທົ້າທົ່ວ
ຊາວນາ ໄຖຄາດແລ້ວ ຊິແປງພັ້ນເພື່ອດຳ ຫັ້ນແລ້ວ
+ ເມື່ອນັ້ນ ມະຫາດເລັກຜູ້ ພະຍາບອກເດີນໄປ
ເຫັນທົ່ງນາ ຄົນໄຖ ແຜ່ນດິນປຸ້ນປີ້ນ-
ເຂົາກໍ່ ມາທູນໄທ້ ພະຍາເມືອງກົ້ມຂາບ
ຝູງຂ້າ ໄປລ່ຳຢ້ຽມ ເຖິງເທົ້າທົ່ວແດນ ແທ້ແລ້ວ
+ ກໍ່ທໍ່ເຫັນແຕ່ຂີ້ໄຖປ່ຽນປີ້ນ ຄັບຄັ່ງຕົນມາ ແທ້ແລ້ວ
ອັນວ່າ ແຜ່ນດິນຈະປີ້ນປ່ຽນໂດຍມັນເອງ ກໍ່ບໍ່ເປັນໄປໄດ້
ເມື່ອນັ້ນ ທະວາດີ້ທາວ ຮົມເພິງຄະນິງມາກ

ກູຈັກວ່າ ບໍ່ແມ່ນຫລີ້ ດິນກໍ່ປີ້ນປ່ຽນພື້ນ   ດັ່ງຄວາມເວົ້າແຫ່ງຊຽງ

\+ ເມື່ອວ່າ ກູຈັກຊ້ຳໂກດໃຫ້   ວ່າບໍ່ແມ່ນຄວາມຊຽງ ດັ່ງນັ້ນ

ດິນກໍ່ຫາກ ເອົາທາງເທິງ   ປີ້ນລົງທາງພື້ນ

ແຕ່ນັ້ນ ພະຍາກໍ່ຖະແຫລງຄຳຕ້ານ   ລົມຊຽງໂດຍຮີບ.

ມຶງນີ້ ບໍ່ເສຍແຮງກູລ້ຽງໄວ້   ເສຍເຂົ້າແຫ່ງກູ ແທ້ນໍ

\+ ເມື່ອນັ້ນ ພະບາດເຈົ້າ   ເລີຍຊື່ນຊົມຫົວ

ມຶງນີ້ ລົບອຸບາຍ   ໄລ່ທັນກູແທ້

ກູຈະທຳພຽນລ້ຽງ   ມຶງໄປສືບຕໍ່

ໃຫ້ມຶງ ມີໂອກາດໃຊ້   ພະຫຍາລ້ຽງແຫ່ງມຶງ
ນັ້ນທອນ

\+ ຊຽງໝ້ຽງ ເວົ້າທໍ່ນັ້ນ   ກໍ່ເລີຍເລີກລາເມືອ

ຄັນວ່າ ເມືອຮອດເຮືອນຂອງມັນ   ກໍ່ເລົ່ານອນສະບາຍເນື້ອ

ຢູ່ທ່າງ ທຳການສ້າງ   ຕາມໃຈຄະນຶງອ່າວ

ບໍ່ໄດ້ ຄຶດເດືອດຮ້ອນ   ເຄືອງແຄ້ນເຍື່ອງໃດ
ແທ້ດາຍ

25— ຊຽງໝ້ຽງເອົາຄວາຍໄປຊົນຄວາຍພະຍາ

\+ ຍັງມີເມືອງໃຫຍ່ກວ້າງ   ຊື່ວ່າທະວາດີ

ມີພະຍາປົກຄອງ   ແບບພະເດັດການຮ້າຍ

ໃນໝູ່ພົນລະເມືອງເຕົ້າ   ໂຮມກັນເນົາຢູ່

ມີຊື່ຊຽງໝ້ຽງເຈົ້າ   ພະຫຍາລ້ຳລືນພະຍາ

ຖຽງເທື່ອໃດກໍ່ບໍ່ແພ້ ພະຍາຄຽດຊັງມັນ
ຈຶ່ງຊອກຫາວິທີພະນັນ ໃຫ້ປາບມັນລົງໄດ້
ແຕ່ວ່າຫລາຍປີແລ້ວ ປະລາໄຊທຸກເທື່ອ
ເຮັດໃຫ້ພະຍາຫນ້າເບື່ອ ອາຍຫນ້າຕໍ່ປະຊາ
+ ມື້ຫນຶ່ງ ພະຍາໄດ້ສັ່ງໃຫ້ ຝູງຫມູ່ເສນາ
ວ່າໃຫ້ເດີນໄປຫາ ຮອດເຮືອນຊຽງຫມ້ຽງ
ບອກວ່າພະຍາຫລວງເອີ້ນ ໃຫ້ຊຽງເມືອເຮວຮີບ
ເມືອໄຫວ້ພະຍ່ຳເກົ້າ ຊິປົງໃຫ້ສັ່ງການ ວ່າມາ
+ ແຕ່ນັ້ນຊຽງຫມ້ຽງໄດ້ ຟັງຫມູ່ເສນາ
ຊຽງກໍ່ວາຈາຂານ ຕອບໄປບໍ່ມີຊ້າ
ວ່າພະຍາທັນແລ້ວ ຊື່ເບີນນານລີ້ຢູ່ ບໍ່ເປັນແລ້ວ
ເຮົາຊິຮີບຟັ່ງຟ້າວ ໄປເຝົ້າພີ່ພະຍາ ແທ້ແລ້ວ
+ ຄ້ອມວ່າແລ້ວ ຊຽງກໍ່ແຕ່ງເຕົາດາ
ແລ້ວກໍ່ລົງເຄຫາ ທ່ຽວພະລັນບໍ່ມີຊ້າ
ພ້ອມພ່ຳເສນາດັ້ນ ເດີນໄປເຮວຮີບ
ຮອດຂ່ວງຄຸ້ມ ພະຍາແລ້ວນັ່ງເຊົາ
+ ພໍເມື່ອດີເມື່ອຍແລ້ວ ຊຽງກໍ່ຮີບພະລັນເປືອງ
ໄປກາບທູນລາຊາ ພີ່ພະຍາເປັນເຈົ້າ
ຂ້າປະນົມກອນນ້ອມ ວາຈາຖາມພະບາດ
ວ່າພະອົງແຕ່ງເສນາດຸ່ງດັ້ນ ທັນຂ້າເລື່ອງໃດ ພະເຮີຍ
+ ເມື່ອນັ້ນ ພະບາດເຈົ້າ ອົງອາດພະຍາເມືອງ
ພະກໍ່ໄຂວາຈາ ວ່າມາດີແລ້ວ

ກູກໍ່ລອງເຊີງຊັ້ນ ພະນັນມຶງຫລາຍເທື່ອ ມາແລ້ວ
ເຫັນວ່າມຶງຊ່າງແກ້ ພະຫຍາກວ້າງວ່ອງໄວ
+ ຈຶ່ງວ່າເສິກໃຫ່ຍລ້ຳ ເມືອງເທດຕານີ
ກໍ່ຍິນດີຍອມມຶງ ອວ່າຍສະເພົາເມືອລ້າ
ຫລາຍສິ່ງແນວສິນຄ້າ ກໍ່ເອົາມາມວນມອບ
ນັ້ນແມ່ນໄຊຊະນະໃຫ່ຍກວ້າງ ດີແທ້ແກ່ພວກເຮົາ ຫັ້ນແລ້ວ
+ ທີ່ວ່າມຶງພັດຍັງອອດອ້າງ ບໍ່ຍອມຕໍ່ຕີນກູ ແທ້ແລ້ວ
ເອົາພະຫຍາມຶງມາຂັດຂວາງ ບໍ່ແຕ່ງຕາມກູເວົ້າ
ເຮັດໃຫ້ ກູເສຍຫນ້າ ປະຊາຊົນເຢີ້ຍຍຶ່ງ
ອຳນາດກູລຸ່ຍປູ້ ຄົນບໍ່ຢ້ານດັ່ງແຕ່ຫລັງ ແທ້ແລ້ວ
+ ເທື່ອນີ້ ກູຊິບົນບອກໃຫ້ ມຶງແຕ່ງຕາມກູ ຊຽງເຮີຍ
ມຶງຢ່າເອົາເຊີງພະຫຍາ ອອກມາປອງແກ້
ຄັນບໍ່ທຳຕາມແທ້ ຕົວມຶງຊິມີໂທດ ຈິງແລ້ວ
ກູບໍ່ຍອມປ່ອຍໃຫ້ ມຶງແກ້ລ່າຍພາງ ດອກນາ
+ ແຕ່ນັ້ນ ຊຽງຫມັ້ນຽງເວົ້າ ນ້ອມບາດລາຊາ
ຂ້າບໍ່ໄດ້ວາຈາລວງ ຫລອກພະຍາພໍ່ນ້ອຍ
ທຸກເທື່ອຕົນຕົວຂ້າ ຟັງຄວາມພະຍາພີ່ ຈິງແລ້ວ
ເມື່ອພະຊົງສັ່ງໃຫ້ ກໍ່ໂດຍໄດ້ແຕ່ງຕາມ ແທ້ນາ
+ ເມື່ອນັ້ນ ພະຍາກົ້ວໂກດເຈົ້າ ກູບໍ່ຢາກຖືຖຽງ ຊຽງເຮີຍ
ຄັນຊິລືມນຳມຶງ ແມ່ນບໍ່ມີຍາມແລ້ວ
ມຶງນີ້ ມີພະຫຍາກວ້າງ ແປປວນປີ້ນວ່າຍ
ມີແຕ່ລວງຫລອກເວົ້າ ໄດ້ຜົນໃຫ້ແກ່ມຶງ ຫັ້ນແລ້ວ

\+ ເທື່ອນີ້ກູຊິເວົ້າ ໃຫ້ມຶງເຮັດຕາມກູ ແທ້ແລ້ວ
ມຶງຢ່າຊູມຖຽງ ຖ່ວງເວລາໄວ້
ໃນສອງວັນທັງໜ້າ ໃຫ້ມຶງມາໃນຂ່ວງ
ສະໜາມເນີ
ມາສູ້ກັນຢູ່ທີ່ນັ້ນ ແມ່ນໃຜແພ້ຫາກຊິເຫັນ
\+ ຊຽງໝ້ຽງຈາ່ກ່າວເວົ້າ ວ່າຂ້າຕື່ນຕົກໃຈ ແທ້ແລ້ວ
ຂ້າບໍ່ຫວັງເອົາຊະນະ ພີ່ພະຍາເປັນເຈົ້າ
ທຸກສິ່ງອັນພະຍາເວົ້າ ໄດ້ທຳຕາມບໍ່ຂືນອາດ ຍານາ
ບັດນີ້ຈະໃຫ້ມາແຂ່ງພະພີ່ເຈົ້າ ຕົວຂ້າເຮັດບໍ່ເປັນ ແທ້ແລ້ວ
\+ ພະຍາຊ້ຳພັດເວົ້າ ມຶງຢ່າກ່າວຂືນຂັດ ຊຽງເຮີຍ
ໃຫ້ມຶງເອົາຄວາຍມາຊົນຄວາຍກູ ຢູ່ກາງສະໜາມກວ້າງ
ຈະປ່າວເຕືອນໄປໃຕ້ ຊາວເມືອງມາເບິ່ງ
ກູແລະມຶງໃຜຊິກ້າ ແຂງເຂັ້ມກວ່າກັນ
\+ ແຕ່ນັ້ນ ຊຽງກ່າວຕ້ານ ຂານຕອບພະຍາເມືອງ
ຂ້າບໍ່ທັນມີຄວາຍ ຊິປ່ອຍມາຊົນໄດ້
ຂໍພະອົງວາງໃຫ້ ຊາວວັນເປັນເຂດ ກ່ອນທ້ອນ
ຂ້າຈິ່ງຊິໄປຊອກຊື້ ຄວາຍໄດ້ດັ່ງປະສົງ ພະເຮີຍ
\+ ພະຍາເລີຍກ່າວເວົ້າ ວ່າຕາມແຕ່ໃຈມຶງ ຊຽງເຮີຍ
ຊາວວັນກໍ່ຊາວວັນ ກູຊິຄອຍຄອງຖ້າ
ຄັນມຶງເອົາຜະຫຍາໃຊ້ ພາງກູຕົວລ່າຍ ອີກນັ້ນ
ມຶງຊິມີໂທດຮ້າຍ ເຖິງມ້ວນມອດຊີວັງ ແທ້ດາຍ
\+ ຊຽງໝ້ຽງກົ້ມກາບຕ້ານ ຂານວ່າໂດຍງ

ຂ້າຈະໄປຊອກຫາຄວາຍ	ດັ່ງພະອົງຈາເວົ້າ
ແຕ່ຂ້າຢາກລອງໆຮູ້	ກະຕິກາເສຍກ່ອນ
ລະບຽບຂອງຜູ້ເສຍແລະແພ້	ຊິເປັນແທ້ຍ່າງໃດ ນີ້ເດ
+ ເມື່ອນັ້ນພ່າງໆໜ້າ	ຕົນອາດອົງພະຍາເມືອງ
ພະກໍ່ວາຈາໄຂ	ກ່າວກະຕິກາ ວາງໄວ້
ຄັນວ່າຄວາຍມຶງແພ້	ຄວາຍກູຊິຍໍມອບ ມຶງແລ້ວ
ຄັນຄວາຍກູຫາກແພ້	ຊິເອົາໂສ້ໃສ່ຄໍ ມຶງດາຍ
+ ຊຽງກໍ່ກົ້ມກາບນ້ອມ	ທູນພະບາດລາລົງ
ກັບຕ່າວຄືນເມືອເຮືອນ	ຮ່ຳຄະນຶງແນວແກ້
ຍາມຄ່ຳມາເຖິງແລ້ວ	ກິນແລງກໍ່ບໍ່ອີ່ມ
ຄວາມຄິດອຸກອົ່ງຖ້ວມ	ກິນນ້ອຍຫາກອີ່ມເອງ
+ ພໍຮອດມື້ອື່ນເຊົ້າ	ຕາເວັນສ່ອງແສງມາ
ຊຽງກໍ່ຄວາດີລູກ	ສ່ວຍມີຫົວໜ້າ
ແລ້ວກໍ່ມາກິນເຂົ້າ	ພໍຮອງທ້ອງຕື້ມ
ແລ້ວຈຶ່ງລົງຈາກຫ້ອງ	ເດີນຍ້າຍຍ່າງໄປ
+ ຈາກບ້ານນີ້ ຮອດບ້ານນັ້ນ	ຜັນລ່ວງກາຍໄປ
ທັງເລົ່າວາຈາຖາມ	ພວກປະຊາຊາວບ້ານ
ໃຜຫາກມີຄວາຍນ້ອຍ	ຕົວມັນຫາກໍ່ເກີດ ນັ້ນບໍ
ເຮົານີ້ຄິດຢາກຊື້	ໄປຖວາຍເຈົ້າພີ່ພະຍາ ນັ້ນແລ້ວ
+ ຍັງມີເຮືອນໜຶ່ງໄດ້	ເວົ້າວ່າມີຄວາຍ
ຫາກໍ່ບີ້ນລົງຕົກ	ເກີດມື້ວານນີ້

ຊຽງຄ່ອຍມາແລຢ້ຽມ　　ດູມັນລອງເບິງ
ຄັນຫາກເວົ້າແມ່ນຂໍ້　　ຊິຂາຍມ້ວນມອບຊຽງ
　　ຫັ້ນແລ້ວ
+ ແຕ່ນັ້ນ ຊຽງກໍ່ໄປເບິງແລ້ວ　　ເຫັນວ່າພໍໃຈ ແທ້ແລ້ວ
ກໍ່ຈຶ່ງເອົາເງິນອາງ　　ແຕ່ງປຸນແປງຊີ້
ຍໍມອບເວນອາງໃຫ້　　ເປັນເງິນພັນຊັ່ງ
ຊື້ຄວາຍແມ່ລູກນັ້ນ　　ຄືນເຂົ້າສູ່ເຮືອນ
+ ຄ້ອນວ່າ ເມືອຮອດແລ້ວ　　ຊຽງຢູ່ສະບາຍໃຈ
ເຊື່ອວ່າຈະໄດ້ເອົາຄວາຍໄປ　　ຊະນະຄວາຍພະຍາໄດ້
ຊຽງກໍ່ເອົາຄວາຍນ້ອຍ　　ໄປໄກພັດແມ່
ຂັງໄວ້ໃນຄອກນ້ອຍ　　ບໍ່ອາງໃຫ້ດູດນົມ ຫັ້ນແລ້ວ
+ ແຕ່ນັ້ນຄວາຍນ້ອຍຮ້ອງ　　ຍ້ອນຢາກກິນນົມ
ຄວາຍແມ່ ມັນກໍ່ອາໆສຽງ　　ຄິດຮອດໂຕຄວາຍນ້ອຍ
ຊຽງບໍ່ຟັງຄວາມຮ້ອງ　　ຂອງຄວາຍແມ່ລູກອ່ອນ
ຕັ້ງຫາກຂັງຈ່ອງໄວ້　　ໃຫ້ຄວາຍນ້ອຍຢາກນົມ
+ ເມື່ອນັ້ນມາຮອດມື້　　ພະຍາມັດລົງສະຫນາມ
ຝູງຫມູ່ປວງຊົນມາ　　ຄັບຄາຫນາແຫນ້ນ
ຍົນໆຍ້າຍ　　ປະຊາຊົນນ້ອຍໃຫຍ່
ນັບຫລາຍແສນເກືອບລ້ານ　　ໄຫລເຂົ້າຂ່ວງສະຫນາມ
+ ຍາມນັ້ນ ພະບາດເຈົ້າ　　ຈັດສົ່ງຄວາຍມາ
ຕັ້ງຫາກຮົງງສູງ　　ພໍ່ຄວາຍແຮງກາ
ກໍ່ຫາກ ພິຖະຫມັດແທ້　　ຫນໍາກວມຄໍໃຫຍ່

ເຂົາໂຕ່ງຊ່ຽງ — ປາຍສ້ວຍສຽບແຫລມ
+ ຄວາຍນີ້ຮ້າຍຂະໜາດແທ້ — ເຕັ້ນໂດດຂະໂຍງເດີນ
ສອງໜ່ວຍຕາແດງໃສ — ເບິ່ງເປັນຕາຢ້ານ
ເຊືອກມັດດຶງທາງໜ້າ — ທາງຫລັງແຂງຂະໜາດ
ທະຫານຖືຫອກແສ້ — ສອງເບື້ອງແວດລະວັງ
+ ພໍຮອດຍາມມັດແລ້ວ — ພະຍາປ່ອຍຄວາຍລົງ
ມັນກໍ່ຂະໂຍງຂະເຍງເດີນ — ແລ່ນຕາມສະໜາມກວ້າງ
ຝູງປະຊາຊົນຢ້ານ — ພາກັນຫລົບຫລີກ
ຂຶ້ນນັ່ງເທິງແຖບນັ້ນ — ຮາວຮົ້ວຂ້ວງສະໜາມ
+ ແຕ່ນັ້ນທຸກທົ່ວພ້ອມ — ຊອກເບິ່ງຍັງຊຽງ
ເພື່ອຢາກເຫັນຄວາຍມັນ — ຊິສໍາໃດຈິງແທ້
ພໍຊິມາຊົນແພ້ — ຄວາຍພະຍາຫລືບໍ່
ຫລືວ່າຊຽງຊິໄດ້ — ຈໍາໂສ້ຊິກັຄາ ນັ້ນເດ
+ ບາງຄົນຊຸບຊິບເວົ້າ — ວ່າຄິດອີ່ດູຊຽງ ເດນໍ
ຢ້ານຖືກຄາຊຸມຂັງ — ຢ່າງບໍ່ມີທາງເວັ້ນ
ເພາະວ່າ ຄວາຍພະຍານີ້ — ຊິຫາໂຕປຸ້ນປຽບ ບໍ່ມີແລ້ວ
ທັງໃຫຍ່ທັງເຮັ່ງຮ້າຍ — ໜ້າອູມຈອດຄໍ ແທ້ແລ້ວ
+ ໜ້ອຍໜຶ່ງສຽງໂຫ່ຮ້ອງ — ດັງອອກ ເຄັງໆ
ວ່າໃຫ້ຄົນຄອຍຫຍັບ — ອອກແປງທາງໄວ້
ເພາະວ່າຄວາຍຊຽງໝັ້ນຽງ — ເດີນມາໃກ້ຊິຮອດ ເຮົາແລ້ວ
ຊຽງໝັ້ນຽງດຶງເຊືອກທີ້ນ — ຄວາຍເຍື້ອນຍ່າງນໍາ
+ ມັນແມ່ນຄວາຍນ້ອຍໆ — ຫາກໍ່ເກີດສິບວັນ ແທ້ແລ້ວ

24/VH

ເບິ່ງຮ່າງຄີງມັນພອມ   ຈ່ອຍຈົນບໍ່ມີຫອງ

ຫົວຍ່າງຫົວອອນຮ້ອງ   ອາງໆຫາແມ່

ເພາະວ່າ ຫິວຫອດກັ້ນ   ສິບມື້ຈ່ອງນົມ ຫັ້ນແລ້ວ

+ ແຕ່ນັ້ນທຸກທື່ອເວົ້າ   ຮ້ອງຈື່ມອິດູຕົນ ແທ້ແລ້ວ

ຢ້ານແຕ່ ຄວາຍພະຍາເຫັນ   ຊິຢຽບເອົາຈົນແປ້

ຢ້ານວ່າຕົວຊຽງຫມ້ຽງ   ຊິເຖິງຄາວທົນຍາກ

ພະຍາຊິໃຫ້ມັດສອກແປ້   ຄາເຂົ້າໃສ່ຄໍ ບໍ່ຢ່າແລ້ວ

+ ຟັງຍິນສຽງລັ່ນຄ້ອງ   ສຽງເສບດູລີຍາງ ພຸ້ນເຍີ

ພະຍາຈຳເສນາ   ບອກຕົວຊຽງຫມ້ຽງ

ວ່າໃຫ້ຊຽງກຽມພ້ອມ   ຈູງຄວາຍມາປ່ອຍ

ຄວາຍໃຜຈົນຊິແພ້   ລອງໄດ້ເບິ່ງກັນ ແທ້ເນີ

+ ເມື່ອນັ້ນ ຄວາຍຊຽງຫມ້ຽງນ້ອຍ ແລ່ນສູ່ວົງສະຫນາມ

ຮ້ອງເປັນສຽງອາງໆ   ງວາກດູຂວາຊ້າຍ

ຄວາຍພະຍາເຫັນແລ້ວ   ທະຍານໂຢງມາໃສ່

ພະຍາລຸກແຍ່ງແຍ້   ໂຮຮ້ອງໂຊກໄຊ

+ ຊຽງຫມ້ຽງເນົານັ່ງກົ້ມ   ຫລຽວເບິ່ງຄວາຍໂຕ

ວ່າຊິເປັນແນວໃດ   ຊົ່ວດີຫລືຮ້າຍ

ເມື່ອນັ້ນຄວາຍໂຕນ້ອຍ   ເຫັນໂຕຄວາຍໃຫ່ຍ

ມັນກໍ່ຄິດວ່າໄດ້   ມາພໍ້ແມ່ໂຕ

+ ມັນກໍ່ເລີຍໂດດເຕັ້ນ   ແລ່ນໃສ່ຫມົດແຮງ

ໄປຮອດຄວາຍພະຍາ   ກໍ່ຊອກກິນນົມແທ້

ເອົາຫົວລົງໄປຊົ້ນ   ຫວ່າງຂາຄວາຍເຖິກໃຫ່ຍ

ຄິດວ່າຫຳແມ່ນຕູ້ ກໍ່ເລຍແລ້ວດູດກິນ
+ ຄວາຍພະຍາຄ້ານ ເລີຍເລົ່າກະດຽມຫຳ
ກໍ່ຍ່າງເດີນໄກໜີ ຈາກໂຕຄວາຍນ້ອຍ
ແຕ່ນັ້ນໂຕຄວາຍນ້ອຍ ຕິດຕາມດັ້ນດ່ອນ
ເອົາຫົວໄປເຂົ້າຊົ້ນ ປອງແທ້ດູດຫຳ
+ ຄວາຍໃຫຍ່ທົນບໍ່ໄດ້ ກໍ່ເລີຍແລ່ນໜີໄປ
ຄວາຍນ້ອຍເລີຍຕິດຕາມ ແລ່ນໄປນຳກົ້ນ
ມັນບໍ່ຍອມເຊົາໃຫ້ ໄກຄວາຍໂຕໃຫຍ່
ເພາະວ່າມັນຢາກຕູ້ ຊິກິນໃຫ້ອີ່ມໃຈ
ຄວາຍໃຫຍ່ກະດຽມກໍ່ຢ້ານ ເລີຍແລ່ນໄປໄວ
ຄວາຍນ້ອຍເລີຍຕິດຕາມ ແລ່ນໄປທົງຮ້ອງ
ເປັນເລື່ອງຄວາຍຊຽງຫມ້ຽງ ທະຍານໂຕນເຕັ້ນໄລ່
ຄວາຍພະຍາເລົ່າຢ້ານ ໂຕນເຕັ້ນແລ່ນໜີ
+ ເຮັດໃຫ້ ປວງປະຊາໂຫ່ຮ້ອງ ເຫົ້າທົ່ວເຕັມສະໜາມ
ທັງເລົ່າຕົບມືຍືນ ກະຍ່ອງຕົວໂຕນເຕັ້ນ
ຮ້ອງວ່າຄວາຍພະຍາໜີຢ້ານ ປອງປຸນເຕັ້ນພ່າຍ
ຄວາຍບັກຊຽງຫມ້ຽງແພ້ ຕາມກົ້ນໄລ່ນຳ ແທ້ດາຍ
+ ຈົ່ງແມ່ນທິດງກ້ອງ ຟົດສະນັ່ນເຕັມສະໜາມ
ແທ້ແລ້ວ

ສຽງໂຫ່ແຊວນັນເມືອງ ພວກຄົນຍືນຟ້ອນ
ດີໃຈຄວາຍຊຽງແພ້ ຄວາຍພະຍາປົບແລ່ນ
ດູຄັ່ງຄົນມ່ວນແມ້ງ ບໍ່ມີມືຊິປຽບປານ ແທ້ແລ້ວ

+ ແຕ່ນັ້ນຊຽງຫມ້ຽງຕ້ານ ກົ້ມກາບພະຍາຫລວງ
ດຽວນີ້ຄວາຍຂ້າພວມຕິດຕາມ ໄລ່ຄວາຍພະຍາແລ້ວ
ຄວາຍຂ້າເປັນຕົວແພ້ ຄວາຍພະຍາຫນີແລ່ນ
ຫມົດຊູ້ຄົນຢູ່ອ້ອມ ສະຫນາມກວ້າງກໍ່ຍ່ອມເຫັນ
ແທ້ແລ້ວ

+ ຂໍພະຍາຈົ່ງໄດ້ ຍໍມອບຄວາຍພະຍາ
ໃຫ້ຂ້າຈູງເອົາເມືອ ດັ່ງຄວາມພະຍາເວົ້າ ຫັ້ນທອນ
ແຕ່ນັ້ນພະຍາຫລວງຕ້ານ ຫລິງດູແປກປະຫລາດ ແທ້ແລ້ວ
ຄວາຍກູ ສູ້ບໍ່ແພ້ ກໍ່ຍອມໃຫ້ມອບແກ່ມຶງ
ຊຽງເອີຍ.

+ ແຕ່ນັ້ນ ພົ່ງຟັ້ງ ສຽງໂຫ່ເຕັ້ນສະຫນາມ
ພຸ້ນເຍີ

ໃຜກໍ່ມາຍໃຈຄິດ ອິດູຊຽງຫມ້ຽງ
ບັ້ນນີ້ມີໄຊແລ້ວ ບັກຊຽງເຮົາຊິພົ້ນໂທດ
ຈິງແລ້ວ

ຊ້ຳພັດມາເລົ່າໄດ້ ຄວາຍຮ້າຍໃຫ່ຍຫລວງ
ເຈົ້າເອີຍ

ຊຽງກໍ່ກົ້ມກ່າວຕ້ານ ຂອບໃຈພະຍາຫລວງ
ທີ່ໄດ້ມີໃຈດີ ມອບຄວາຍເອົາໃຫ້
ທັງປ່າວເຕືອນທັງຄ້າຍ ວ່າຊຽງໄປພົ້ນໂທດ
ພະຫຍາຊຽງເກົ້ງກາ ກູນີ້ກໍ່ຫາກຍອມ ແທ້ແລ້ວ
+ ຊຽງຫມ້ຽງເລີຍເລົ່າໄດ້ ຄວາຍໃຫ່ຍໄປປົວ

ແລ້ວກໍ່ຈູງເອົາຄວາຍ ຄູ່ຊີວາຕົວນ້ອຍ
ເອົາຄືນໄປຫາບ້ານ ກິນນົມຕົວແມ່
ຄວາຍ ແລະ ລົມຊື່ນຊ້ອຍ ສະບາຍເນື້ອຢູ່ເຢັນ ຫັ້ນແລ້ວ
+ ເລື່ອງນີ້ບອກໃຫ້ຜູ້ ສະເຫວີຍລາດເປັນພະຍາ
ຢ່າໄດ້ດູແຄນຝູງ ໄພ່ພົນແຮງນ້ອຍ
ເພາະວ່າເທວະດາຜູ້ ຊົງທຳບໍ່ຊູ້ຊອນ
ເລີຍຊິເສຍຊື່ເປັນດັ່ງດ້າມ ພະຍາເຈົ້າຜູ້ບໍ່ດີ ນີ້ແລ້ວ%

26— ຊຽງໝ້ຽງຂີ່ເຮືອບັ່ງພາຍ

+ ບັດນີ້ຈັກກ່າວເຖິງ ສະມະເນນໜຸ່ມນ້ອຍ ເມືອງຊື່ທະວາດີ
ກ່ອນແລ້ວ

ເຈົ້າກໍ່ຢູ່ ພາຍໃນວັດ ເຂດພູມພາຍໃຕ້
ພໍເມື່ອ ອາຍຸໄດ້ ສິບປີເລີຍບວດ
ເຈົ້າກໍ່ ເດີນດຸ່ງດັ້ນ ນຳແທ້ທ່ານພະຄູ ຫັ້ນແລ້ວ
+ ອັນວ່າ ພໍ່ແຈ່ມເຈົ້າ ທັງແມ່ ມານດາ
ເພີ່ນກໍ່ ເນົາຢູ່ໃນຄາເມ ຝັ່ງນະທີພາຍພຸ້ນ
ຈິວກໍ່ ເອົາໃຈສ້າງ ຄອງທຳຣຽນຣ່ຳ
ຄຶດຢາກແຜ່ພົນພະຫລະໃຫ່ຍກວ້າງ ໄປຄ້ຳພໍ່ແມ່ຕົນ
+ ຫລາຍຂວບປີ ຕິດຕໍ່ຕັ້ງ ແຖມຖ່າຍປີເດືອນ
ເຈົ້າກໍ່ເລົ່າຄະນຶງນຳເຖິງບິດາ ທັງມານດາ
ອອກຕົນທາງບ້ານ

ເມື່ອນັ້ນ ເຈົ້າກໍ່ໄດ້ຈັກໄປຢາມແທ້ ລົງເຮືອຟ້າວຮີບ
ແລ້ວຈຶງ ແດບງ້າຍ ຕີນດຽວເຈົ້າຈາກໄປ
+ ຈົວກໍ່ຫາກ ເຣວຮີບຟ້າວ ພະລັນດຸ່ງເດີນໄປ
ຊຽງໝ້ນຽງ ກໍ່ເລົ່າເດີນໄປເຖິງ ທ່ານະທີຫານກວ້າງ
ແຕ່ນັ້ນ ຊຽງກໍ່ປີປາຍຕ້ານ ຖາມດູຫາເຫດ
ຫລອນວ່າ ຈົວອ່ອນນ້ອຍ ກູມາໃຫ້ຂີ່ເຮືອ ບໍ່ຮູ້
+ ອັນວ່າ ດູລາພະພີ່ເຈົ້າ ອົງອາດສາມະເນນ
ຂ້ອຍເອີຍ

ບັດນີ້ ເຈົ້າຈັກລີລາເດີນ ໄປທີ່ໃດດຽວນີ້ ນັ້ນເດ
ແຕ່ນັ້ນ ສາມະເນນນ້ອຍ ເລີຍຂານຖະແຫລງຕອບ
ເຣົາກໍ່ຈັກ ໄປແຫ່ງຫ້ອງ ພາຍພຸ້ນຟາກໃນ ແທ້ດາຍ
+ ເພື່ອວ່າ ຄິດຮອດເຈົ້າ ຕີນແມ່ມານດາ
ທັງປີຕາ ຢູ່ຄອງພາຍພຸ້ນ
ເຣົາຈັກ ໄປຖາມຖ້ອຍ ໃຫ້ເຫັນກັນພໍສະຫນ່ອຍ
ຈັກວ່າ ດີ ແລະ ຣ້າຍ ກໍ່ຕາງຢື້ຢ່ອງຢາມ ດອກນາ
+ ແຕ່ນັ້ນ ຊຽງກໍ່ນ້ອມຫນ່ຽວໄຫວ້ ຂໍຮ່ວມໄປນຳ ແດ່ທ້ອນ
ຂ້ອຍກໍ່ຄິດ ຢາກໄປຍັງດອນ ຟາກນະທີພາຍພຸ້ນ
ຕາງໃຫ້ເປັນເພື່ອນທາງດອນເຈົ້າ ວາຈາຕ້ານປາກ
ຂ້ອຍຂໍໄປ ນຳຈົວເທື່ອນີ້ ທັງພ້ອມຊິນັ່ງພາຍ ດອກນາ
+ ເຈົ້າຊິ ເມດຕາຂ້ອຍໄດ້ ໃຫ້ເດີນດ່ວນໄປນຳ ໄດ້ບໍ່
ຄັນຄິດ ຕາມຄອງທຳ ຄວນໃຫ້ໄປນຳໄດ້
ແຕ່ນັ້ນ ສາມະເນນນ້ອຍ ເປັນຄົນໃຈຊື່

ຄິດວ່າ ຊຽງຫມ້ຽງນີ້ | ໄປແຫ້ຊິຊ່ອຍພາຍ
+ ເຈົ້າຊິໄປ ກໍ່ໄດ້ | ອ້າຍຊຽງ ຮີບລົງມາ ທ່ຽວເທີ້ນ
ພ້ອມພ່ຳ ພາຍໄປເຖິງ | ຝັ່ງນະທີພາຍພຸ້ນ
ແຕ່ນັ້ນ ຊຽງກໍ່ກະໂຍງກະເຍງເຕັ້ນ | ລົງເຮືອແວນທ່ຽວ
ບັດນີ້ ກູຈັກໄປພ່ຳພ້ອມ | ຈົວນ້ອຍນັ່ງພາຍ ແລ່ນ
+ ເພື່ອວ່າ ກູຈັກໄປພ່ຳພ້ອມ | ຮຽງຮ່ວມກັບເນນ ທັ້ນແລ້ວ
ຊຽງຫມ້ຽງ ເລີຍເລົ່າຫາເອົາມາ | ເຊື່ງພາຍດວງນ້ອຍ
ແລ້ວເລົ່າ ລົງເຮືອພ້ອມ | ທັງຈົວແລ້ວນັ່ງ
ຊຽງຈຶ່ງແປງ ຂະບວນເພດໃຫ້ | ສະເຫນີ້ການວ່າດີ ທັ້ນແລ້ວ
+ ອັນວ່າ ຈົວຂີ້ທ້າຍ | ຊຽງນັ້ນຂີ່ທາງຫົວ
ແລ້ວເລົ່າ ບາຍເອົາພາຍ | ນັ່ງຮອງຕັ່ງໄວ້
ຊຽງກໍ່ບໍ່ ເອົາພາຍນ້ຳ | ນຳຈົວຈັກບາດ
ກໍ່ທໍ່ ນັ່ງເອີ້ຍເປີ້ຍ | ໂສມຫນ້າເພດຂຸ່ນ ແຫ້ດາຍ
+ ອັນວ່າ ເຮືອເຄື່ອນຍ້າຍ | ຈົວພາຍດ່ວນລົມດຽວ
ແຕ່ນັ້ນ ເຮືອກໍ່ເດີນໄປເຖິງ | ບ່ອນແປວແລວນ້ຳ
ເມື່ອນັ້ນ ຊຽງກໍ່ພາທີ້ຕານ | ເຕີນຈົວເຮວຮີບ ຈົງເທີ້ນ
ຍ້ານທໍ່ ລົມຟາດນ້ຳ | ຟອງຊິຟົ້ງເຂົ້າໃສ່ເຮືອ
+ ແຕ່ນັ້ນ ຈົວກ່າວຕ້ານ | ຂານຕອບຄຳຊຽງ
ເຈົ້າສັງ ບໍ່ກູມາດິກ | ຊ່ອຍພາຍຄອມຂ້ອຍ
ຮູ້ຈັກວ່າ ເຮືອລຳນ້ອຍ | ຕາກໍ່ຍັງເຫັນຢູ່ ນັ້ນເດ
ຄືບໍ່ ພາຍຊ່ອຍຂ້ອຍ | ເປັນສັງເຈົ້າຈຶ່ງນັ່ງເຕັ່ງ
ໄມ້ພາຍໄວ້

\+ ຄັນວ່າ ຊຽງຫມ້ຽງເຮັດດັ່ງນີ້ ກໍສິ້ນສິ່ງເປັນຄູ ແທ້ແລ້ວ

ມາບໍ່ມີ ຄວາມຄິດ ເຊື່ງກັນອີສັງແທ້

ອັນວ່າ ສາມະເນນນ້ອຍ ພາຍເຮືອທັງຈົ່ມ ໄປນັ້ນ

ແມ່ນວ່າ ດ່າໄຈ້ໆ ກໍດາຍແລ້ວທາກຣູນ ແທ້ດາຍ

\+ ຊຽງກໍບໍ່ຟັງ ຈົວກ່າວເວົ້າ ຈັ່ງຈົ່ມແນວໃດ

ອົ່ງຕົ່ງ ເນົາໃນເຮືອ ບໍ່ເຫລືອດແລເຫນືອໃຕ້

ມັນກໍ ຊົງມົງຫນ້າ ສອງຫູບໍ່ຮູ້ເມື່ອ ແທ້ດາຍ

ຈົວກໍ ທັງຈົ່ມໄຫ້ ທະລອນເຍື້ອນຄ່ອຍພາຍ

\+ ມິ່ງສົງມາເຮັດເພດຫນ້າ ສອງຫູຫນວກເປັນກະດັດ ດັ່ງນີ້

ບໍ່ຊ່າວ່າ ກູຈັກບາຍເອົາພາຍ ທັ່ງລົງວັງນ້ຳ

ປະໃຫ້ ມັນຈົມວັງນ້ຳ ນະທີຫລວງເສຍສ່ວາງ ເທາະລື

ຕາມຊ່າງ ຝູງຫມູ່ແຂ້ເງືອກຮ້າຍ ຊິກິນຊິ້ນຊາກມັນ ທັ້ນທອນ

\+ ຈົວກໍ ຍັງຈົ່ມໄຫ້ ມີເລົ່າພາຍເຮືອ

ອັນວ່າ ເສໂທທັງເມໂທ ເຫື່ອໄຄໄຫລຍອຍ

ແຕ່ນັ້ນ ຈົວກໍວາຈາຕ້ານ ລົມໄປທັງດ່າ

ຊຽງຫມ້ຽງ ນັ່ງໂຈ້ໂກ້ ຫູຊ້າພັດບໍ່ຟັງ

\+ ຄາວຫນຶ່ງ ຟ້າກໍ່ເສົ້າ ສູນເມກລົງແລງ

ສູລິໂຍເລີຍ ອວ່າຍລົງຍາມຄ້ອຍ

ໂອນໍ ບັດນີ້ມາແມ່ນກຳກູແທ້ ພາຍເຮືອແຂນຈັກຂາດ ຕາຍແລ້ວ

ຊ້ຳພັດແຮ່ງ ໜັກບັກຊຽງໝ້ຽງຂີ້ຮາຍ   ມາເຂົ້າຂຶ້ນຳ ນັ້ນນາ

+ ແຕນັ້ນ ລົມລ່ວງຕ້ອງ   ນ້ຳຟາດຟອງສູງ ພຸ້ນເຢີ

ຈົວກໍ່ ໂຮຍແຮງກົວ   ຢ້ານເງືອກກິນໂຕຊ້ຳ

ໂອນໍບັດນີ້ ກູຈັກມໍລະນາມ້ຽມ   ກາງນະທີບໍ່ເຫັນແມ່ ກູແລ້ວ

ອັນວ່າ ເຮືອແຮ່ງຊ້ຳລຳນ້ອຍໆ   ຟອງພັດຖ້ວມຕື້ມເຕັງ ນີ້ເດ

+ ບັດນີ້ ກູຈັກຕາຍປະເຈົ້າ   ພໍ່ແມ່ບໍ່ທັນເຫັນ ເສຍນໍ

ກັບທັງ ຝູງພົງພັນ   ໂຄດວົງພົງເຊື້ອ

ເພາະວ່າ ຊຽງໝ້ຽງພາງານແທ້   ປຸນເປັນຄົນຖ່ອຍ ນີ້ນໍ

ບໍ່ຊ່າວ່າ ຈັກເອົາພາຍຟາດໃຫ້   ລົງນ້ຳແມ່ນະທີ ແທ້ແລ້ວ

+ ແຕນັ້ນ ຊຽງກໍ່ຈິ່ງປາກກ່າວຕ້ານ   ຂານຕອບຍັງຈົວ

ຂ້ອຍກໍ່ຍັງ ຂໍມານຳ   ເພິ່ງພາຈົວແທ້

ເປັນສັງ ເຈົ້າຊິວາຈາປ້ອຍ   ເປັນຄວາມຮ້ອງຈົ່ມ ນີ້ເດ

ຂ້ອຍກໍ່ ຂໍໃຫ້ຈົວຈົ່ງຕັ້ງ   ໃຈແທ້ຄ່ອຍພາຍ ຫັ້ນທ້ອນ

+ ຈົວບໍ່ຈຳຈື່ໄດ້   ຄາວເມື່ອລົງເຮືອ ນັ້ນບໍ

ຂ້ອຍໄດ້ ຂໍໄປນຳຈົວ   ກໍ່ວ່າດີໃຈດ້ວຍ

ຈົວບໍ່ໄດ້ ຍິນຄຳຂ້ອຍ   ຂໍດອນແຕລົ້ງທ່າ ພຸ້ນລື

ເຈົ້າຫາກ ພາຍໂພດອ້າຍ   ຄຳລະຫ້ອຍກໍ່ຈິ່ງມາ ດອກນາ

+ ເມື່ອນັ້ນ ສາມະເນນກ່າວເວົ້າ ຖະແຫລງຕອບຄວາມຊຽງ

ເຮົາກໍ່ຄຶດ ວ່າຊຽງເປັນຄົນ   ດັ່ງຊາວເມືອງບ້ານ

ບໍ່ຮູ້ວ່າ ຈັກມາລັງຂີ້   ຄວາມງອນມັກງ່າຍ ສັນນີ້

ພັດແຕ່ ທະວາດີເຂດດ້າວ   ເມືອງນີ້ບໍ່ຫ່ອນມີ ແທ້ດາຍ

+ ເມື່ອນັ້ນ ສາມະເນນວ່າແລ້ວ ຄະນຶງຢູ່ໃນໃຈ

ຄິດຕໍ່ ບຸນກຸສົນ   ທີ່ຕົນແປງສ້າງ ທັ້ນແລ້ວ
ຫັວເລົ່າ ຍໍມືໄຫວ້   ບຸນຄຸນຫລາຍແຫ່ງ
ຈົວກໍ່ ຄິດຕໍ່ຕັ້ງ   ຕົນໄດ້ບວດຮຽນ
    + ບັດນີ້ ຜະຫຍາລຸ່ຍປູ້   ລົດຜ່ອນປັນຍາ ແທ້ແລ້ວ
ເທື່ອນີ້ ຊຽງໜ້ຽງພາໂສຕົວະ   ງ່າຍດາຍຈິງແທ້
ແຕ່ນັ້ນ ຈົວກໍ່ປີປາຍຕ້ານ   ວາຈາຄຳມ່ວນ
ລາງເທື່ອ ມັນຄິດແລ້ວ   ຊິພໍ້ຮູເນື້ອຄີງ ບໍ່ຮູ້
    + ສຽງປາກ ເນນປ່ຽນປິ້ນ   ມາອ່ອນໂຍນດີ
ກໍ່ຫາກ ອໍລະຊອນສຽງ   ມ່ວນຫູຄື້ຄອຍ
ບັດນີ້ ເຮົາກໍ່ຫາກກາຍວັງນ້ຳ   ແປວຫລວງຫລາຍຍ່ານ
    ມາແລ້ວ
ມັນກໍ່ຈັກ ເຖິງຝັ່ງຟາກພຸ້ນ   ພາຍໜ້າບໍ່ນານ ແທ້ດາຍ
    + ເມື່ອນັ້ນ ຈົວເລົ່າຕິຖະແຫລງກ່າວເວົ້າ   ຖາມເຫດລອງດູ
ເຮົາໄດ້ ມານຳກັນ   ຮອດພໍປານນີ້
ກໍ່ຫາກ ພໍດີແທ້   ກະທຳຄວາມລົ້ງແກ່ນ
ບາດວ່າ ຮອດຝັ່ງແລ້ວ   ຊຽງຊິຂຶ້ນບ່ອນໃດ ນັ້ນເດ
    + ບັດນີ້ ເຮົາຫາກຖາມເບິ່ງຂໍ້   ໃຫ້ຊຽງຕອບຕົງມາ ທັ້ນທ້ອນ
ເຫດວ່າ ເຮົາຢາກເຫັນປາຍທາງ   ບ່ອນຊຽງຊິລົງແທ້
ຄາວນີ້ ສູລິໂຍຄ້ອຍ   ຄາລົງລັບລ່ຽມ ເສຍແລ້ວ
ຫລອນວ່າ ເມືອຮອດບ້ານ   ຮາເຈົ້າຊິພາກກັນ ບໍ່ຮູ້
    + ເຖິງເມື່ອ ວັນໜ້າພຸ້ນ   ຊິກັບຕ່າວຄືນເມືອ
ຄາວນັ້ນ ສອງຄົນເຮົາ   ກໍ່ຮ່ວມລົງເຮືອນ້ອຍ

ເມື່ອນັ້ນ ຊຽງຫມ້ຽງຕ້ານ ວາຈາຂານຕອບ
ຈົວໃຫ້ລົງ ຊິໃດກໍໄດ້ ສຸດແລ້ວແຕ່ຈົວ
+ ຄັນວ່າ ເຮືອຫາກໄປຮອດແລ້ວ ເຖິງຝັ່ງພຽງໃດ ກໍດີ
ຂ້ອຍກໍຈັກ ລາຈອມຫົວ ອອກໄປທັນນັ້ນ
ມັນກໍບໍ່ ພິຈານແທ້ ພາຍຫລັງຊິມີບາບ ຈົວນັ້ນ
ບັດນີ້ ເວນຄອບແພ້ ຊິນຳໃຊ້ແກ່ມັນ ແລນໍ
+ ແຕ່ນັ້ນ ສາມະເນນນາດນ້ອຍ ຟັງຄຳກ່າວຂອງມັນ
ຈົວກໍລອງ ເອົາພະຫຍາ ໃຫ້ແກ່ມັນລອງແກ້
ອັນວ່າ ເທພາເຈົ້າ ສະຫມຸດຫລວງຊົດຊ່ອຍ
ຈົວແລ້ວ

ເຫດວ່າ ບັກຂີ້ຮ້າຍ ມັນອ້າງອວດພະຫຍາ
ແທ້ດາຍ

+ ແຕ່ນັ້ນ ຍ່ອງຍ້າຍ ເຮືອຈອດແຄມຊົນ ພຸ້ນເຢີ
ທີ່ນັ້ນ ເປັນຫນາມຫນາ ຝັ່ງຊັນສູງລ້ຳ
ເມື່ອນັ້ນ ຈົວເລົ່າຜາບຄຳຕ້ານ ດອນຊຽງກອຍກ່າວ
ບັດນີ້ ເຮືອຫາກມາຮອດຝັ່ງແລ້ວ ອ້າຍຊຽງຫມ້ຽງຣີບອອກໄວ
ທັ້ນທ້ອນ

+ ແຕ່ນັ້ນ ຊຽງກໍຈິ່ງຫລຽວລ່ຳຢ້ຽມ ເຫັນປ່າຫນາມຫນາ
ມັນກໍຈິ່ງ ສິງລິງຄິດ ຢູ່ຄືຄົນບ້າ
ຊຽງກໍຈິ່ງ ພາທີຕ້ານ ໄປເຊົາບ່ອນອື່ນ ອ້າຍຈົວ
ເອີຍ

ສັງຊິມາ ຈອດບ່ອນນີ້ ຫນາມຮ້າຍຝັ່ງຊັນ ແທ້ນາ

+ ອັນວ່າ ຮອດບ່ອນໜ້າ ຊິຕົ້ນອອກປານລືມ
ດອກແລ້ວ

ອັນວ່າ ສາມະເນນເອີຍ ຮີບເປືອງໄປທ້ອນ
ແຕ່ນັ້ນ ຈົວຈຶ່ງວາຈາຕ້ານ ຂານຄຳຊຽງຖ່ອຍ
ກູກໍບໍ່ ພາໄປບ່ອນອື່ນແລ້ວ ມຶງຊິປີ້ນເລົ່າລືມ ແທ້ລື

+ ກູຫາກ ພາຍເຮືອຂ້າມຍ່ານນ້ຳ ກາຍແມ່ນະທີຫລວງ
ມາແລ້ວ

ກູຫາກ ພາຍຄືນດຽວ ອ່ອນໂຮຍແຮງແລ້ວ
ຍາມເມື່ອ ເຮືອຫາກໂຄມຟອງນ້ຳ ບໍ່ມີໃຜຊິພາຍຊ່ອຍ
ບັດນີ້ ເຂົ້າຈອດໄດ້ ພຽງນີ້ກໍອອກໄປ

+ ຍາມເມື່ອ ສັດຈະຕັ້ງ ກູຮັດດັ່ງຄວາມມຶງ ວ່າແລ້ວ
ບອກວ່າ ເຮືອຈອດໃນທາງໃດ ຊິອອກໄປທາງນັ້ນ
ບັດນີ້ ເຮົາກໍມາຈອດໃຫ້ ນະທີຫລວງເຖິງຝັ່ງ ມັນແລ້ວ
ຕາມຄຳຊຽງ ໄດ້ບອກໄວ້ ຍາມນັ້ນໃຫ້ຮີບລົງ ທ່ຽວເທີ້ນ

+ ມຶງຢ່າ ມາຕົວະລ່າຍຫລິ້ນ ຊິເປັນບາບຕາມຫລັງ ຫັ້ນແລ້ວ
ຄວາມວ່າ ມຶງແນວໃດ ແຕ່ງໄປຕາມນັ້ນ
ມຶງວ່າ ເຮືອເຊົາຢັ້ງ ທາງໃດມຶງຊິອອກ ວ່າດາຍ
ບັດນີ້ ມຶງຊິອອກກໍອອກທ້ອນ ພາຍຊິເນັ້ນເຂັ້ນຫົວ ແທ້ດາຍ

+ ເມື່ອນັ້ນ ຊຽງກໍຟັງຄວາມຈົວກ່າວເວົ້າ ເລີຍອອກລົງເຮືອ
ໄປຢືນຢູ່ເທິງບົ້ນຜາ ຝັ່ງເຊແຄມນ້ຳ
ແລ້ວກໍ ປີປາຍຕ້ານ ວາຈາເວົ້າອອກ
ອ້າຍຈົວເອີຍ ຂ້ອຍນີ້ເປັນນ້ອງເຈົ້າ ພະຍາກ້ຳຟ່າຍທະວາດີ ແທ້ດາຍ

+ ໃຫ້ຂ້ອຍ ຂໍອະນຸຍາດເຈົ້າ   ຈົງຢ່າຊຸຊິຕິ ຂ້ອຍທ້ອນ
ຄົນຊິເອົາ ພາຍຕີອີ່ຫລີ   ກໍ່ໃຫ້ຕີທາງເປັ້ນ
ອັນວ່າ ທາງແດງນັ້ນ   ບໍ່ມີສົມຍົດໃຫ່ຍ ບັກຊຽງດາຍ
ແຕ່ນັ້ນ ຈົງບໍ່ຊ້າ   ຍົງກ້າເວືອດຕີ
+ ຊຽງກໍ່ ຫງາຍເວີກລົ້ມ   ລຸກແລ່ນໜີໄປ
ຢັ້ງນະທີ ຄືນມາ   ພັດຖືກຈົງຕີຊ້ຳ
ຊຽງກໍ່ ຕົງຕາງຂຶ້ນ   ໂຄມໜານບຸບຸ່ນ
ຈົງກໍ່ ງ້າເວືອດຄ້ອນ   ໄມ້ພາຍນ້ອຍຄ່ອຍຕີ
+ ມຶງຮູ້ຈັກ ຜະຫຍາຈົງວ່ານ້ອຍ   ເຫັນແລ້ວບໍ່ມີກູ ບັກຊຽງເອີຍ
ມຶງຍັງ ຊິຫລາບຈື່ເດີນໜີໄປ   ຫລືຊິໂລເລຕົວະຫລອກກູ
ແນວນີ້
ເຫັນວ່າ ກູຍັງນ້ອຍ   ມຶງບໍ່ກົວຢານຢ່ອນ ວາລີ
ເໝືອນດັ່ງ ນົກຊຸມແຊງໃຫ່ຍແລ້ວ   ເຫັນແຮ້ງກໍ່ບໍ່ກົວ ນັ້ນບໍ
+ ອົດພໍ ຮີກຫໍ່ແຫ້   ຊົດຊ່ອຍພາຍເຮືອ ແດ່ແມ
ອັນນີ້ ມຶງປ່ອຍໃຫ້ກູພາຍຄົນດຽວ   ເໜື່ອຍແຮງຈົນລ້າ
ອິດເມື່ອຍ ກາງວັງນ້ຳ   ນະທີຫລວງໄຫລເພັ່ນ
ອັນວ່າ ແດດແຮ່ງຮ້ອນ   ແປວນ້ຳແຮ່ງໄຫລ ແທ້ແລ້ວ
+ ມຶງກໍ່ບໍ່ ຄຶດອອກແທ້   ຊິມາຊ່ອຍພາຍເຮືອ ນີ້ນາ
ຄຶດວ່າ ປັນຍາຫລາຍ   ອວດໂຕໂງແວ້ນ
ຄົນບໍ່ມີ ຄຸນນີ້   ເທວະດາກໍ່ບໍ່ຊ່ອຍ ຊຽງເອີຍ
ເກີດເປັນ ຄົນບາບໃບ້   ຊາວບ້ານໜ່າຍຊັງ ທັ້ນແລ້ວ
+ ບັດນີ້ ກຳມຶງມາຮອດແລ້ວ   ສົມກັບບາບຂອງມຶງ ຊຽງເອີຍ

ນຶ່ງຫາກ ທຳກຳໃດ ກໍ່ຮັບເອົາກຳນັ້ນ
ກຳນັ້ນ ເປັນຄວາມເວົ້າ ວາຈາສອນສັ່ງ ນຶ່ງແລ້ວ
ການກະທຳແບບນີ້ ເມືອໜ້າໃຫ້ຢ່າເຊົາ ແທ້ເນີ
+ ກູກໍ່ຈັກປະ ບັກຊຽງຖ່ອຍຮ້າຍ ຖິ້ມທີ່ທາງໜາມ ນີ້ແລ້ວ
ໃຫ້ມັນ ຕາຍເປັນຜີ ຢູ່ຄາກໍໄມ້
ແຕ່ນັ້ນ ຊຽງກໍ່ໂອຍໆຮ້ອງ ຂໍອວນເຊົາກ່ອນ

ອ້າຍຈົວເອີຍ
ຂ້ອຍກໍ່ ຈັກຕາຍບາດນີ້ ບໍ່ເຫັນໜ້າລູກເມຍ ແລນໍ
+ ອັນວ່າ ຝູງໝູ່ໜາມຖີ່ແທ້ ເກາະທົ່ວຕົນຕົວ ແທ້ແລ້ວ
ມັນກໍ່ ຄວາຄີຈັບ ຖືກເຄືອໜາມໄມ້
ອັນວ່າ ໂລຫິດຍ້ອຍ ທັງຄີງເລືອດອອກ
ຊຽງກໍ່ ອືດໆຮ້ອງ ໃນທັ້ນປ່າໜາມ ແທ້ແລ້ວ
+ ຈົວກໍ່ຫາກ ໜນຳກໍ່ໃຈແທ້ ນັ່ງຢູ່ເຊົາແຮງ
ທັງເລົ່າ ຄະນຶງໃຈຄິດ ຊະນະມັນມາແລ້ວ
ເມື່ອນັ້ນ ຊຽງກໍ່ຈິ່ງກົ່ງຂາຂຶ້ນ ຄານໄປເຮັດຕາບຊາຍ
ມັນກໍ່ ເລີຍເລົ່າຂີ້ ລົງນ້ຳຢອກຈົວ
+ ເມື່ອນັ້ນ ຈົວກໍ່ຂີດຽດກັ້ນ ນ້ຳລາຍຖົ້ມລົງຫຼຸຍ
ກໍບໍ່ ມີເຄີຍເຫັນ ຊື່ວຊານປານນີ້
ຄົນຜູ້ດີ ວານແທ້ ສັ່ງມາທຳແຕ່ແນວຊົ່ວ ນີ້ເດ
ກູກໍບໍ່ ຫ່ອນຮູ້ ເຊີງຊິຫລັ້ນຕໍ່ຕາຍ ດັ່ງນີ້
+ ເມື່ອນັ້ນ ຊຽງຄ່ອຍຕ້ານ ຈາຕອບຄຳຈົວ
ຜີວ່າ ແນວບິນເປັນ ຊິເຈີດລົງກິນເຈົ້າ

ເມື່ອນັ້ນ ຈົວພຸ່ມແສ້ນ   ວາຈາເອີ້ນຄ່າ ຊຽງແລ້ວ
ຄົນຊົ່ວ ເປັນຢ່າງນີ້   ເມືອງນີ້ກໍ່ຮ່າວມີ ແທ້ນໍ
+ ຕັ້ງວ່າ ເຫມັນສາບແທ້   ຄົນຊົ່ວເລວຊາມ
ເຫມັນດັ່ງ ງົວຄວາຍຕາຍ   ເນົ່າເຕັມກາງບ້ານ
ແມງວັນຂຽວເອີຍ ອົດພາກັນບິນເຂົ້າ   ມາຕອມກົ້ນເນົ່າ ບັກຊຽງແມ
ແລ້ວຈຶ່ງ ກັດຫຳ ແລະ ແບ້ນ   ໃຫ້ມັນຫ້ຽນຮອດແອວ ພຸ້ນເນີ
+ ສູຈຶ່ງ ລົງແຮງຄັດເຂັ້ນຂ້າ   ຄົນຫລອກລວງເຂົາ
ອວດວ່າ ມີປັ້ນຢາ   ຫລອກກິນຄົນໃບ້
ສູຈຶ່ງ ກິນໃຫ້ມັນຫມົດທັງພໍ້   ຫມາກໄຂ່ຫລັງຄົນຊາດອ່ວຍ
ແລ້ວຈຶ່ງ ກັດບຸ່ນເຂົ້າ   ກິນພໍ້ໂພ່ນໃນ ທັ້ນທອນ
+ ເອົາໃຫ້ມັນ ເປັນດັ່ງແຮ້ງ   ກິນຊາກຄວາຍຕ້າຍ
ນັ້ນທອນ

ສືມວ່າ ມັນເປັນຄົນ   ຊົ່ວບໍ່ມີທາງເວົ້າ
ກູກໍ່ ຄິດວ່າໃສ່ຖະນັດແທ້   ກຳມຶງຫມົດໂທດ ເສຍແລ້ວ
ບັດນີ້ ມຶງພັດຊ້ຳຕື້ກັນ   ມາໃຫ້ແກ່ກູ ດັ່ງນີ້
+ ຕີ່ກໍ່ໃຫ້ມຶງ ຕື່ມາໂລດຖ້ອນ   ບັກກົ້ນຂີ້ດ່າງແດງຮວານ
ກູກໍ່ ຈັກຫນີປະເສຍ   ຈາກມຶງດຽວນີ້
ໃຫ້ມຶງ ນອນສະແຄງຄາງ   ແຄມຊົນຊົ້ນຝັ່ງ
ຫົວແມງວັນ ທໍ້ຫຸ້ມ   ເປັນປຸ້ມໂທ່ຕອມ
+ ບັດນີ້ກູ ແລະ ມຶງຊິພົ້ນ   ຫນີຈາກໄກກັນ ແທ້ແລ້ວ
ກູກໍ່ຈັກ ປະຫົວເສຍ   ຂີ່ເຮືອພົ້ນຟາຍ
ພາຍເມືອບ້ານ   ຄາເມເນົາຢູ່

ທິວສີບສ້າງ ສິ້ນຊອຍສ່ຳຣານ

+ ເມື່ອນັ້ນ ຊອງກໍຈົ່ງຂານຕອບຂໍ້ ເວົ້າວ່ານຳຈີວ

ຈີວນີ້ ພາໂລຈາ ຂອດວ່າມີຄວາມຮູ້

ສັງຊິມາ ສະຫາວຕ້ານ ອາງໂຕເປັນຄົນເກັ່ງ

ສັງຊິມາ ຂອດອ້າງ ວ່າຕົນຂົ້ນແກ່ວັດສາ ນີ້ເດ

+ ຂັນວ່າ ຈີວນ້ອຍຍງ ມາກ່າວຄຳສູງ ດັ່ງນີ້

ມາບໍ່ອາງ ຕົນລົມ ເຜົ່າພາງຕົວນ້ອຍ

ບັດນີ້ ຈີວຫາກທິ່ງສິ້ນແລ້ວ ສັງມາຂັນຮ່າວວ່າ ໄປນັ້ນ

ມາບໍ່ ຈະມບາບຮ້າຍ ມຸສາເວັ້ນເລື່ອງບໍ່ດີ ນີ້ເດ

+ ເມື່ອນັ້ນ ຈີວເລົ່າເອີ້ນ ຄຳຕອບຂັງຊອງ

ບໍ່ຢາກຟັງຄວາມມຶງ ຊົ່ວຊາມເລວຮ້າຍ

ກູບໍ່ມີບາບ ສັງຊິມາຢ້ານ ການກະທຳແຈ້ງສະຫວ່າງ

ມຶງແມ່ນ ບັກໂຫດຮ້າຍ ກຳຊິ້ຄອງເນື້ອຫລັງ ແທ້ແລ້ວ

+ ຮ້ອຍວ່າ ມຶງຈັກຕາຍມື້ນີ້ ກາຍເກີດເປັນຜີ ກໍ່ຊ່າງຫ້ອນ

ກູຊິພາຍເຮືອໜີ ຈາກມຶງດຽວນີ້

ກູຈະໄປ ຢາມຢີ້ ບິດາພ້ອມແມ່

ກູຊິ ປະປ່ອຍໄວ້ ຊອງໜັ້ນຽວພູ້ດຽວ ຫັ້ນແລ້ວ

+ ຈີວກໍ່ເລົ່າ ເນື້ອຮອດຫ້ອງ ເຮືອນແມ່ອອກຂອງຕົນ

ແລ້ວກໍ່ ວາຈາຂານ ຊູອັ້ນເອົາຕ້ານ

ແລ້ວພັດ ກັບມາເຂົ້າ ໃນເຮືອຄືເກົ່າ

ຈີວກໍ່ເລີຍ ກັບສູ່ຫ້ອງ ກະດີແລ້ວຢູ່ກະເສີນ

ແທ້ແລ້ວ

+ ແຕນັ້ນ ຊຽງໝັ້ນຽງດ້າວ   ຄາຢູ່ແຄມນະທີ ພຸ້ນເຢີ

ກໍ່ທໍ່ ລືມດຽວເນົາ   ຢູ່ໃນແຄມນ້ຳ

ກໍ່ບໍ່ ມີໃຜຕ້ານ   ພໍສອງເປັນເພື່ອນ ກັນແລ້ວ

ຊ້ຳມັດ ອຶດຢາກເຂົ້າ   ເຫງົາຮ້າຍແສບພຸງ ເຈົ້າເອີຍ

+ ແຕ່ຊຽງກໍ່ເລີຍ ຈື່ມຕ້ານ   ອຸ່ມໆຢູ່ຄົນດຽວ

ຍັງບໍ່ລືມ ຄວາມອົມ   ຕໍ່ຈົວເນນນ້ອຍ

ບັດນີ້ ວອນຫາກມານຳແທ້   ທັນເຖິງກັບຊາດ ກູແລ້ວ

ເພື່ອວ່າ ກູຫາກເຮັດບາບເຈົ້າ   ເຖນເຖົ້າແຕ່ຫລັງ ແທ້ດາຍ

+ ບັດນີ້ ຈົວນ້ອຍໆ   ກູມດ່າທັງຕີ ແລນໍ

ເລີຍເລົ້າ ໄປປະເສີຍ   ຢາກໃຫ້ກູຕາຍຊ້ຳ

ຜັດແຕ່ ທະວາດີດ້າວ   ຍິງຊາຍໂຂງເຂດ ເມືອງນີ້

ໃຜກໍ່ ບໍ່ອາດແກ້   ພະຫຍານ້ອຍແຫ່ງກູ ໄດ້ແລ້ວ

+ ແມ່ນວ່າ ສາວສະຫນົມໃຫ່ຍນ້ອຍ ຂອງພະບາດພະຍາເມືອງ
ກໍ່ດີ

ກໍ່ຖືກ ກູນຳຕີ   ແຕກໄປທັງດ້າຍ

ແມ່ນວ່າ ຕົວພະຍາເຈົ້າ   ທົງເມືອງຍົດໃຫ່ຍ ກໍ່ດີແລ້ວ

ກູໃຫ້ ກິນຂີ້ແຮ້ງ   ກໍ່ຍັງໄດ້ດັ່ງໃຈ ນັ້ນເດ

+ ແມ່ນວ່າ ສຳມະນາໂຈດເບື້ອງ ມາຈາກເມືອງຕານີ
ຫນັງສືນັ້ນ

ກໍ່ຖືກ ເຮົາໂຈມຕີຈົນຍອມ   ສ່ວຍສິນເພາະເຮົາແພ້

ບັດນີ້ ຈົວເນນນ້ອຍ   ມີພະຫຍາແກ້ແກ່ນ ຈິງແລ້ວ

ກູວ່າ ມີພະຫຍາແກ່ກ້າ   ພັດຍັງລ້ຳລື້ນກູ ແທ້ນໍ

\+ ຄິດວ່າ ບໍ່ມີໃຜທໍ່ພ້ຽງ ກ້ຳເພິງສະເໜີກູ ແທ້ນາ
ບັດນີ້ ຊ້ຳພັດຍັງມີຈົວ ປາບກູຈົນແພ້ ນີ້ນໍ
ກູກໍ່ມາ ບໍ່ຄິດຄະນຶງດີແທ້ ມາຈາຈົວທັງປາກ ແທ້ນາ
ບັດນີ້ ພະຫຍາກູ ຫາກເສຍທ່ຽງແທ້ ຄວາມຮູ້ກໍ່ຫາກຍັງ ແທ້ແລ້ວ
\+ ຊຽງໝ້ຽງ ເລີຍຈົ່ມໃຫ້ ປ້ອຍດ່າມຳໆ
ທັງວັນຄືນ ບໍ່ເຊົາຢາມນ້ອຍ
ແຕ່ນັ້ນ ຍັງມີນາວາຂຶ້ນ ມາພຽງມັນຢູ່
ຊຽງກໍ່ຈຶ່ງ ຂໍໜ່ຽວໄຫວ້ ຊາວຄ້າລອບເຮືອ
\+ ມັນກໍ່ເລີຍ ເວົ້າອື່ນອ້ອຍ ສຽງອ່ອນອໍລະຊອນ
ເປັນທີ່ ອີດູສົດ ອ່ອນໂຍນຄືຄ້ອຍ
ມັນກໍ່ເລົ່າ ວາຈາຕ້ານ ວອນວານອ້ອມໜ່ຽວ
ຂ້ອຍກໍ່ມາ ນຳຈົວແຕ່ພຸ້ນ ຫລາຍມື້ໜ່ວງນານ ແລ້ວນາ
\+ ເລີຍເລົ່າ ຜິດພາດຕ້ອງ ຖຽງດ່າຕີກັນ
ຈົວກໍ່ເລີຍ ວາງປະ ບໍ່ອີ່ດູຍັງຂ້ອຍ
ຂ້ອຍກໍ່ຫາກ ຈົນໃຈແທ້ ໂຮຍແຮງອຶດຢາກ

ມາກແລ້ວ

ຂໍໃຫ້ເຈົ້າ ອຶດອີ່ດູໂຜດໄວ້ ເອົາຂ້ອຍດ່ວນນຳ ແດ່ທ້ອນ
\+ ຂໍຈຶ່ງ ເອົາຂ້ອຍໄປໃຫ້ມັ້ນ ວັງໃຫຍ່ນະທີຫລວງ ນີ້ທ້ອນ
ຜາຍໂຜດ ເອົາບຸນໄປ ຊ່ວຍຊູຄູນຄ້ຳ
ແຕ່ນັ້ນ ເຂົາກໍ່ຟັງຄຳແກ້ ເລີຍເອົາໄປສົ່ງ
ຈຳໃຫ້ ຂຶ້ນຂີ່ທອງ ເຮືອແລ້ວຮີບພາຍ
\+ ເທິງສິນ ຄວນລ່ວງພົ້ນ ເຖິງຝັ່ງນະທີຫລວງ

ຊຽງຫມ້ຽງ ຫນີຈາກເຮືອລົງໄປ　　ກໍຂອບຄຸນເຂົາເຈົ້າ
ວ່າຄ່ອຍຢູ່ດີເຍີ ຝູງຊາວຄ້າ　　ບຸນຄຸນຄ້ຳຊ່ອຍ ຂ້ອຍເອີຍ
ຂໍໃຫ້ ມີໂຊກໄດ　　ຫລາຍລ້ຳລື່ນປະມານ
ແດ່ທ້ອນ

\+ ຄ້ອນວ່າ ຊຽງສົ່ງແລ້ວ　　ເຮືອຮີບເມືອເຮືອນ
ເຖິງເຄຫັງ　　ນັ່ງນອນກິນເຂົ້າ
ມັນກໍ່ ເປັນໃຈແຫ້　　ບໍ່ປອງຫວນຫາເລື່ອງ
ຊິຕັ້ງໃຈກໍ່ສ້າງ　　ເສີມຕັ້ງຊື່ສຽງ ຫັ້ນແລ້ວ
\+ ເລື່ອງຊຽງຫມ້ຽງ ເວົ້າທໍ່ນີ້　　ກໍເຖິງຂີດບໍລະບອນ ກ່ອນແລ້ວ
ເລື່ອງນີ້ ຍັງມີຫລາຍ　　ຊິຄ່ອຍເອົາມາເວົ້າ
ໃຜຜູ້ ປອງຫາໄດ້　　ຕອນໃດອີກຕື່ມ
ແລ້ວຈຶ່ງ ຂຽນຂີດແຕ້ມ　　ແຖມເຂົ້າຕື່ມກັນ ເຈົ້າເອີຍ

19 / 1 /78

ພິມຄັ້ງທີ່ ໑

ຈຳນວນ ໑໐.໐໐໐ ຫົວ

ພິມແລ້ວ ໓໐/໕/໑໙໗໙

ສະຫງວນລິຂະສິດ

ພິມທີ່ ໂຮງພິມແຫ່ງລັດ